## <u>ຄະນະຜູ້ຈັດທຳ ບົດຮຽນພຣະຄັມພີ ພາສາລາວ</u>

**Copyright © 2008 by BAPTISTWAY PRESS®.**
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ.  ຫ້າມ ຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ.  ຖ້າຢາກຊາບ ລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ:  ເດືອນ ມີນາ, ໒004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, Missions, Evangelism, and Ministry Team: Wayne Shuffield
Director, Bible Study/Discipleship Center: Dennis Parrott

Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Lessons 1, 6, 10
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1, 6, 10
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 3, 12, 13, 14
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 3, 12, 13, 14
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons  2, 7, 8
Bounchanh Vongsurith, Crievewood Baptist Church, Nashville, Tennessee
Editor for Lessons 2, 7, 8
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons  4, 5, 9, 11
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons  4, 5, 9, 11
Phaisane Somsith, Homprakhoon Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ບົດຮຽນທີ 1
# ຈົ່ງຮັບຜິດຊອບໃນຄວາມຮັກຂອງພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢຮັນ 3:1-16

**ພູມຫລັງຂອງພຣະຄັມພີ:** ໂຢຮັນ 3:1- 21

**ຈຸດສຳຄັນຂອງບົດຮຽນນີ້:** ໃນຄວາມຮັກນັ້ນ, ພຣະເຈົ້າໄດ້ປະທານຊີວິດອັນຕລອດໄປເປັນນິດ ຖ້າທ່ານຫາກຮັບຜິດຊອບໃນອົງພຣະເຢຊູ, ພຣະບຸດ, ຜູ້ທີ່ພຣະເຈົ້າໄດ້ສົ່ງລົງມາ ເພື່ອທ່ານຈະໄດ້ຮັບຄວາມພົ້ນ.

**ຄຳຖາມເພື່ອຄົ້ນຄວ້າ:** ພຣະເຈົ້າຕ້ອງການໃຫ້ທ່ານມີຄວາມຮັບຜິດຊອບຢ່າງໃດຕໍ່ສິ່ງທີ່ພຣະອົງໄດ້ກະທຳເພື່ອທ່ານ?

**ຈຸດປະສົງຂອງບົດຮຽນ:** ຕ້ອງຮັບຜິດຊອບຕໍ່ຄວາມຮັກຂອງພຣະເຈົ້າໂດຍການໄວ້ວາງໃຈໃນພຣະເຢຊູ ຫລືວ່າ ຕ້ອງເປັນພະຍານໃນການໄວ້ວາງໃຈນັ້ນ.

## ຄົ້ນຄວ້າ ພ້ອມກັບການປະຕິບັດ

- ພຣະຄັມພີມີອຳນາດໃນການນຳພາຊີວິດ ແລະໃນການປ່າວປະກາດ
- ແບ່ງປັນຂ່າວປະເສີດໃຫ້ແກ່ທຸກໆຄົນ
- ປະຕິບັດຄວາມຮັກ ເພື່ອຄົນອື່ນຈະໄດ້ເຫັນພຣະເຢຊູໃນຄວາມຮັກນັ້ນ

## ຄຳນຳ

ຄົນຊະຣາຄົນນຶ່ງ, ລາວເປັນຄົນທີ່ຮັກແລະນັບຖືຂອງຄົນທົ່ວໄປ, ແລະຄົນທົ່ວໄປກໍຮັກແລະນັບຖືລາວເຫມືອນກັນ. ຢູ່ມາວັນນຶ່ງ, ກໍມີຄົນຫນຸ່ມຄົນນຶ່ງຫາກໍເລີ້ມແຕ່ງງານ ໄດ້ເຂົ້າມາຖາມລາວວ່າ : "ພໍ່ຕູ້, ເຮັດຢ່າງໃດຈຶ່ງຈະມີຄົນຮັກຄົນຊອບຫລາຍ?" ພໍ່ຕູ້ກໍເບິ່ງຫນ້າຄົນຫນຸ່ມ ແລ້ວກໍຕອບສັ້ນໆວ່າ: "ຮັກເຂົາແລ້ວເຂົາກໍຈະຮັກເຮົາດອກ" ຄຳນີ້ ຖ້າເຮົາຈະເບິ່ງໃນພຣະຄັມພີກໍຈະພົບຢູ່ໃນ 1ໂຢຮັນ ບົດທີ 4:7-10 "ພວກທີ່ຮັກເອີຍ, ຈົ່ງໃຫ້ເຮົາທັງຫລາຍຮັກຊຶ່ງກັນແລະກັນ ເພາະວ່າຄວາມຮັກມາຈາກພຣະເຈົ້າ ທຸກຄົນທີ່ຮັກກໍບັງເກີດມາຈາກພຣະເຈົ້າແລະຮູ້ຈັກພຣະເຈົ້າ. ຜູ້ທີ່ບໍ່ຮັກກໍບໍ່ຮູ້ຈັກພຣະເຈົ້າ ເພາະວ່າພຣະເຈົ້າຊົງເປັນຄວາມຮັກ. ດ້ວຍຂໍ້ນີ້ແຫລະ, ຄວາມຮັກຂອງພຣະເຈົ້າສຳລັບເຮົາທັງຫລາຍໄດ້ປາກົດແຈ້ງ ຄືພຣະເຈົ້າໄດ້ຊົງໃຊ້ພຣະບຸດອົງດຽວຂອງພຣະອົງເຂົ້າມາໃນໂລກ ເພື່ອເຮົາທັງຫລາຍຈະໄດ້ມີຊີວິດໃນພຣະບຸດນັ້ນ. ຄວາມຮັກທີ່ເຮົາກ່າວເຖິງນີ້ແຫລະ, ບໍ່ແມ່ນເຮົາທັງຫລາຍໄດ້ຮັກພຣະເຈົ້າ ແຕ່ພຣະເຈົ້າໄດ້ຊົງຮັກພວກ ເຮົາ ແລະຊົງໃຊ້ພຣະບຸດຂອງພຣະອົງມາເພື່ອເປັນທາງຊົງຍົກຜິດບາບຂອງພວກເຮົາ."

ພຣະຄັມພີຕອນນີ້ກໍໄດ້ກ່າວເຖິງຄວາມຮັກຫລາຍຄັ້ງ ເຊັ່ນ: ພວກທີ່ຮັກເອີຍ, ຮັກຊຶ່ງກັນແລະກັນ, ຄວາມຮັກມາຈາກພຣະເຈົ້າ, ພຣະເຈົ້າຊົງເປັນຄວາມຮັກ... ດັ່ງນີ້ເປັນຕົ້ນ. ພຣະເຈົ້າມີພຣະປະສົງຢາກໃຫ້ພວກເຮົາຮັກຊຶ່ງກັນແລະກັນ, ພຣະອົງມີພຣະປະສົງຢາກໃຫ້ພວກເຮົາມີຄວາມຮັບຜິດຊອບຕໍ່ຄວາມຮັກຂອງພຣະອົງ.

## ຄວາມຮັກຂອງພຣະເຈົ້າ

ຄວາມຮັກ ແມ່ນສິ່ງນຶ່ງຊຶ່ງອອກມາຈາກສ່ວນເລິກຂອງຫົວໃຈ. ຫລາຍຄົນມີຄວາມຮັກ ແຕ່ບໍ່ສາມາດສະແດງອອກມາໄດ້. ຫລາຍຄົນປາຖນາຄວາມຮັກແຕ່ກໍບໍ່ໄດ້ຮັບ. ຄວາມຮັກເປັນສິ່ງຈຳເປັນຫລາຍທີ່ສຸດສຳລັບຊີວິດ ເພາະວ່າຄວາມຮັກນີ້ປຽບສເມືອນສາຍນ້ຳທີ່ຫລໍ່ລ້ຽງ ແລະເປັນອາຫານຢູ່ຕລອດການ.

"ພຣະເຈົ້າຊົງເປັນຄວາມຮັກ" ໂຢຮັນໄດ້ບັນທຶກໄວ້ປະກອບດ້ວຍຄຸນລັກສະນະທຸກຢ່າງທີ່ພຣະເຈົ້າມີຢູ່, ແລະກໍປະກອບດ້ວຍຄວາມຈິງທຸກຢ່າງ. ບັນດານັກແຕ່ງແລະນັກຂຽນຕ່າງໆຈະອອກນອກຂອງບົດຄວາມສັ້ນໆນີ້ໄປບໍ່ໄດ້. ເມື່ອໃຜຜູ້ນຶ່ງຫາກຕັດສິນໃຈທີ່ຈະຮັບເອົາຄວາມຮັກຂອງພຣະເຈົ້າແລ້ວ ຄົນນັ້ນຈະຕ້ອງຮຽນທີ່ຈະຮັກຊຶ່ງກັນແລະກັນ. ພຣະວິນຍານບໍຣິສຸດຂອງພຣະເຈົ້າຈະທຳງານພາຍໃນຈິດໃຈຂອງເຂົາ. ສັງຄົມຄຣິສຕຽນຄວນຈະເປັນສັງຄົມທີ່ມີຄວາມຮັກເພື່ອຈະສະແດງໃຫ້ຊາວໂລກໄດ້ເຫັນ.

"ພຣະເຈົ້າຊົງເປັນຄວາມຮັກ" ຈະເວົ້າເຖິງຄວາມສູງ, ຄວາມເລິກ ຫລືຄວາມກວ້າງປານໃດກໍຕາມ ແມ່ນເພື່ອຢາກອະທິບາຍໃຫ້ພວກເຮົາເຂົ້າໃຈໃນພຣະຄຸນ, ໃນຄວາມເມດຕາ, ໃນການໃຫ້ອະພັຍ, ໃນການຊົງໄຖ່, ໃນການຄືນດີ, ໃນຄວາມຍິນດີ, ໃນຄວາມສັນຕິສຸກ ແລະໃນຄວາມຫວັງຕ່າງໆ ວ່າພຣະເຈົ້າຊົງເຕັມລົ້ນແລະພຽບພ້ອມທຸກຢ່າງ.

### 1. ການຮັບຜິດຊອບໃນຄວາມຮັກຂອງພຣະເຈົ້າແມ່ນເປັນໄປໄດ້ສຳລັບທຸກໆຄົນ (ໂຢຮັນ3:1-2)

ທ່ານເຄີຍໄດ້ຍິນຂ່າວປະເສີດບໍ່? ຈະເຄີຍໄດ້ຍິນຫລືບໍ່ເຄີຍໄດ້ຍິນກໍຕາມ. ທ່ານຈະເປັນໃຜມາຈາກໃສກໍແລ້ວແຕ່. ທ່ານຕ້ອງມີປະສົບການໃນຄວາມຮັກຂອງພຣະເຈົ້າຢ່າງແນ່ນອນ. ບໍ່ວ່າທ່ານຈະກະທຳສິ່ງໃດ ພຣະວິນຍານຂອງພຣະເຈົ້າຈະຊ່ວຍທ່ານຢູ່ຂ້າງໃນ ແລະທ່ານກໍຈະມີຄວາມຫິວກະຫາຍຢາກມີຄວາມສັມພັນກັບພຣະອົງໂດຍສ່ວນຕົວ.

ໂຢຮັນບົດທີ 3 ໄດ້ແນະນຳໃຫ້ພວກເຮົາຮູ້ຈັກກັບເຣື່ອງຂອງຄົນໆນຶ່ງ ຊຶ່ງມາຫາພຣະເຢຊູໃນຍາມກາງຄືນ. ມີບາງຕອນອົງພຣະເຢຊູໄດ້ໄປຫາຝູງຊົນ, ມີບາງຕອນຝູງຊົນກໍຢຸດພຣະອົງຕາມຫົນທາງ, ແຕ່ໃນຕອນນີ້ນີໂກເດມໄດ້ມາຫາພຣະເຢຊູ (ໂຢຮັນ 3:2)

ເປັນການດີຫລາຍທີ່ນີໂກເດມໄດ້ເຂົ້າມາຫາພຣະເຢຊູໃນຍາມກາງຄືນເຊັ່ນນີ້. ນີໂກເດມເປັນຜູ້ທີ່ມີຊື່ສຽງໃນເຢຣູຊາເລັມ. ນີໂກເດມເປັນສະມາຊິກສະພາແຊນແຮດຣິນຂອງຊາວຍິວ. ຖ້າລາວຫາກເຂົ້າມາຫາພຣະເຢຊູໃນຍາມກາງເວັນການສົນທະນາກໍຄົງຈະບໍ່ເປັນດັ່ງນີ້. ພວກເຮົາບໍ່ຮູ້ວ່າການສົນທະນາຈະຫນັກໄປທາງໃດ. ພວກເຮົາບໍ່ຮູ້ວ່າເປັນຫຍັງນີໂກເດມຈຶ່ງມາຫາພຣະເຢຊູ. ສິ່ງທີ່ພວກເຮົາຮູ້ກໍຄືວ່າພຣະເຢຊູຊົງເປັນຫ່ວງຊີວິດຂອງນີໂກເດມ.

ເປັນທີ່ຈະແຈ້ງຢູ່ແລ້ວວ່າ ນີໂກເດມຕ້ອງເຄີຍໄດ້ຍິນຜູ້ນຳສາສນາຕ່າງໆສອນມາແລ້ວ ແລະຄຳສັ່ງສອນຂອງພຣະເຢຊູດ້ວຍ, ແຕ່ຄຳສັ່ງສອນຂອງພຣະເຢຊູ ເຮັດໃຫ້ລາວຮູ້ສຶກວ່າເປັນຖ້ອຍຄຳທີ່ມາຈາກພຣະເຈົ້າຢ່າງແທ້ຈິງ ລາວຈຶ່ງກ່າວວ່າ "ພວກຂ້ານ້ອຍຊາບຢູ່ວ່າ ທ່ານເປັນຄຣູທີ່ມາຈາກພຣະເຈົ້າ ເພາະບໍ່ມີຜູ້ໃດອາດເຮັດຫມາຍສຳຄັນທີ່ທ່ານເຮັດຢູ່ນັ້ນເວັ້ນແຕ່ພຣະເຈົ້າຊົງສະຖິດຢູ່ນຳ" (ໂຢຮັນ 3:2)

### 2. ການຮັບຜິດຊອບຕໍ່ຄວາມຮັກຂອງພຣະເຈົ້າແມ່ນຕ້ອງການ ການບັງເກີດໃຫມ່ (ໂຢຮັນ 3:3-8)

ໃນການສົນທະນາລະຫວ່າງນີໂກເດມແລະພຣະເຢຊູ, ລາວໄດ້ຍິນຄຳໃໝ່ໆ ແນວຄິດໃໝ່ໆ ວ່າ "ບັງເກີດໃຫມ່" ທ່ານເຄີຍຈື່ໄດ້ບໍ່ ເມື່ອພວກທ່ານໄດ້ຍິນຄຳວ່າບັງເກີດໃຫມ່ເທື່ອທຳອິດ ທ່ານກໍອາດຈະຄິດເຫມືອນກັນກັບນີໂກເດມນີ້ລະ.

ເປັນຄຳເວົ້າໃຫມ່ສຳລັບຈິດວິນຍານຂອງທ່ານແມ່ນຫລືບໍ່? ສຳລັບຢູ່ໃນປະເທດສະຫະລັດອະເມຣິກາ, ໂດຍສະເພາະໃນຄະນະບັບຕິສແລ້ວ ແມ່ນເປັນຄຳເວົ້າທັມດາ. ຖ້າທ່ານຫາກບໍ່ເຄີຍໄດ້ຍິນຈັກເທື່ອ ກໍເປັນໂອກາດທີ່ດີທີ່ທ່ານຄວນຈະຮຽນຮູ້ໄວ້.

ເມື່ອອະດີດປະທານາທິບໍດີຈິມມີ ຄາເຕີ້ ຖືກຄັດເລືອກໃຫ້ເປັນປະທານາທິບໍດີຂອງປະເທດສະຫະລັດອະເມຣິກາ ໃນປີ 1976, ທ່ານໄດ້ປະກາດຕົນວ່າ ໄດ້ເປັນຄຣິສຕຽນທີ່ບັງເກີດໃຫມ່ແລ້ວ. ບັນດານັກຂ່າວທີ່ຢູ່ໃນທຳນຽບຂາວທັງຫລາຍກໍບໍ່ຄ່ອຍສົນໃຈໃນຄຳເວົ້ານີ້ເລີຍ. ຢ່າງໃດກໍຕາມ ຄຳເວົ້ານີ້ກໍເປັນທີ່ຮູ້ຈັກກັນດີໃນວົງການສາສນາໃນປັດຈຸບັນນີ້.

"ບັງເກີດໃຫມ່" ແມ່ນຄຳເວົ້າທີ່ກ່າວເຖິງຄົນທີ່ຮັບເອົາພຣະເຈົ້າ, ຄົນທີ່ມີປະສົບການກັບພຣະເຈົ້າ, ຄົນທີ່ມີຄວາມຮັບຜິດຊອບຕໍ່ຄວາມຮັກຂອງພຣະເຈົ້າ. ອີກຄວາມນຶ່ງ, ຄົນນັ້ນຕ້ອງເປັນຄົນທີ່ມີພຣະວິນຍານບໍຣິສຸດຂອງພຣະເຈົ້າ, ຄົນນັ້ນເປັນຄົນທີ່ເກີດໃຫມ່ແລ້ວ.

ຖ້າເວົ້າເຖິງດ້ານຮ່າງກາຍແລ້ວ, ນີໂກເດມເວົ້າຖືກ ເພາະວ່າຄົນເຮົາຈະເກີດສອງເທື່ອບໍ່ໄດ້. ແຕ່ການເກີດທີ່ພຣະເຢຊູຊົງກ່າວເຖິງນີ້ ແມ່ນການເກີດມາຈາກເບື້ອງເທິງ, ແມ່ນການເກີດຝ່າຍວິນຍານ. ມີແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດໃຫ້ບັງເກີດໃຫມ່ໄດ້, ຄືຄົນທີ່ເຊື່ອໃນພຣະເຢຊູຄຣິດ.

**3. <u>ການຮັບຜິດຊອບຕໍ່ຄວາມຮັກຂອງພຣະເຈົ້າເປັນທັງການສັບສົນແລະການງ່າຍດາຍ</u>** (ໂຢຮັນ 3:9-16)
ນີໂກເດມບໍ່ເຂົ້າໃຈໃນຄຳເວົ້າຂອງພຣະເຢຊູ, ເພາະຄຳວ່າບັງເກີດໃຫມ່ ເປັນຄຳເວົ້າໃຫມ່ໆສຳລັບລາວ. ຜູ້ທີ່ຈະຕິດຕາມພຣະເຢຊູຜູ້ນັ້ນຈຳເປັນຕ້ອງບັງເກີດໃຫມ່ ບໍ່ວ່າຈະເປັນຍິວຫລືຄົນຕ່າງຊາດກໍຕາມຈະຍົກເວັ້ນບໍ່ໄດ້ເດັດຂາດ. ນີໂກເດມໄດ້ບັນທຶກແລ້ວກໍກັບໄປລາຍງານໃຫ້ແກ່ສະພາແຊນແຮດຣິນ. ແທ້ຈິງ, ພຣະເຢຊູສຳແດງຄວາມຮັກຂອງພຣະເຈົ້າກໍເປັນການງ່າຍທີ່ຈະເຂົ້າໃຈໄດ້ ແຕ່ນີໂກເດມຍັງສັບສົນຢູ່.

ນີໂກເດມເປັນຄະນະຜູ້ນຳຂອງຊາວຍິວ ທີ່ສັງເກດການ ການປະຕິບັດພຣະບັດຍັດ ຊຶ່ງຂຽນຂຶ້ນໂດຍໂມເຊ (ໂທຣາ) ຄະນະຜູ້ນຳພວກນີ້ຖືກຈັດຕັ້ງຂຶ້ນມາເພື່ອນຳພາແລະປັບປຸງໃຫ້ຖືກຕ້ອງ ໃນປີ 70 ຫລັງຈາກພຣະເຢຊູສິ້ນພຣະຊົນແລ້ວ ໃນຂະນະນີ້ພຣະເຢຊູຊົງໄດ້ກ່າວແກ່ນີໂກເດມວ່າ "ທ່ານເປັນອາຈານຂອງພວກອິສຣາເອນ ແລະຍັງບໍ່ເຂົ້າໃຈໃນສິ່ງເຫລົ່ານີ້ຫລື. ເຮົາບອກຄວາມຈິງແກ່ທ່ານວ່າ ພວກເຮົາເວົ້າເຖິງສິ່ງທີ່ເຮົາຮູ້ ແລະເປັນພະຍານເຖິງສິ່ງທີ່ເຮົາໄດ້ເຫັນ ແຕ່ທ່ານບໍ່ຍອມຮັບຄຳພະຍານຂອງເຮົາ. ຖ້າເຮົາບອກທ່ານເຖິງສິ່ງຝ່າຍໂລກແລະທ່ານບໍ່ເຊື່ອ, ຖ້າເຮົາບອກທ່ານເຖິງສິ່ງຝ່າຍສວັນທ່ານຈະເຊື່ອໄດ້ຢ່າງໃດ?" (ໂຢຮັນ 3:10-12)

ຫລາຍສັດຕະວັດຜ່ານມາແລ້ວ, ເຍົາວະຊົນ ຊາວຫນຸ່ມ ຜູ້ອາວຸໂສເຖົ້າແກ່ ແລະເກືອບທຸກອຣິດຄອງປະເພນີໃນທົ່ວໂລກມີຄວາມຮັບຜິດຊອບຕໍ່ຄວາມຮັກຂອງພຣະເຈົ້າ ແລະຕອບສນອງຄວາມຮັກຂອງພຣະເຢຊູຄຣິດເພາະຫຍັງ? ເພາະຄຳສັ່ງສອນຂອງພຣະເຢຊູເຂົ້າໃຈງ່າຍແມ່ນບໍ່? ແມ່ນແລ້ວ ພຣະເຢຊູຊົງຮັກ ຂໍ້ພຣະທັມຄັມພີທີ່ໂຢຮັນໄດ້ບັນທຶກໄວ້ແລະເຫັນໄດ້ງ່າຍໆກໍຄື ໂຢຮັນ 3:16 "ເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕລອດໄປເປັນນິດ."

## <u>ສິ່ງທີ່ຄວນນຳໄປປະຕິບັດ:</u>

ພຣະເຢຊູຊົງສັ່ງສອນວ່າ "ເຮົາໃຫ້ບັນຍັດໃຫມ່ໄວ້ແກ່ເຈົ້າທັງຫລາຍ ຄືໃຫ້ພວກເຈົ້າຮັກກັນແລະກັນ ເຮົາຮັກເຈົ້າທັງຫລາຍມາແລ້ວຢ່າງໃດ ພວກເຈົ້າຈົ່ງຮັກກັນແລະກັນດ້ວຍຢ່າງນັ້ນ. ຖ້າເຈົ້າທັງຫລາຍມີຄວາມຮັກເຊິ່ງກັນແລະກັນ

ດັ່ງນັ້ນແຫລະ, ຄົນທັງປວງກໍຈະໄດ້ຮູ້ວ່າເຈົ້າທັງຫລາຍເປັນສາວົກຂອງເຮົາ." (ໂຢຮັນ 13:34-35) ຄວາມຮັກຂອງພຣະເຈົ້າຄວນຈະປາກົດແຈ້ງໃນຊີວິດຂອງພວກເຮົາ. ພວກເຮົາເກີດມາຈາກເບື້ອງເທິງ ຊີວິດຂອງພວກເຮົາຈໍາຕ້ອງມີຄວາມຮັກຂອງພຣະເຈົ້າເພື່ອຄົນອື່ນໆດ້ວຍ. ພວກເຮົາຄວນມີຄວາມຮັບຜິດຊອບໃນຄວາມຮັກຂອງພຣະເຈົ້າດ້ວຍການເກີດຈາກເບື້ອງເທິງ. ພວກເຮົາຄວນມີຄວາມຮັບຜິດຊອບໃນຄວາມຮັກຂອງພຣະເຈົ້າຕໍ່ຕົວເຮົາເອງ ແລະຕໍ່ຜູ້ອື່ນດ້ວຍ.

## ຄໍາຖາມ

1. ທ່ານເຄີຍມີຄວາມຮັບຜິດຊອບຕໍ່ຄວາມຮັກຂອງພຣະເຈົ້າແລ້ວບໍ່, ໄດ້ບັງເກີດໃຫມ່ແລ້ວບໍ່? ຫລືວ່າໄດ້ເກີດຈາກເບື້ອງເທິງແລ້ວຫລືຍັງ? ທ່ານຈະອະທິບາຍໃຫ້ຄົນອື່ນຟັງຢ່າງໃດ? ຖ້າມີຄົນຖາມ.

2. ສິ່ງໃດທີ່ທ່ານເຫັນວ່າເປັນການເຂົ້າໃຈຍາກກ່ຽວກັບການເກີດໃຫມ່ຝ່າຍຈິດວິນຍານ?

3. ພຣະເຢຊູຊົງກ່າວວ່າ, "ເຮົາບອກທ່ານຕາມຄວາມຈິງວ່າ ບໍ່ມີຜູ້ໃດຈະເຫັນຣາຊອານາຈັກໄດ້ນອກຈາກຜູ້ນັ້ນຈະບັງເກີດຈາກເບື້ອງເທິງເສັຍກ່ອນ" (ໂຢຮັນ 3:3) ໃນຂໍ້ຄວາມຕອນນີ້ທ່ານມີຄວາມຮູ້ສຶກຢ່າງໃດ? ທ່ານຈະສາມາດແບ່ງປັນໃຫ້ຄົນອື່ນໄດ້ບໍ່? ເມື່ອທ່ານເປັນພຍານໃຫ້ກັບເຂົາ ເຂົາຈະສົນໃຈຟັງຄໍາພຍານຂອງທ່ານບໍ່?

4. ຈະຈໍາເປັນຢູ່ບໍ່ຄົນທີ່ບັງເກີດໃຫມ່ຝ່າຍຈິດວິນຍານແລ້ວ ຕ້ອງສະແດງອອກໃນຊີວິດຂອງເຂົາ? ຖ້າບໍ່ສະແດງອອກ, ເປັນຍ້ອນຫຍັງ? ທ່ານຄວນຈະສະແດງຫຍັງອອກມາ?

5. ຖ້າໃຜຜູ້ນຶ່ງຫາກ ມີຄວາມຮັບຜິດຊອບໃນຄວາມຮັກຂອງພຣະເຈົ້າຢ່າງຈິງຈັງ ຊີວິດຂອງເຂົາຈະປ່ຽນແປງຢ່າງໃດ?

*ດຣ. ບຸນໂຮມ ພົມມະຈັນ*

# ບົດຮຽນທີ 2
# ໃຫ້ເຕົ້າໂຮມກັບບັນດາຜູ້ທີ່ເຊື່ອ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ 9:1-30; ໂຣມ 12:4-5; ເຮັບເຣີ 10:24-25

**ພູມຫລັງຂອງພຣະຄັມພີ:** ກິຈການ 9:1-30; ໂຣມ 12:4-8; ເຮັບເຣີ 24-25

**ຈຸດສຳຄັນຂອງບົດຮຽນນີ້:** ໃຫ້ຄວາມໝູນໃຈ ແລະຮັບຄວາມໝູນໃຈຕໍ່ຜູ້ທີ່ເຊື່ອຄືກັນໂດຍ ການເຂົ້າຮ່ວມສາມັກຄີທັມໃນຄຣິສຕະຈັກນັ້ນຕ້ອງມີຂຶ້ນໃນຊີວິດ ຂອງຄຣິສະຕຽນ.

**ຄຳຖາມເພື່ອການຄົ້ນຄວ້າ:** ຄຣິສຕະຈັກເປັນບ່ອນສຳຄັນແນວໃດໃນຊີວິດຂອງຄຣິສະຕຽນ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະສຳຣວດກວດເບິ່ງເຖິງຄວາມສຳຄັນໃນການເຂົ້າຮ່ວມ ສາມັກຄີທັມກັບຜູ້ທີ່ເຊື່ອຄົນອື່ນໆເພື່ອສ້າງຄວາມສັມພັນ

## ບົດນຳ

ຫລັງຈາກທ່ານໄດ້ຕອບສນອງຕໍ່ຄວາມຮັກຂອງພຣະເຈົ້າແລ້ວ, ທ່ານພົບເຫັນວ່າຄຣິສຕະຈັກຂອງອົງພຣະຄຣິດນັ້ນເປັນບ່ອນສຳຄັນທີ່ຈະສ້າງສາຍສັມພັນກັນໃຫ້ທ່ານຈະເຣີນໃຫຍ່ຂຶ້ນຈົນກາຍເປັນຜູ້ຕິດຕາມອົງພຣະຄຣິດໄປ.

ນາງສາວ ຈານີສ ໄດ້ໂທຫາເພື່ອນບ້ານຜູ້ຢູ່ດ້ວຍກັນເປັນເວລານານ. ຫລັງຈາກໄດ້ສົນທະນາກັນຄາວນຶ່ງ ນາງໄດ້ກ່າວວ່າ, "ຈິງແທ້ຊີວິດຂອງຂ້ອຍໄດ້ປ່ຽນແປງໄປ. ຂ້າພະເຈົ້າໄດ້ຕອບຄຳເອີ້ນຈາກພຣະເຈົ້າໃນອາທິດແລ້ວນີ້ ເວລາໄປຢ້ຽມຢາມນ້ອງສາວ. ຂ້າພະເຈົ້າຢາກບອກເຖິງຊີວິດທີ່ແຕກຕ່າງກັບຄົນອື່ນຜູ້ສາມາດເຂົ້າໃຈໄດ້."

ຜູ້ເປັນເພື່ອນບ້ານໄດ້ເວົ້າສຽງດັງໃນໂທຣະສັບນັ້ນວ່າ, "ໂອ ຈານີສເອີຍ, ເປັນຂ່າວດີຫລາຍ! ເຈົ້າຮູ້ບໍ່ວ່າ ຂ້ອຍໄດ້ອ້ອນວອນເພື່ອເຈົ້າໃຫ້ມີຄວາມສັມພັນກັບພຣະຄຣິດ? ເຈົ້າຮູ້ບໍ່ວ່າຕັ້ງແຕ່ເຈົ້າໄດ້ຍ້າຍມາຢູ່ບ້ານໃກ້ຄຽງຂ້ອຍສິບສອງປີຜ່ານມາ ຂ້ອຍໄດ້ອ້ອນວອນເພື່ອເຈົ້າເປັນປະຈຳ?

ນາງສາວ ຈານີສ ໄດ້ກ່າວວ່າ, "ຂ້ອຍຕ້ອງການໃຫ້ເຈົ້າຊ່ອຍຂ້ອຍໃຫ້ຮູ້ຈັກວິທີຕິດຕາມອົງພຣະເຢຊູ. ພໍ່ແມ່ຂ້ອຍໄດ້ພາຂ້ອຍໄປຄຣິສຕະຈັກແຕ່ນ້ອຍໆຈົນເຖິງເວລາຂ້ອຍອາຍຸໄດ້ 12 ປີ ເພາະພໍ່ແມ່ຂ້ອຍໄດ້ປະຮ້າງກັນໃນຕອນນັ້ນ. ເຈົ້າເປັນຄຣິສະຕຽນຄົນດຽວທີ່ຂ້ອຍຮູ້ໃນເຂດນີ້. ເຈົ້າຊ່ອຍຂ້ອຍໃຫ້ຮຽນຮູ້ເຖິງການຈະເຣີນໃຫຍ່ຂຶ້ນໃນດ້ານຄວາມເຊື່ອໄດ້ບໍ່?"

ຜູ້ເປັນເພື່ອນບ້ານມີຄວາມຍິນດີ ແລະຕອບສນອງຕໍ່ຄຳຂໍຮ້ອງດ້ວຍຄວາມເຕັມໃຈໂດຍກ່າວວ່າ, "ນີ້ເປັນໂອກາດພິເສດແລະເປັນພຣະພອນທີ່ເຈົ້າໃຫ້ຂ້ອຍຊ່ອຍເຈົ້າໃນເຣື່ອງນີ້. ຂ້ອຍຮູ້ຈັກວິທີດີວ່າຈະເລີ້ມຕົ້ນຢ່າງໃດ. ອາທິດຈະມາເຖິງນີ້ໃຫ້ເຈົ້າໄປສຶກສາແລະນະມັສການຮ່ວມກັບຂ້ອຍ. ແຕ່ກ່ອນຈະໄປເຖິງວັນອາທິດ ໃຫ້ຂ້ອຍມາຫາເຈົ້າທີ່ບ້ານເພື່ອພວກເຮົາຈະຮ່ວມກັນສຶກສາບົດຮຽນພຣະຄັມພີນຳກັນ. ຂ້ອຍອົດບໍ່ໄດ້ທີ່ຈະແນະນຳໃຫ້ເຈົ້າຮູ້ຈັກກັບເພື່ອນຂອງຂ້ອຍທີ່ຄຣິສຕະຈັກ."

ທ່ານອາດຈະເປັນຄົນມີເພື່ອນໃກ້ຊິດຫລາຍຄົນ ຜູ້ທີ່ເຂົາເຊື່ອແລະໄວ້ວາງໃຈ ຫລືທ່ານອາດຈະບໍ່ມີຜູ້ໃດສົນໃຈໃນຊີວິດເລີຍ. ເຖິງແມ່ນວ່າທ່ານມີເພື່ອນແລະບໍ່ມີ ແຕ່ໃນເມື່ອທ່ານໄດ້ພົບກັບຄວາມຮັກຂອງພຣະເຈົ້າແລ້ວ ທ່ານຈະໄດ້ພົບກັບຄົນອື່ນໆຜູ້ທີ່ເອົາໃຈໃສ່ກັບຊີວິດຂອງທ່ານໃນຄຣິສຕະຈັກ.

### 1. ບໍ່ມີຄຣິສະຕຽນຄົນໃດຢູ່ຄົນດຽວໄດ້ (ກິຈການ 9:10-19)

ທ່ານ ອານາເນັຽ ໄດ້ຕິດຕາມອົງພຣະເຢຊູຜູ້ອາສັຍຢູ່ໃນເມືອງດາມາເຊ. ລາວອາດໄດ້ເຊື່ອໃນອົງພຣະເຢຊູວ່າ

ເປັນອົງພຣະເມຊີອາ ໂດຍການໄດ້ຍິນຄຣິສະຕຽນຈາກກຸງເຢຣູຊາເລັມເທສນາ. ລາວອາດໄດ້ຍິນເຣື່ອງຄົນຍິວມີຊື່ວ່າ ໂຊໂລ (ໂປໂລ) ຈາກເມືອງ ຕາໂຊ ຜູ້ທີ່ຂົ່ມເຫັງພວກຄຣິສະຕຽນໃນກຸງເຢຣູຊາເລັມ ແລະກຳລັງເດີນທາງໄປເມືອງດາມາເຊເພື່ອຈະໄດ້ທຳລາຍຄຣິສະຕຽນໃນທີ່ນັ້ນເໝືອນກັນ. ອົງພຣະຜູ້ເປັນເຈົ້າຕັດສັ່ງກັບອານາເນັຽວ່າ ພຣະອົງໄດ້ຊົງເລືອກເອົາໂຊໂລໃຫ້ເປັນພາຊະນະປະກາດເຣື່ອງຂ່າວປະເສີດຕໍ່ຄົນຕ່າງຊາດແລະກະສັດຕ່າງໆ. ພຣະເຈົ້າໄດ້ສັ່ງໃຫ້ອານາເນັຽຊອກຫາຄົນນີ້ງເປັນຄົນຕາບອດແລະປົວລາວໃຫ້ດີ. ທ່ານລອງວາດພາບເບິ່ງດູວ່າ ອານາເນັຽບໍ່ຢາກໄປ ແຕ່ໃນເມື່ອພຣະເຈົ້າຊົງສັ່ງລາວໆກໍຍອມເຊື່ອຟັງ.

ເທົ່າທີ່ທ່ານໄດ້ຕິດຕາມອົງພຣະເຢຊູ ທ່ານຈະໄດ້ພົບເຫັນວ່າການເຊື່ອຟັງເຮັດໃຫ້ທ່ານປະຕິບັດຕໍ່ຄົນອື່ນຕາມປົກກະຕິແລ້ວທ່ານບໍ່ໄດ້ຄິດເລີຍ. ອານາເນັຽໄດ້ຮັບໃຊ້ຄົນນີ້ງໂດຍທີ່ໄດ້ຍິນເຣື່ອງໃນຂ່າວ ແຕ່ທ່ານຈຳສຽງຂອງອົງພຣະຜູ້ເປັນເຈົ້າໄດ້ ແລະທ່ານກໍເຊື່ອຟັງ.

ໂປໂລໄດ້ບັງເກີດໃໝ່ຈາກເບື້ອງເທິງ ໃນຂນະທີ່ທ່ານກຳລັງເດີນທາງໄປເມືອງ ດາມາເຊ. ລາວເຂົ້າໃຈວ່າອົງພຣະຜູ້ເປັນເຈົ້າໄດ້ສະເດັດເຂົ້າມາໃນຊີວິດຂອງລາວໃນວິທີທາງໃໝ່. ໂປໂລຜູ້ເດີນທາງໄປຂົ່ມເຫງຜູ້ຕິດຕາມພຣະເຢຊູໄດ້ກາຍເປັນຄຣິສະຕຽນ. ໃນເມື່ອລາວກາຍເປັນຄົນຕາບອດໝູ່ຂອງລາວກໍໄດ້ຈູງລາວເຂົ້າໄປໃນເມືອງດາມາເຊ. ໃນທີ່ສຸດລາວກໍໄດ້ຮັບບັບຕິສະມາເປັນສາວົກຄົນໃໝ່. ສິ່ງເຫລົ່ານີ້ບໍ່ໄດ້ເກີດມາຈາກການໄຮ້ຄວາມໝາຍ. ໂປໂລໄດ້ມີປະສົບປະການໃນດ້ານຈິນວິນຍານກໍເພາະມີຄວາມສັມພັນກັບຄົນອື່ນໆທີ່ມີຄວາມເຊື່ອ.

ຫລັງຈາກທ່ານໄດ້ປະສົບປະການກັບການບັງເກີດໃໝ່, ທ່ານກໍມີຄວາມຕ້ອງປະສົງຢາກພົບກັບຄົນອື່ນຜູ້ທີ່ມີຄວາມເຊື່ອເໝືອນກັນ. ຄວາມຈິງທ່ານຈຳເປັນຕ້ອງຊອກຫາກຸ່ມຂອງຜູ້ທີ່ເຊື່ອເພື່ອຈະສ້າງຄວາມສັມພັນໃນເມື່ອທ່ານໄດ້ຮັບການບັງເກີດໃໝ່ແລ້ວ ເພື່ອຈະຊ່ອຍກັນຮັກສາຄວາມເຊື່ອໃຫ້ດີ ແລະຈະເຣີນຂື້ນ.

ໃນຂໍ້ນີ້ ໃນຄຣິສຕະຈັກຂອງພຣະຄຣິດມີຄົນທີ່ເຊື່ອຫລາຍຄົນເປັນຄົນແຕກຕ່າງກັນ. ພວກເຂົາຕ້ອງຮຽນຮູ້ບໍ່ໃຫ້ມີຄວາມຢ້ານແລະລັງກຽດກັນ. ສິ່ງນີ້ກໍໄດ້ເກີດຂື້ນກັບອານາເນັຽ. ລາວຈຳເປັນຕ້ອງເອົາຊະນະຄວາມຢ້ານເພາະເຣື່ອງທີ່ໄດ້ຍິນໃນຂ່າວວ່າ ໂປໂລເປັນຄົນໂຫດຮ້າຍ ແລະໃນທີ່ສຸດອານາເນັຽກໍໄດ້ປະຕິບັດດີຕໍ່ໂປໂລ.

ໃນເມື່ອພວກເຮົາໄດ້ພົບກັບຄົນຕ່າງໆຜູ້ມີຄວາມເຊື່ອ ພວກເຮົາຕ້ອງຮຽນຮູ້ບໍ່ໃຫ້ມີຄວາມຢ້ານແລະລັງກຽດກັນ. ພວກເຮົາເຫັນວ່າເຮົາມີສາຍຕາໃໝ່ຊຶ່ງເປັນຜົນດີໃຫ້ເຮົາປະຕິບັດຮັບໃຊ້ຄົນອື່ນໄດ້. ການເປັນຄົນຕາບອດນັ້ນໄດ້ຜ່ານພົ້ນໄປແລ້ວ ແລະນ້ຳແຫ່ງການບັບຕິສະມາເຮັດໃຫ້ເຮົາມີຊີວິດໃໝ່ແລະເຮັດໃຫ້ຄົນອື່ນເຫັນຄວາມເຊື່ອແລະພວກເຂົາກໍເຊື່ອວ່າພວກເຂົາຈະມີຄວາມເຊື່ອດີ.

ໂຊໂລຈາກເມືອງ ຕາໂຊ ໄດ້ກາຍເປັນອັກຄະສາວົກ. ເພິ່ນໄດ້ເປັນຜູ້ປະກາດຄົນສຳຄັນຕໍ່ຄົນຕ່າງຊາດ. ເພິ່ນໄດ້ເທສນາຂ່າວດີເຣື່ອງຄວາມຮັກຂອງພຣະເຈົ້າໄດ້ເຜີຍໃຫ້ຮູ້ໃນທາງພຣະຄຣິດຕໍ່ສັງຄົມ, ຕໍ່ປັນຍາຊົນ, ຕໍ່ນັກການເມືອງ, ແລະນັກທຸຣະກິດໃນກຸ່ມຈັກກະພັດໂຣມ. ກ່ອນເພິ່ນຈະໄດ້ເລີ້ມປະຕິດບັດຮັບໃຊ້ເພິ່ນໄດ້ "ໃຊ້ເວລາຫລາຍວັນ" ຮ່ອມກັບຄຣິສະຕຽນຄົນອື່ນໆໃນເມືອງດາມາເຊ (ກິຈການ 9:19). ແນ່ນອນ ໂປໂລມີຫ້ອງພິເສດໃນໃຈສຳລັບພວກສາວົກຄົນທຳອິດ ເພາະພວກເຂົາໄດ້ຕ້ອນຮັບເອົາເພິ່ນເຂົ້າສູ່ວົງການ. ບໍ່ມີຜູ້ໃດຢູ່ໂດດດ່ຽວໄດ້ ພວກເຮົາຕ້ອງການກັນແລະກັນ.

ປະວັດແລະໜ້າທີ່ຂອງໂປໂລແລະອານາເນັຽໄດ້ແຕກຕ່າງກັນໃນຊີວິດຂອງຄຣິສຕະຈັກ. ອານາເນັຽບໍ່ໄດ້ເປັນຄົນມີຊື່ສຽງ ແຕ່ເພິ່ນມີຄວາມສັດຊື່ໃນການເປັນຜູ້ຮັບໃຊ້ອົງພຣະຜູ້ເປັນເຈົ້າ ແລະເປັນຄົນສຳຄັນໃນຊີວິດຂອງໂປໂລ. ເຖິງແມ່ນວ່າພວກເຂົາທັງສອງໄດ້ມີຄວາມແຕ່ຕ່າງກັນກໍຕາມ ແຕ່ໃນທີ່ສຸດກໍໄດ້ຕິດຕໍ່ກັນ ເພາະຕ່າງຄົນກໍມີຄວາມສຳຄັນຕໍ່ການຮັບໃຊ້.

## ໒. ຮ່າງກາຍຂອງພຣະຄຣິດ: ຢູ່ຮ່ວມກັນຖ້າມກາງຄວາມແຕກຕ່າງ (ໂຣມ 12:4-5)

ຮ່າງກາຍຂອງມະນຸດເຮົາມີຫລາຍພາກສ່ວນແລະມີໜ້າທີ່ແຕກຕ່າງກັນ. ເຊັ່ນດຽວກັນ ໃນຮ່າງກາຍຂອງພຣະຄຣິດກໍເປັນເຊັ່ນນັ້ນເໝືອນກັນ ເປັນຮ່າງກາຍດຽວ ແຕ່ມີຫລາຍພາກສ່ວນທີ່ແຕກຕ່າງກັນ. ໃນຮ່າງກາຍຂອງມະນຸດ

ເຮົາຈະບໍ່ມີກຳລັງຖ້າບໍ່ພ້ອມກັນເຮັດໜ້າທີ່, ຮ່າງກາຍຂອງອົງພຣະຄຣິດກໍບໍ່ມີພະລັງຖ້າບໍ່ພ້ອມກັນເຮັດໜ້າທີ່ຢູ່ໃນຖ້າມກາງຄວາມແຕກຕ່າງກັນ.

ອາຈານໂປໂລ ໄດ້ຂຽນຈົດໝາຍເຖິງຜູ້ທີ່ເຊື່ອໃນກຸງໂຣມ ໃຫ້ພວກເຂົາເອົາໃຈໃສ່ໃນການເປັນອັນນຶ່ງກັນດຽວກັນໂດຍການເປັນພາກສ່ວນຂອງກັນແລະກັນ. ໃນຈົດໝາຍທີ່ເພິ່ນໄດ້ຂຽນໄປເຖິງຄຣິສະຕຽນໃນກຸງໂຣມ, ເມືອງໂກຣິນໂທ, ເມືອງເອເຟໂຊ, ເມືອງໂກໂລຊາຍ, ອາຈານໂປໂລໄດ້ໃຊ້ຄຳເວົ້າວ່າ<u>ຮ່າງກາຍ</u> ຫລາຍກວ່າ 30 ເທື່ອ ເພື່ອຈະຍົກເອົາມາປະກອບເປັນຕົວຢ່າງໃນການເປັນອັນນຶ່ງອັນດຽວກັນໃນຮ່າງກາຍຂອງອົງພຣະຄຣິດ ແລະບອກເຖິງໜ້າທີ່ຂອງແຕ່ລະພາກສ່ວນ. ໂປໂລໄດ້ປະສົບກັບການເປັນອັນນຶ່ງອັນດຽວກັນໃນເວລາເລີ້ມຕົ້ນເກີດໃໝ່ໃນພຣະຄຣິດ ໂດຍທີ່ອານາເນັຽໄດ້ຮັບເອົາເພິ່ນເປັນຄົນຮ່ວມງານຮັບໃຊ້.

ໃນກຸ່ມຜູ້ທີ່ເຊື່ອຢູ່ຮ່ວມກັນນັ້ນກໍເປັນການສະແດງເຖິງການເປັນອັນນຶ່ງອັນດຽວກັນໃນອົງພຣະຄຣິດ. ທຸກໆຄົນໃນຄຣິສຕະຈັກກໍເປັນເພື່ອນມະນຸດທີ່ຕ້ອງການກັນແລະກັນ. ແຕ່ຕ້ອງໃຫ້ເຂົ້າໃຈວ່າຮ່າງກາຍຂອງພຣະຄຣິດກໍອາດປະສົບກັບຄວາມເຈັບປວດ, ຄວາມຂັດແຍ້ງ, ແລະມີຄວາມຜິດຫວັງເກີດຂື້ນໄດ້. ບາງຄົນມັກຕິດຕາມຄຳສອນຂອງໂລກຫລາຍກວ່າຄຳສອນຂອງພຣະຄຣິດ. ບາງຄົນຮູ້ແຕ່ການແຂ່ງດີກັນ ແທນທີ່ຈະໃຫ້ໂອກາດເພື່ອການຈະເຣີນໃຫຍ່ຂື້ນ. ບາງຄົນບໍ່ສົນໃຈໃນການເບິ່ງແຍງຄົນອື່ນເພາະເຂົາຕ້ອງການໃຫ້ຄົນອື່ນສົນໃຈເຂົາ. ບາງຄົນຢາກມີສິດເປັນເອກກະຣາດບໍ່ຍອມເພິ່ງພາຄົນໃດ. ບາງຄົນກໍບໍ່ສາມາດຢູ່ກັບຄົນອື່ນທີ່ແຕກຕ່າງກັບຕົນເອງໄດ້.

ອາຈານ ໂປໂລໄດ້ໃຊ້ຮ່າງກາຍຂອງມະນຸດເປັນສິ່ງເຕືອນສະມາຊິກໃນຄຣິສຕະຈັກຂອງພຣະຄຣິດໃນທຸກໆສມັຍວ່າພວກເຮົາຕ້ອງການກັນແລະກັນ. ຕາບໍ່ສາມາດເວົ້າກັບຂາວ່າ, <u>ຂ້ອຍບໍ່ຕ້ອງການເຈົ້າ.</u> ຫລືວ່າຜູ້ເປັນພໍ່ແມ່ຂອງເດັກນ້ອຍເວົ້າກັບຜູ້ໃຫຍ່ວ່າ <u>ຂ້ອຍບໍ່ຕ້ອງການເຈົ້າໃນຮ່າງກາຍນີ້.</u> ຮູ້ບໍ່ວ່າກຳລັງແລະສະຕິປັນຍາຈາກຫລາຍໆອາຍຸວັຍເປັນສິ່ງຕ້ອງການ ເພາະທຸກໆຄົນເປັນພາກສ່ວນຂອງກັນແລະກັນ.

ທ່ານຕ້ອງເປັນພາກສ່ວນແລະເຂົ້າຮ່ວມກັບຄຣິສຕະຈັກທ້ອງຖິ່ນ ຜູ້ມີຄວາມເຊື່ອຄືກັນ, ເຖິງຢ່າງໃດກໍຕາມ ເພາະທ່ານໄດ້<u>ບັງເກີດໃໝ່ແລ້ວ, ເກີດຈາກເບື້ອງເທິງ.</u> ຮ່າງກາຍຂອງພຣະຄຣິດເປັນບ່ອນທຸກໆຄົນທີ່ເຊື່ອຄວນເຂົ້າຮ່ວມກັນ.

## 3. <u>ໃນພຣະຄຣິດໄດ້ແຍກອອກໄປແລະມາໂຮມກັນ</u> (ເຮັບເຣີ 10: 24-25)

ການກາຍເປັນພາກສ່ວນໃນຮ່າງກາຍຂອງພຣະຄຣິດຄວນເປັນການໜູນໃຈໃຫ້ທ່ານກາຍເປັນຜູ້ມີຄວາມເຊື່ອທີ່ຈະເຣີນໃຫຍ່ຂື້ນໃນການເປັນຜູ້ຕິດຕາມອົງພຣະຄຣິດເຈົ້າ. ໃນຂນະທີ່ທ່ານເຂົ້າຮ່ວມກັບຄຣິສະຕຽນຄົນອື່ນ ທ່ານຄວນມີຄຳຖາມດັ່ງຕໍ່ໄປນີ້: <u>ຂ້າພະເຈົ້າກຳລັງສແວງຫາຄວາມສັມພັນອັນເລິກເຊິ່ງກັບອົງພຣະເຢຊູຄຣິດຫລືບໍ່? ຂ້າພະເຈົ້າກາຍເປັນຜູ້ອາວຸໂສໃນການເປັນພຍານເຣື່ອງອົງພຣະຄຣິດຕໍ່ໂລກນີ້ຫລືບໍ່? ຖ້າວ່າທຸກໆຄົນໃນຄຣິສຕະຈັກເປັນສາວົກເໝືອນຂ້າພະເຈົ້າ, ຄຣິສຕະຈັກນີ້ຈະມີພລັງຂື້ນ ຫລືອ່ອນແອລົງ?</u> ບໍ່ທ້ອນມີສະມາຊິກໃນຄຣິສຕະຈັກທ້ອງຖິ່ນຢາກເຮັດໜ້າທີ່ຂອງຕົນເຄິ່ງໆ ກາງໆ, ບໍ່ຮ້ອນບໍ່ເຢັນ, ແຕ່ເຫັນວ່າຄຣິສະຈັກສ່ວນຫລາຍມີສະມາຊິກຢ່າງນັ້ນສັງກັດຢູ່ໃນທຸກມື້ນີ້.

ຈົດໝາຍຂອງອາຈານໂປໂລໄດ້ເວົ້າເຖິງຫລາຍເຣື່ອງທີ່ມີຄວາມສຳຄັນຕໍ່ສັດຕະວັດທີນຶ່ງ ແລະຕໍ່ສມັຍປັດຈຸບັນນີ້ຄືກັນ. ເຣື່ອງນຶ່ງກໍຄືຢາກໃຫ້ສະມາຊິກເຂົ້າປະກອບສ່ວນໃນຊີວິດຂອງກັນແລະກັນ. ໃນເຮັບເຣີ 10:24-25, ໃນການທີ່ສະມາຊິກຈະເຂົ້າປະກອບສ່ວນໃນຊີວິດຂອງຄົນອື່ນໄດ້ຍົກຂື້ນມາເວົ້າໃນສອງທາງ:

**ນຶ່ງ**, ຄຣິສະຕຽນຄວນຈະຫນູນໃຈກັນແລະກັນໃຫ້ເວົ້າເຖິງຄວາມຮັກຂອງພຣະເຈົ້າໂດຍການກະທຳແຕ່ຄວາມດີ. ຄຣິສຕະຈັກຂອງພຣະເຈົ້າບໍ່ແມ່ນເກີດຂື້ນມາເພື່ອຊ່ອຍເຫລືອຄົນອື່ນລ້າໆ ພຽງເທົ່ານັ້ນ. ຈຸດປະສົງຂອງຄຣິສຕະຈັກນັ້ນແມ່ນການແບ່ງປັນຄວາມຮັກຂອງພຣະເຈົ້າໃຫ້ແກ່ຄົນອື່ນຜູ້ທີ່ຢູ່ໃນຄຸ້ມ, ບ້ານໃກ້ເຮືອນຄຽງຫຼືຜູ້ຍັງບໍ່ໄດ້ເປັນຄຣິສະຕຽນເທື່ອ.

ການທີ່ຕິດຕໍ່ກັບສະມາຊິກໃນຄຣິສຕະຈັກຂອງພຣະຄຣິດນັ້ນງ່າຍຂື້ນຫລາຍໂດຍທາງເຄື່ອງໃຊ້ທັນສມັຍຈົນເກືອບ

ເວົ້າໄດ້ວ່າບໍ່ມີບ່ອນໃດໄກເກີນຄວາມສາມາດ. ທ່ານຄວນແນະນຳ ໜູນໃຈໃຫ້ສະມາຊິກຖວາຍຕົວຕໍ່ພຣະເຈົ້າ. ທ່ານຄວນອ້ອນວອນເພື່ອຜູ້ຫລົງຜິດ, ມີບັນຫາທາງດ້ານທັມມະຈັຣິຍາ, ມີບັນຫາໃນດ້ານການເງິນ, ທາງດ້ານສັງຄົມ ແລະອື່ນໆ. ທ່ານຄວນແລກປ່ຽນຄວາມຄິດຄວາມເຫັນກັບຄົນອື່ນໆເພື່ອຈະໄດ້ຊ່ອຍກັນແກ້ໄຂ ໃຫ້ມີໄຊຍະຊະນະ.

**ສອງ,** ຄຣິສະຕຽນຕ້ອງການປະຊຸມກັນເປັນປະຈຳ. ຄຳເວົ້າວ່າ ເຄື່ອງໃຊ້ທັນສມັຍນັ້ນໄດ້ເປັນສິ່ງດີຕໍ່ຄຣິສຕະຈັກໃນທຸກມື້ນີ້. ຄົນເຮົາຕ້ອງການໄດ້ຮັບຂ່າວຈາກກັນແລະກັນ ຈະເປັນຈົດໝາຍ, ໂທຣະສັບເປັນສຽງ ຫລືເປັນຕົວໜັງສືສິ່ງເຫລົ່ານີ້ຈະເປັນສິ່ງໜູນໃຈກັນແລະກັນໃນການຮັບໃຊ້. ສິ່ງນີ້ຄວນເອົາປະກອບໃຊ້ໃນຄຣິສຕະຈັກຊຶ່ງເປັນພຣະກາຍຂອງພຣະຄຣິດ.

ຄຣິສຕະຈັກຂອງພຣະຄຣິດໄດ້ແຍກກັນຢູ່ທົ່ວທຸກບ່ອນໃນໂລກນີ້. ທ່ານຢູ່ໃນຄຣິສຕະຈັກດຽວກັນກໍບໍ່ອາດພົບເຫັນກັນເລື້ອຍໆ ພຽງແຕ່ເຫັນກັນໃນວັນອາທິດ. ທ່ານແລະສະມາຊິກຄົນອື່ນໃນຄຣິສຕະຈັກຢູ່ຫ່າງກັນ ທ່ານສາມາດເປັນຜູ້ທີ່ເຮັດໃຫ້ຄຣິສຕະຈັກໄດ້ຮັບຜົນດີຫລືເສັຽຫາຍໄດ້ ບໍ່ວ່າຈະຢູ່ໃນກຸ່ມ ແລະຄຸ້ມທີ່ທ່ານອາສັຍຢູ່.

## ຄວາມໝາຍ ແລະການເອົາປະກອບໃຊ້

ທ່ານໄດ້ເກີດຈາກເບື້ອງເທິງ. ທ່ານໄດ້ຕອບຄຳຮຽກເອີ້ນໂດຍຄວາມຮັກຈາກພຣະເຈົ້າ. ເວລານີ້ໄດ້ເປັນພາກສ່ວນໃນພຣະກາຍຂອງພຣະຄຣິດ. ຄຣິສະຕຽນຄົນອື່ນໄດ້ໜູນໃຈທ່ານ ຕາຂອງທ່ານໄດ້ເຫັນແຈ້ງຂຶ້ນວ່າມີຄວາມໝາຍຢ່າງໃດໃນການຕິດຕາມອົງພຣະເຢຊູໄປ. ຕາມປົກກະຕິແລ້ວທ່ານໄດ້ມີຊີວິດຢູ່ໃນໂລກນີ້ເພື່ອຈະເປັນພະຍານທີ່ດີຕໍ່ຄົນອື່ນຜູ້ຍັງບໍ່ຮູ້ຈັກພຣະເຈົ້າ. ແຕ່ສ່ວນທ່ານເອງຄວນຈະໃຊ້ເວລາຢູ່ຮ່ວມກັບສະມາຊິກຄົນອື່ນໆເພື່ອໃຫ້ມີພະລັງຂຶ້ນ.

ເພາະວ່າທ່ານເປັນຄົນຢູ່ໃນໂລກນີ້ຕາມບ່ອນຕ່າງໆ ທ່ານຄວນເອົາໃຈໃສ່ໃນການຮ່ວມກັນເພື່ອຈະສ້າງຄວາມສຳເຣັດໃນການປະກາດ. ການຮັບໃຊ້ຂອງທ່ານກໍຈະໄດ້ຜົນດີຖ້າວ່າທ່ານໃຊ້ເວລາຢູ່ຮ່ວມກັບຄົນອື່ນໃນຄຣິສຕະຈັກ. ເໝືອນດັ່ງຄູ່ຜົວເມັຽທີ່ພໍ່ແມ່ ຖ້າຄົນນຶ່ງຄົນໃດໃຊ້ເວລາຢູ່ນຳກັນນ້ອຍລົງຄວາມສັມພັນກໍບໍ່ສົມບູນ. ເໝືອນກັນຖ້າສະມາຊິກຄຣິສຕະຈັກແຍກຕົວອອກຈາກກັນ ພວກເຂົາກໍຈະບໍ່ມີພະລັງໃນການປະກາດຫລືຮັບໃຊ້.

<u>ຄຳຖາມ:</u>

1. ໃຜເປັນອານາເນັຽໃນຊີວິດຂອງທ່ານ? ຄົນທີ່ຊ່ອຍທ່ານໃຫ້ມີສາຍຕາດີໃນການຮັບໃຊ້ດ້ວຍຄວາມເຊື່ອ?

2. ໃນທາງໃດທີ່ຄຣິສຕະຈັກທ່ານໄດ້ຍອມຮັບເອົາຄວາມແຕກຕ່າງ? ທ່ານສາມາດບອກວິທີທາງອື່ນອີກທີ່ຄຣິສຕະຈັກຂອງທ່ານຄວນເປີດກວ້າງອອກໃນການຮັບເອົາຄວາມແຕກຕ່າງ ແລະມັກສນັບສນູນຄວາມເປັນອັນນຶ່ງອັນດຽວກັນ?

3. ມີກຸ່ມໃດບໍ່ໃນຄຣິສະຈັກຂອງທ່ານທີ່ບໍ່ໄດ້ຮັບການດູແລເພາະມີຄວາມລັງກຽດຫລືຢ້ານກົວ? ຖ້າມີ ແມ່ນໃຜ? ແລະເປັນດ້ວຍເຫດໃດ?

4. ທ່ານຫລືຄົນໃນຫ້ອງຮຽນຂອງທ່ານຄວນຈະເຮັດຫຍັງຂຶ້ນເພື່ອຈະໄດ້ຄົນຫລາຍໆຄົນເຂົ້າມາຮ່ວມ?

5. ມັນມີຄວາມໝາຍແນວໃດທີ່ທ່ານໄດ້ກາຍເປັນ<u>ພາກສ່ວນ</u>ຂອງຄຣິສຕະຈັກ? ວິທີໃດການກາຍເປັນ<u>ພາກສ່ວນ</u>ທີ່ໄດ້ໜູນໃຈໃຫ້ທ່ານກາຍເປັນເໝືອນອົງພຣະຄຣິດ? ວິທີໃດໄດ້ກາຍເປັນ<u>ພາກສ່ວນ</u>ທີ່ປັ້ນທ່ານ?

*ດຣ. ບູນ ວົງສຸຣິດທ໌*

## ບົດຮຽນທີ 3

## ດຳເນີນຊີວິດຕາມທາງພຣະຄຣິດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 8: 27-37; ໂຣມ 6: 1-4

**ພູມຫຼັງຂອງພຣະຄັມພີ:** ມາຣະໂກ 8: 27-37; ໂຣມ 6: 1-4

**ຈຸດສຳຄັນຂອງບົດຮຽນນີ້:** ຄຣິສຕຽນຈະຕ້ອງຕັດສິນໃຈທີ່ຈະຕິດຕາມພຣະຄຣິດໃນທຸກພາກສ່ວນຂອງຊີວິດ.

**ຄຳຖາມເພື່ອການຄົ້ນຄວ້າ:** ການເປັນຄຣິສຕຽນມີຄວາມໝາຍແນວໃດສຳລັບທ່ານ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະໄດ້ມອບຕົວ ຫລືມອບຕົວອີກໃໝ່ ທີ່ຈະຕິດຕາມພຣະຄຣິດໃນທຸກພາກສ່ວນຂອງຊີວິດຂ້ອຍ.

### ຄຳນຳ

ຫລັງຈາກທີ່ທ່ານໄດ້ຕອບຮັບຄວາມຮັກຂອງພຣະເຈົ້າ ແລະໄດ້ພົບປະກັບພວກຜູ້ເຊື່ອທັງຫລາຍ, ພຣະວິນຍານບໍຣິສຸດຂອງພຣະເຈົ້າຈະປ່ຽນແປງທຸກໆພາກສ່ວນໃນຊີວິດຂອງທ່ານໂດຍຣິດອຳນາດ ແລະການນຳພາຂອງພຣະຄຣິດ.

ຫລາຍໆຄົນໄດ້ເຫັນການປ່ຽນແປງໃນຊີວິດຂອງຕົວເອງ ຜ່ານການໄປໂບດ, ການສຶກສາພຣະທັມ, ການສາມັກຄີທັມ, ແລະການນະມັສການພຣະເຈົ້າເປັນປະຈຳ. ຖ້າທ່ານເປັນຄຣິສຕຽນ, ທ່ານຮູ້ວ່າຊີວິດນີ້ບໍ່ໄດ້ແມ່ນຊີວິດຂອງຕົວເອງອີກແລ້ວ ແຕ່ແມ່ນຊີວິດພຣະຄຣິດ ທີ່ດຳເນີນຢູ່ໃນທ່ານ.

**1. <u>ພຣະເຢຊູແມ່ນຜູ້ໃດສຳລັບທ່ານ?</u>** (ມາຣະໂກ 8: 27-30)

ພຣະທັມມາຣະໂກໃນຕອນນີ້ ເວົ້າເຣື່ອງພຣະເຢຊູແລະພວກສາວົກທີ່ເກີດຂຶ້ນໃກ້ເມືອງກາຍຊາເຣັຽຟີລິບປອຍ. ພວກສາວົກເປັນຜູ້ຕິດຕາມພຣະເຢຊູ; ພຣະເຢຊູຊົງຖາມພວກເຂົາເຈົ້າວ່າຄົນທັງຫລາຍຄິດວ່າພຣະອົງແມ່ນຜູ້ໃດ. ພວກສາວົກໄດ້ຕອບພຣະອົງວ່າລາງຄົນຄິດວ່າພຣະອົງແມ່ນໂຢຮັນບັບຕິສະໂຕ ແລະລາງຄົນຄິດວ່າພຣະອົງແມ່ນຜູ້ນຶ່ງໃນພວກຜູ້ປະກາດພຣະທັມ. ຫລັງຈາກນັ້ນພຣະເຢຊູຊົງຖາມພວກເຂົາເຈົ້າວ່າ, "ພວກທ່ານເດ ວ່າເຮົາແມ່ນໃຜ?"

ເມືອງກາຍຊາຟີລິບປາຍຕັ້ງຢູ່ໃກ້ພູເຂົາເຮີມອນ. ຊື່ເມືອງນີ້ໄດ້ຕັ້ງໄວ້ເພື່ອເປັນທີ່ລະລຶກສຳລັບກາຍຊາຕິເບຣິອາແລະກະສັດເຮໂຣດຟີລິບ. ນອກນັ້ນເມືອງກາຍຊາຟີລິບປາຍຍັງໄດ້ຖືກມອບໃຫ້ເປັນມິ່ງຂວັນສຳລັບຈັກກະພັບໂຣມ. ໃກ້ເມືອງນີ້ຍັງມີວິຫານທີ່ອຸທິດໃຫ້ກະສັດໂອກັສໂຕ. ຄຳຖາມຂອງພຣະເຢຊູມີຄວາມໝາຍສຳຄັນ ເພາະໄດ້ຖາມຢູ່ໃກ້ເມືອງອັນຍິ່ງໃຫຍ່ທີ່ຖືກສ້າງດ້ວຍມືມະນຸດແລະອຸທິດໃຫ້ມະນຸດ.

ຄຳຖາມຂອງພຣະເຢຊູສຳລັບພວກສາວົກກໍຄື: "ພວກທ່ານເດ ວ່າເຮົາແມ່ນໃຜ?" ເປໂຕໄດ້ຕອບພຣະອົງວ່າ "ທ່ານແມ່ນພຣະຄຣິດ." ຄຳວ່າ "ພຣະຄຣິດ" ເປັນພາສາກຣີກແລະມີຄວາມໝາຍຄ້າຍກັບຄຳວ່າ "ພຣະເມສີອາ" ໃນພາສາອັງກິດ. ໃນສມັຍນັ້ນພວກຜູ້ປະກາດພຣະທັມ, ພວກປະໂຣຫິດ, ຫລືພວກກະສັດໄດ້ຮັບການຫົດສົງເພື່ອຮັບຕຳແໜ່ງ; ການໃຫ້ພຣະນາມພຣະເຢຊູວ່າ "ພຣະຄຣິດ" ເປັນການຫົດສົງພຣະອົງໃຫ້ເປັນຜູ້ປະກາດ, ປະໂຣຫິດ. ແລະກະສັດ.

ສາວົກຂອງພຣະເຢຊູຮັບຮູ້ວ່າພຣະອົງເປັນຜູ້ທີ່ພວກຜູ້ປະກາດພຣະທັມໃນພຣະສັນຍາເດີມໄດ້ທຳນວາຍເອົາໄວ້. ພຣະອົງຊົງເປັນຜູ້ທີ່ຈະຟື້ນຟູບັນລັງຂອງກະສັດດາວິດຂຶ້ນໃໝ່; ພວກເຂົາເຈົ້າຄິດບໍ່ເຖິງວ່າຣາຊອານາຈັກພຣະເຈົ້າທີ່ພຣະ

ເຢຊູໄດ້ຊົງເວົ້າເຖິງນັ້ນຈະຢູ່ໃນທຸກໆຄົນທີ່ໄດ້ຮັບພຣະຄຣິດໃຫ້ເປັນພຣະເຈົ້າໃນຊີວິດຂອງຕົນ. ພຣະເຈົ້າຊົງປົກຄອງຢູ່ແຕ່ຄົນທັງຫລາຍໃນທຸກໆສມັຍບໍ່ເຂົ້າໃຈໃນເຣື່ອງນີ້. ການປົກຄອງຂອງພຣະເຈົ້າຈະປາກົດໃຫ້ເຫັນຢ່າງແຈ້ງຂາວເມື່ອພຣະຄຣິດຊົງສເດັດກັບມາເທື່ອທີສອງ. ໃນຖານະຜູ້ເຊື່ອ, ທ່ານກໍໄດ້ຮັບຮູ້ວ່າພຣະເຢຊູຊົງເປັນ "ພຣະຄຣິດ" ແລ້ວ.

**2. <u>ພຣະຄຣິດຜູ້ຊົງຕິຕຽນ</u>** (ມາຣະໂກ 8:31-33)

ພຣະເຢຊູຊົງກ່າວຕໍ່ຈາກຖ້ອຍຄຳຂອງເປໂຕໂດຍອະທິບາຍຢ່າງລະອຽດວ່າ ພຣະອົງຈະພົບກັບຄວາມທຸກທໍຣະມານຫລາຍໆຢ່າງ. ພຣະອົງຈະຖືກພວກຜູ້ນຳສາສນາປະຕິເສດ, ຈະຖືກຂ້າ, ແລະໃນວັນຖ້ວນສາມພຣະອົງຈະຊົງຖືກບັນດານໃຫ້ເປັນຄືນມາຈາກຄວາມຕາຍ.

ເປໂຕຜູ້ທີ່ໄດ້ຮັບວ່າພຣະເຢຊູຊົງເປັນພຣະຄຣິດໄດ້ພາພຣະອົງອອກໄປຕ່າງຫາກແລ້ວຫ້າມພຣະອົງບໍ່ໃຫ້ເວົ້າຢ່າງນັ້ນ. ແຕ່ພຣະເຢຊູຊົງຕິເປໂຕຢ່າງແຂງແຮງແລະເອີ້ນເພິ່ນວ່າ "ຊາຕານ," ແລະພຣະອົງຊົງເວົ້າຕໍ່ໄປວ່າ "ຈົ່ງຖອຍໜີຈາກເຮົາເສັຽ ເພາະເຈົ້າຄິດຢ່າງມະນຸດ ບໍ່ຄິດຢ່າງພຣະເຈົ້າ" (ມາຣະໂກ 8:33).

ທ່ານຄຸ້ນເຄີຍກັບພຣະເຢຊູຜູ້ຊົງຕິບໍ່? ທ່ານເຄີຍຄິດຢ່າງມະນຸດ ແທນທີ່ຈະຄິດຢ່າງພຣະເຈົ້າບໍ່? ທ່ານເຄີຍຮູ້ສຶກວ່າພຣະວິນຍານຂອງພຣະຄຣິດໄດ້ຕ້ອງຕິທ່ານເພາະການຄິດຢ່າງມະນຸດໃນສະພາບການບາງຢ່າງບໍ່?

**3. <u>ທາງໄມ້ກາງແຂນພາກັບບ້ານ</u>** (ມາຣະໂກ 8: 34-37)

ທາງຂອງພຣະເຢຊູມີໄມ້ກາງແຂນຢູ່ດ້ວຍ. ສະນັ້ນຖ້າທ່ານຕ້ອງການຕິດຕາມທາງຂອງພຣະເຢຊູ, ທາງນັ້ນຈະຕ້ອງມີໄມ້ກາງແຂນຮວມຢູ່ດ້ວຍ.

ທາງດຽວທີ່ຈະຕິດຕາມພຣະເຢຊູ, ພຣະຄຣິດ, ຄືການປະຕິເສດຄວາມຕ້ອງການຂອງຕົວເອງ, ແບກໄມ້ກາງແຂນ,ແລະຕິດຕາມພຣະອົງໄປ. ຖ້າທ່ານເຊື່ອວ່າພຣະເຢຊູຊົງເປັນພຣະຄຣິດ ແລະກ້າວໜ້າຕໍ່ໄປໃນຄວາມຕ້ອງການຂອງຕົວເອງ, ທ່ານຈະເສັຽຊີວິດຂອງການເປັນສາວົກທີ່ແທ້. ແຕ່ວ່າ, ຖ້າທ່ານຍອມເສັຽສະລະຊີວິດທີ່ເຫັນແກ່ຕົວເພາະທ່ານໄດ້ມອບຕົວໃຫ້ພຣະຄຣິດ, ທ່ານກໍຈະພົບຊີວິດທີ່ຄົບບໍຣິບູນຂອງສາວົກ. ການເຊື່ອວ່າພຣະເຢຊູຊົງເປັນພຣະຄຣິດນັ້ນບໍ່ພໍສຳລັບການເປັນສາວົກ ແມ່ນແຕ່ຜີມານກໍຍັງເຊື່ອເຊັ່ນນັ້ນ. ທ່ານຈະຕ້ອງຕິດຕາມພຣະເຢຊູໂດຍທາງຂອງໄມ້ກາງແຂນ.

ທ່ານຈະມອບຊີວິດໄວ້ກັບຊັບສົມບັດຫລືຄວາມສນຸກສນານບໍ? ທ່ານຄິດວ່າສິ່ງເຫລົ່ານັ້ນມີຄຸນຄ່າຫລາຍກວ່າຈິດວິນຍານຂອງທ່ານບໍ່? ການເປັນສາວົກຂອງພຣະເຢຊູມີຄຸນຄ່າຫລາຍປານໃດສຳລັບທ່ານ? ພຣະເຢຊູຊົງໄດ້ຜ່ານສິ່ງເຫລົ່ານັ້ນກ່ອນທ່ານແລ້ວ. ສິ່ງທີ່ທ່ານໄດ້ເສັຽສະລະໄປ, ພຣະອົງກໍໄດ້ເຮັດເຊັ່ນດຽວກັນ. ຖ້າທ່ານໄດ້ປະທຸກຢ່າງເພື່ອຈະຕິດຕາມພຣະອົງ, ພຣະເຢຊູຊົງເຂົ້າໃຈດີ. ຖ້າທ່ານຢາກເຫັນຊັຍຊະນະໃນຊີວິດໃນຖານະຂອງຜູ້ຕິດຕາມພຣະ ຄຣິດ, ທ່ານຈະຕ້ອງເດີນຕາມທາງຂອງໄມ້ກາງແຂນ.

**4. <u>ການບັບຕິສະມາຂອງທ່ານ ແລະການຊົງເປັນເຈົ້ານາຍຂອງພຣະຄຣິດ</u>** (ໂຣມ 6: 1-4)

ພວກເຮົາໃຊ້ຄຳວ່າ "ເຈົ້ານາຍ" ເພື່ອບອກເຖິງບຸກຄົນ ຫລືສິ່ງຂອງທີ່ມີອຳນາດໃນຊີວິດຂອງເຮົາ. ທ່ານຍອມຮັບການເປັນເຈົ້ານາຍຂອງພຣະຄຣິດໃນຊີວິດທ່ານ ເວລາທ່ານຮັບວ່າ "ພຣະເຢຊູຊົງເປັນພຣະຄຣິດ." ທ່ານຍອມຮັບການເປັນເຈົ້ານາຍຂອງພຣະຄຣິດໃນຊີວິດທ່ານ ເພື່ອທ່ານປະຕິເສດຊີວິດທີ່ເຕັມດ້ວຍຄວາມເຫັນແກ່ຕົວ, ແບກໄມ້ກາງແຂນຂອງຕົນ, ແລະ ເລີ້ມທີ່ຈະຮຽນ ແລະຈະໃຊ້ຊີວິດຂອງສາວົກຂອງພຣະເຢຊູ ໃນທຸກດ້ານທີ່ພຣະອົງຊົງນຳພາ. ໃນຈົດໝາຍເຖິງຄຣິສຕຽນທີ່ກຸງໂຣມ, ໂປໂລໄດ້ຊີ້ໃຫ້ເຫັນວ່າ ພຣະຄຸນມີຫລາຍກວ່າຄວາມຜິດບາບ. ຄຳຖາມຕໍ່ໄປກໍຄືວ່າ, "ຖ້າ

ຢ່າງນັ້ນພວກເຮົາຈະວ່າຢ່າງໃດ ຄວນທີ່ເຮົາທັງຫລາຍຈະຢູ່ໃນຄວາມຜິດບາບຕໍ່ໄປ ເພື່ອໃຫ້ພຣະຄຸນຈະມີຫລາຍຂຶ້ນຫລື?" ທ່ານໄດ້ຕອບວ່າ "ບໍ່ເປັນຢ່າງນັ້ນດອກ." ພື້ນຖານຂອງຄໍາຕອບນີ້ມາຈາກການຊົງເປັນເຈົ້ານາຍຂອງພຣະເຢຊູ ໃນຊີວິດຂອງຜູ້ເຊື່ອທັງຫລາຍ.

ໂປໂລ ສເນີວ່າ, "ຜູ້ຕາຍຕໍ່ຄວາມຜິດບາບແລ້ວ ຈະດໍາເນີນຊີວິດໃນຄວາມຜິດບາບຕໍ່ໄປໄດ້ຢ່າງໃດ." ໂປໂລສອນວ່າພວກເຮົາໄດ້ຮັບ "ບັບຕິສະມາເຂົ້າໃນຄວາມຕາຍຂອງພຣະອົງ" ແລ້ວ ເວລາພວກເຮົາຮັບການບັບຕິສະມາ. ໃນການຕາຍຂອງພຣະເຢຊູ ຄວາມຜິດບາບໄດ້ຖືກໄຖ່ ແລະພວກເຮົາໄດ້ຄືນດີກັບພຣະເຈົ້າ. ພວກເຮົາໄດ້ຕາຍຕໍ່ຄວາມຜິດບາບແລ້ວ; ການບັບຕິສະມາສະແດງເຖິງການຍອມຕາຍຕໍ່ຄວາມຜິດບາບ ແລະການດໍາເນີນຊີວິດແບບເຫັນແກ່ຕົວ.

ນອກຈາກການເຂົ້າມີສ່ວນໃນກາຍຕາຍຂອງພຣະເຢຊູແລ້ວ ພວກເຮົາຍັງໄດ້ມີສ່ວນໃນການຄືນພຣະຊົນຂອງພຣະອົງດ້ວຍ. ການຕາຍຂອງພຣະຄຣິດແມ່ນຊັຍຊະນະຕໍ່ຄວາມຜິດບາບ ແລະການຄືນພຣະຊົນຂອງພຣະອົງແມ່ນຊັຍຊະນະຕໍ່ຄວາມຕາຍ. ການບັບຕິສະມາສະແດງເຖິງການຕາຍຂອງຊີວິດທີ່ເຕັມດ້ວຍຄວາມຜິດບາບ; ນອກນັ້ນການບັບຕິສະມາຍັງສະແດງເຖິງການເປັນຄືນຂຶ້ນມາຈາກຄວາມຕາຍສູ່ຊີວິດໃໝ່ - ຊີວິດທີ່ສແວງຫາພຣະລັກສນະຂອງພຣະເຢຊູຜູ້ຊົງເປັນພຣະຄຣິດ. ເວລາທ່ານຮັບການບັບຕິສະມາ ທ່ານກໍປະກາດວ່າພຣະເຢຊູເປັນເຈົ້ານາຍ. ຊີວິດນີ້ບໍ່ແມ່ນຂອງທ່ານແຕ່ເປັນຂອງພຣະເຢຊູ.

<u>ພາກປະຕິບັດ</u>

ຖ້າທ່ານຈະຂຽນໃບລາຍການສໍາລັບສິ່ງທີ່ທ່ານມັກ ທ່ານຈະໃຊ້ກະດາດຈັກແຜ່ນ? ມີຫຍັງແດ່ທີ່ທ່ານຮັກຫລາຍກວ່າພຣະເຢຊູ? ມີບາງຄັ້ງ ຫລາຍຄົນຕຽມພ້ອມທີ່ຈະຕິດຕາມພຣະເຢຊູຄຣິດໂດຍການສະລະສິ່ງຂອງ, ຍົດຖາບັນດາສັກ, ໝູ່ເພື່ອນ, ແລະຄອບຄົວ; ແຕ່ເຂົາເຈົ້າບໍ່ຍອມສະລະຕົວເອງ.

ອີກບາງຄົນຕຽມພ້ອມທີ່ຈະສະລະຕົວເອງ ແຕ່ບໍ່ຍອມໃຫ້ພຣະຄຣິດເປັນເຈົ້ານາຍເຣື່ອງການທ່ຽວຫລິ້ນ, ການເງິນ, ຄອບຄົວ, ແລະລູກ. ຫລາຍຄົນເຫັນພຣະຄຸນຂອງພຣະເຈົ້າຢູ່ພຽງການອະພັຍຄວາມຜິດບາບ ແລະຈຸດປະສົງໃນຊີວິດ. ເຂົ້າເຈົ້າພຍາຍາມດໍາເນີນຊີວິດຂອງສາວົກ ແຕ່ບໍ່ຍອມໃຫ້ພຣະຄຣິດເປັນເຈົ້ານາຍໃນທຸກພາກສ່ວນຂອງຊີວິດ ເພາະມີບາງຢ່າງທີ່ພວກເຂົາເຈົ້າຍັງຮັກຫລາຍຢູ່. ຖ້າມີສິ່ງໃດ ຫລືຜູ້ໃດທີ່ທ່ານຮັກຫລາຍກວ່າພຣະເຢຊູ, ສິ່ງນັ້ນ ຫລືຜູ້ນັ້ນກໍກາຍເປັນເຈົ້ານາຍຂອງທ່ານ.

<u>ຄໍາຖາມ:</u>

1. ທ່ານເຫັນພ້ອມ ຫລືບໍ່ເຫັນພ້ອມກັບຄວາມຄິດເຣື່ອງການເປັນສາວົກຂອງພຣະເຢຊູຄຣິດທີ່ວ່າ ຊີວິດນີ້ບໍ່ແມ່ນຂອງທ່ານ? ເປັນຫຍັງຈຶ່ງເຫັນພ້ອມ? ຫລືເປັນຫຍັງຈຶ່ງບໍ່ເຫັນພ້ອມ?
2. ຄົນທຸກມື້ນີ້ວ່າພຣະເຢຊູແມ່ນໃຜ? ທ່ານເວົ້າວ່າພຣະເຢຊູແມ່ນໃຜ? ທ່ານປະກາດວ່າພຣະເຢຊູແມ່ນພຣະຄຣິດໃນຊີວິດດ້ວຍວິທີໃດ?
3. ທ່ານພ້ອມທີ່ຈະແບ່ງປັນກັບກຸ່ມຂອງທ່ານບໍ່ ເຣື່ອງທີ່ທ່ານຮູ້ດີວ່າພຣະເຢຊູໄດ້ຕ້ອງຕີທ່ານ?
4. ທ່ານຄິດວ່າມີບາງຄົນ ຫລືບາງຄຣິສຕະຈັກບໍ່ ທີ່ເນັ້ນເຣື່ອງພຣະເຢຊູເປັນພຣະຜູ້ໂຜດ ຫລາຍກວ່າເຣື່ອງພຣະເຢຊູຜູ້ຊົງເປັນເຈົ້ານາຍ ຫລືອາດຈະກົງກັນ? ຊ່ວຍອະທິບາຍ.
5. ທ່ານຄິດວ່າການບັບຕິສະມາເປັນສັນຍາລັກຂອງການຕາຍຕໍ່ຄວາມຜິດບາບ ຫລືການຄືນຈາກຕາຍສູ່ຊີວິດໃໝ່? ມີຫຍັງແດ່ທີ່ຄຣິສຕະຈັກສາມາດເຮັດໄດ້ ເພື່ອປັບປຸງຄວາມເຂົ້າໃຈໃນເຣື່ອງນີ້?

*ດຣ. ສິດນີ ຄານ*

# <u>ບົດຮຽນທີ 4</u>
# <u>ວາງຣະບຽບການຮຽນເພື່ອກ້າວໜ້າ</u>

---

**<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u>** ມທ 11:28-30; ຢຮ 14:23-26; 1ກຣທ 3:1-3; ຮຣ 5:11-14

**<u>ພູມຫລັງຂອງພຣະຄັມພີ:</u>** ມທ 11:25-30; ຢຮ 14:23-26; 1ກຣທ 3:1-4; ຮຣ 5:11-14

**<u>ຈຸດສໍາຄັນຂອງບົດຮຽນນີ້:</u>** ພຣະເຢຊູຊົງສອນເຮົາໃຫ້ຮຽນຮູ້ໃນການດໍາເນີນຊີວິດຈາກພຣະອົງທຸກວັນ.

**<u>ຄໍາຖາມເພື່ອການຄົ້ນຄວ້າ:</u>** ເຮົາຈະເລີ້ມຕົ້ນຮຽນຮູ້ຈາກພຣະອົງແຕ່ລະວັນໆຢ່າງໃດ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຕັດສິນໃຈຊອກຫາວິທີທາງຮຽນຮູ້ຈາກພຣະອົງທຸກໆວັນ.

**<u>ໜ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>**

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ທຸກຄົນທີ່ເຊື່ອໃນພຣະເຢຊູເປັນຜູ້ຮັບໃຊ້ພຣະເຈົ້າ.

## <u>ຄໍານໍາ</u>

ຜູ້ຈະເຣີນໃນການຕິດຕາມພຣະເຢຊູແມ່ນຜູ້ທີ່ມີຣະບຽບແລະພະຍາຍາມຊອກຫາຊ່ອງທາງຮຽນຮູ້ຢ່າງບໍ່ຢຸດບໍ່ຍັ້ງ, ການເຮັດດັ່ງນີ້ຈະນໍາພາໃຫ້ຈິດວິນຍານຂອງລາວກາຍເປັນຜູ້ໃຫຍ່ຖ້ອນໃນພຣະຄຣິດ ແລະການເປັນຜູ້ໃຫຍ່ໃນພຣະຄຣິດນັ້ນລາວຈະສາມາດພິຊິດຄວາມຊົ່ວຮ້າຍທີ່ຄອຍມາບຽດບຽນລົບກວນລາວໆຈະເອົາຊະນະການຫລອກລວງຂອງມານຊາຕານໃນທຸກຮູບແບບ ແລະລາວຍັງສາມາດຊ່ອຍຄົນອື່ນໃຫ້ຫລຸດພົ້ນຈາກບ້ວງແຮ້ວແຫ່ງຄວາມຕາຍະມະອີກດ້ວຍ.

## 1. <u>ຮຽນກັບພຣະເຢຊູ</u> (ມັດທາຍ 11:28-30 )

ຫລັງຈາກພຣະເຢຊູໄດ້ຊົງໂຜດເຮົາທັງຫລາຍໃຫ້ພົ້ນ ພຣະອົງກໍບໍ່ໄດ້ປ່ອຍປະລະເລີຍເຮົາໃຫ້ຢູ່ໄປຕາມເວນຕາມກັມ ພຣະອົງຍັງເຊີນເຮົາທັງຫລາຍໃຫ້ສຶກສາຮຽນຮູ້ກັບພຣະອົງຢູ່ສເມີ, ທັງນີ້ກໍເພາະພຣະອົງຊົງຮູ້ແລ້ວວ່າ ຕາບໃດທີ່ເຮົາທັງຫລາຍຍັງຢູ່ໃນໂລກນີ້ຍ່ອມຈະມີພາຣະມີບັນຫາແລະຫຍຸ້ງຍາກຕ່າງໆ ດ້ວຍເຫດນີ້ພຣະອົງຈຶ່ງປ່າວເຕືອນແລະເຊີນເຮົາທັງຫລາຍວ່າ *"ບັນດາຜູ້ທີ່ເຮັດການຫນັກຫນ່ວງແລະແບກພາຣະຫນັກ ຈົ່ງມາຫາເຮົາ ແລະເຮົາຈະໃຫ້ພວກທ່ານໄດ້ຮັບຄວາມເຊົາເມື່ອຍ,ຈົ່ງເອົາແອກຂອງເຮົາແບກໄວ້ແລ້ວຮຽນຮູ້ຈາກເຮົາ ເພາະວ່າເຮົາເປັນຜູ້ໃຈອ່ອນສຸພາບແລະຖ່ອມລົງ ແລ້ວຈິດໃຈຂອງທ່ານຈະໄດ້ພົບຄວາມເຊົາເມື່ອຍດ້ວຍວ່າແອກຂອງເຮົາກໍພໍເຫມາະ ແລະພາຣະຂອງເຮົາກໍເບົາ"* (ຂໍ້ 28-30). ພຣະອົງໄດ້ເຊີນເຮົາທັງຫລາຍມາຫາພຣະອົງນັ້ນບໍ່ໄດ້ໝາຍຄວາມວ່າມາຫາພຣະອົງແລະຈະໝົດບັນຫາ ຫລືລາງເທື່ອເຮົາເຂົ້າໃຈວ່າຄົນຂອງພຣະອົງບໍ່ມີບັນຫາ ແຕ່ພຣະອົງພະຍາຍາມບອກເຮົາວ່າຫາກມາຫາພຣະອົງແລ້ວຈິດໃຈຈະໄດ້ຮັບຄວາມເຊົາເມື່ອຍ ຄ້າຍຄືເຮົາເຮັດວຽກໜັກແລ້ວເຊົາເມື່ອຍແລະມີນໍ້າເຢັນດື່ມອີກ, ພຣະອົງຍັງບອກອີກວ່າແອກພຣະອົງກໍພໍເໝາະ ໝາຍຄວາມວ່າແອກຫລືວຽກງານໃນການຮັບໃຊ້ພຣະອົງນັ້ນບໍ່ເກີນກວ່າເຮົາຈະແບກໄດ້. ສລູບແລ້ວແອກທີ່ເຮົາແບກເມື່ອກ່ອນມາຫາພຣະອົງນັ້ນໜັກເກີນກວ່າທີ່ເຮົາຈະແບກ.

ມີນັກຮຽນຫລາຍຄົນລົງທະບຽນເຂົ້າໂຮງຮຽນຕາມສະຖາບັນຕ່າງໆ, ລາງຄົນພໍ່ແມ່ກໍລົງທະບຽນແລະເສັຽຄ່າຮຽນໃຫ້ລູກ ເພື່ອຢາກໃຫ້ລູກມີຄວາມຮູ້ຄວາມຫລັກ ເມື່ອໃຫຍ່ມາລູກຈະມີວຽກງານການທຳທີ່ດີມີລາຍໄດ້ຫລາຍ. ພວກນັກຮຽນສ່ວນຫລາຍກໍພາກັນຕັ້ງອົກຕັ້ງໃຈໃນການຮຽນ ຕໍ່ມາກໍຂາດໂຮງຮຽນແດ່, ໄປໂຮງຮຽນຊ້າແດ່ຈົນໃນທີ່ສຸດກໍຮຽນບໍ່ໄດ້ຍ້ອນຂາດດຸໂພດ ບາງຄົນກໍອອກໂຮງຮຽນໄປເລີຍ ບາງຄົນຄະແນນບໍ່ພໍຈຶ່ງໄດ້ຮຽນເພີ້ມໃນຣະດູຮ້ອນໃນຂະນະທີ່ນັກຮຽນຜູ້ອື່ນພັກຮ້ອນ ບາງເທື່ອນັກຮຽນທີ່ຖືກສັ່ງໃຫ້ຮຽນເພີ້ມຍັງຂາດໂຮງຮຽນອີກ ໃນທີ່ສຸດລາວກໍຄ້າງຫ້ອງເກົ່າອີກປີນຶ່ງ, ທ່ານເຄີຽເຫັນບັນຫານີ້ບໍ່? ທ່ານເດ ມາຮຽນກັບພຣະເຢຊູທີ່ໂບດທຸກໆວັນທິດຢູ່ບໍ່? ທ່ານມາ ຊ້າບໍ່? ການຮຽນຂອງທ່ານກ້າວໜ້າບໍ່? ຫາກທ່ານເອງມີບັນຫານີ້ທ່ານກໍຄວນປັບປຸງໃໝ່ເສັຽກ່ອນທ່ານຈະຄ້າງຫ້ອງໃນໂຮງຮຽນພຣະເຢຊູ ຄຣູສອນໂຮງຮຽນວັນອາທິດພຽງແຕ່ສອນເທົ່ານັ້ນ ພວກເພິ່ນບໍ່ມີສິດສອບເສັງທ່ານ ແຕ່ທ່ານຄຣູ (ຄຣູໃຫຍ່) ທີ່ມີຊື່ວ່າພຣະເຢຊູຕ່າງຫາກຈະສອບເສັງທ່ານໃນວັນສຸດທ້າຍ.

## ໒. <u>ຮຽນກັບພຣະວິນຍານ</u> (ໂຢຮັນ 14:23-26)

ຊົ່ວໂມງທີ່ພຣະເຢຊູຈະຖືກຄຶງທີ່ໄມ້ກາງແຂນພຣະອົງໄດ້ສັ່ງລາພວກສາວົກ ແລະພວກສາວົກກໍພາກັນສະແດງຄວາມຄິດຮອດຄິດເຖິງແລະສແດງຄວາມຮັກຕໍ່ພຣະອົງ ຈຶ່ງເປັນຕົ້ນເຫດໃຫ້ພຣະອົງກ່າວກັບສາວົກວ່າ *"ຖ້າຜູ້ໃດຮັກເຮົາຜູ້ນັ້ນຈະຖືຮັກສາພຣະທັມຂອງເຮົາ"* (ຂໍ້ 23) ແປວ່າຜູ້ທີ່ຮັກພຣະອົງກໍຈະເຮັດຕາມຄຳສອນຂອງພຣະອົງຈົນກວ່າພົບກັບພຣະ ອົງອີກຄັ້ງນຶ່ງໃນວັນທີ່ພຣະອົງສະເດັດກັບຄືນມາພິພາກສາໂລກ. ພຣະອົງໄດ້ຈາກໄປໃນສະພາບຂອງບຸດມະນຸດທີ່ມີນາມວ່າພຣະເຢຊູ ແຕ່ເມື່ອພຣະອົງຈາກໄປແລ້ວພຣະອົງໄດ້ສົ່ງພຣະວິນຍານບໍຣິສຸດໃຫ້ລົງມາເປັນຜູ້ສິດສອນແລະນຳພວກສາວົກຂອງພຣະອົງທຸກມື້ທຸກວັນ ຈົນກວ່າພຣະເຢຊູຈະສະເດັດກັບຄືນມາສູ່ໂລກອີກ ແລະໃນເວລານັ້ນຜູ້ທີ່ຖືຮັກສາທັມບັນຍັດ ຂອງພຣະອົງຈະໄດ້ພົບກັບພຣະອົງອີກດັ່ງທີ່ພຣະອົງຊົງສັນຍາວ່າ *"ແລ້ວເຮົາທັງສອງຈະມາຫາຜູ້ນັ້ນແລະຈະຕັ້ງຢູ່ກັບຜູ້ນັ້ນ"* (ຂໍ້ 23ຂ). ແປວ່າພຣະເຢຊູແລະພຣະບິດາຈະມາຫາຜູ້ທີ່ຮັກພຣະເຢຊູ ເພາະພຣະອົງຊົງບອກແລ້ວວ່າ *"ຖ້າຜູ້ໃດຮັກເຮົາຜູ້ນັ້ນຈະຖືຮັກສາພຣະທັມຂອງເຮົາ ແລະພຣະບິດາຂອງເຮົາຈະຊົງຮັກຜູ້ນັ້ນ)* (ຂໍ້ 23ກ).

ພຣະເຈົ້າຊົງສະຖິດນຳເຮົາທັງຫລາຍໃນພຣະນາມແຫ່ງພຣະວິນຍານບໍຣິສຸດ ເພື່ອຈະຊົງນຳແລະສອນເຮົາທັງຫລາຍໃຫ້ປະຕິບັດຕາມພຣະທັມຂອງພຣະເຢຊູ, ພຣະວິນຍານບໍຣິສຸດຈະບໍ່ສອນແລະນຳພາເຮົາທັງຫລາຍໃຫ້ເຮັດໄປຫລາຍກວ່າສິ່ງພຣະເຢຊູສັ່ງສອນ ເພາະວ່າພຣະວິນຍານຂອງພຣະເຈົ້າເປັນນຶ່ງໃນຈຳນວນພຣະເຈົ້າສາມພຣະພາກ ຊຶ່ງເວລານີ້ພຣະວິນຍານບໍຣິສຸດຮັບໜ້າທີ່ແທນພຣະເຢຊູ ດັ່ງນັ້ນພຣະວິນຍານຈະສອນແລະນຳພາພວກເຮົາສເມີກັບຄຳສອນພຣະເຢຊູທຸກເຫດການ. ເຮົາທັງຫລາຍມີໜ້າທີ່ຮຽນແລະເຊື່ອຟັງພຣະວິນຍານບໍຣິສຸດຢ່າງມີຣະບຽບ ພຣະເຢຊູໄດ້ເລົ້າໂລມພວກສາວົກໃຫ້ຖືຮັກສາພຣະທັມຂອງພຣະອົງ ໂດຍເອົາຄວາມຮັກເປັນເຄື່ອງດຶງດູດຈິດໃຈໃຫ້ຮ່ຳຮຽນ ດັ່ງນັ້ນເມື່ອເຮົາຫາກເວົ້າວ່າເຮົາຮັກພຣະເຢຊູເຮົາກໍຄວນຕັ້ງໃຈປະຕິບັດຕາມພຣະທັມຂອງພຣະອົງ.

## 3. <u>ຕ່ຳໄປກວ່າຊັ້ນຮຽນ</u> (1ໂກຣິນໂທ 3:1-3)

ພວກສາວົກໃນສມັຍນັ້ນແລະສມັຍນີ້ຕ່າງພາກັນພະຍາຍາມເຮັດຕາມພຣະທັມຂອງພຣະເຢຊູ ແຕ່ກໍປາກົດວ່າສາວົກແຕ່ລະສມັຍກໍຖືຮັກສາທັມບັນຍັດນ້ອຍໄປກວ່າມາຕະຖານທີ່ພຣະເຢຊູຊົງສັ່ງໄວ້ ດ້ວຍເຫດນີ້ໂປໂລຈຶ່ງກ່າວວ່າ *"ພີ່ນ້ອງທັງຫລາຍເອີຍ, ຝ່າຍເຮົາຈະເວົ້າກັບເຈົ້າທັງຫລາຍເຫມືອນເວົ້າກັບຜູ້ທີ່ຢູ່ຝ່າຍພຣະວິນຍານແລ້ວບໍ່ໄດ້ ແຕ່ຕ້ອງເວົ້າກັບເຈົ້າເຫມືອນເວົ້າກັບຄົນທີ່ຢູ່<u>ຝ່າຍມະນຸດທຳມະດາ</u> ເຫມືອນກັບພວກເຈົ້າເປັນເດັກອ່ອນໃນພຣະຄຣິດ"* ເປັນຄຳເວົ້າຕອນນຶ່ງໃນຈົດໝາຍຂອງອັຄສາວົກໂປໂລທີ່ຂຽນເຖິງຄຣິສຕຽນໃນເມືອງໂກຣິນໂທ, ເຫດທີ່ໂປໂລກ່າວເຊັ່ນນັ້ນກໍເພາະວ່າມີຫຼາຍຄົນໃນເມືອງນັ້ນເປັນຄຣິສຕຽນມາຫລາຍປີແລ້ວແຕ່ບໍ່ໄດ້ຮຽນຮູ້ອັນໃດຫລາຍໄປກວ່າຄຣິສຕຽນໃໝ່ໆ. ບາງຄົນເປັນ

ເຖິງຂັ້ນຄຣູສອນໂຮງຮຽນວັນອາທິດທີ່ສາຍຕາຂອງສິດຍາພິບານເຫັນວ່າເປັນຜູ້ໃຫຍ່ແລ້ວ, ຕໍ່ມາບໍ່ນານເທົ່າໃດລາວກໍເຊົາມາໂບດເມື່ອສິດຍາພິບານປ້ອນອາຫານແຂງ ຫລືລາວເອງປະເຊີນກັບບັນຫາສ່ວນຕົວ ຫລືມີຄວາມຂັດຂ້ອງໝອງໃຈກັບພີ່ນ້ອງໃນໂບດດຽວກັນແລ້ວກໍເຊົາມາໂບດແລະກັບໄປໃຊ້ຊີວິດຢ່າງເດີມ.

ໂປໂລກ່າວອີກວ່າ *"ເຮົາໄດ້ລ້ຽງພວກເຈົ້າດ້**ວຍນ້ຳນົມ**ບໍ່ໃຊ້ດ້ວຍອາຫານແຂງເຫດວ່າເມື່ອກ່ອນນັ້ນເຈົ້າຍັງບໍ່ສາມາດຮັບໄດ້ ແລະເຖິງດຽວນີ້ກໍຍັງບໍ່ສາມາດເພາະວ່າເຈົ້າທັງຫລາຍຍັງຢູ່ຝ່າ**ຍມະນຸດທຳມະດາ** ດ້ວຍວ່າເມື່ອພວກເຈົ້າຍັງອິດສາກັນແລະຜິດຖຽງກັນ ເຈົ້າທັງຫລາຍບໍ່ໄດ້ຢູ່ຝ່າຍມະນຸດ**ທຳມະດາ** ແລະບໍ່ໄດ້ດຳເນີນຊີວິດຕາມມະນຸດ**ທຳມະດາດ**ອກຫລື"* (ຂໍ້2). ສ່ວນຫລາຍຄຣິສຕຽນໃນເມືອງໂກຣິນໂທເປັນລູກສິດຂອງໂປໂລທີ່ໄດ້ສອນຫລາຍປີແລ້ວ, ແຕ່ໂປໂລສັງເກດເຫັນວ່າພວກສິດເຫລົ່ານັ້ນບໍ່ໃຫຍ່ ເພາະວ່າພວກເຂົາຍັງມີກິຣິຍາທ່າທີທີ່ດຳຣົງຊີວິດແບບດຽວກັນກັບຄັ້ງແຣກທີ່ເຂົາຮັບເຊື່ອພຸ້ນ, ອາຫານແຂງທີ່ໂປໂລໄດ້ກ່າວເຖິງນັ້ນແມ່ນຄຳສອນທີ່ໜັກໄປກວ່າຕອນຕົ້ນ ແຕ່ໂປໂລບໍ່ສາມາດສອນໄປໜັກກວ່ານັ້ນເພາະວ່າພວກເຂົາຍັງອິດສາແລະຜິດຖຽງກັນຄືເດັກນ້ອຍຢູ່ ດັ່ງນັ້ນຈຶ່ງສລຸບໄດ້ວ່າຄວາມເຊື່ອຂອງພວກເຂົາຍັງຢູ່ຕ່ຳກວ່າຊັ້ນຮຽນ.

## 4. <u>ຄ້າງຫ້ອງອະນຸບານຕອນຕົ້ນ</u> (ເຮັບເຣີ 5:11-14)

ອາຈານຣະດັບປຣິນຍາເອກອະເມຣິກາຄົນນຶ່ງໄດ້ໃຫ້ຄຳພະຍານວ່າ ທ່ານເອງເປັນນັກຮຽນບໍ່ເກັ່ງ, ເພິ່ນໄດ້ເນັ້ນໜັກຢູ່ສອງຕອນຄື; 1. ເພິ່ນໄດ້ຄ້າງຫ້ອງໃນຊັ້ນອະນຸບານ ເພາະວ່າຕອນນັ້ນຄວາມຄິດຍັງເປັນເດັກ ໄປໂຮງຮຽນແຕ່ລະມື້ພໍ່ແມ່ກໍມີແຕ່ຈອບອອຍດ້ວຍສຳນຽງສຽງຫວານພ້ອມທັງມີຄ່າຈ້າງພ້ອມ ແຕ່ລະມື້ຖ້າແຕ່ໂຮງຮຽນເລີກໂດຍບໍ່ເຮັດຫຍັງຕາມຄຣູສັ່ງ ດັ່ງນັ້ນໝົດປີມາກໍບໍ່ໄດ້ຂຶ້ນຫ້ອງ. 2. ຕອນຮຽນປີສຸດທ້າຍທີ່ມັດທະຍົມຕອນປາຍກໍເກືອບບໍ່ລອດເພາະເປັນຄົນປຶກແດ່ ພວກເພື່ອນຮ່ວມຫ້ອງທີ່ສລາດກໍພາກັນເຍາະເຍີ້ຍ ເຫດທີ່ເພິ່ນໄດ້ປຣິນຍາເອກໃນເວລານີ້ກໍເພາະວ່າຕັ້ງໃຈຮຽນ ສ່ວນພວກໝູ່ທີ່ສລາດນັ້ນເມື່ອຈົບມັດທະຍົມແລ້ວກໍບໍ່ຮຽນຕໍ່ເລີຍ. ເຣື່ອງນີ້ສລຸບໄດ້ວ່າເຫດທີ່ເຮົາທັງຫລາຍຄ້າງຫ້ອງຮຽນໃນພຣະເຢຊູຄຣິດນັ້ນກໍເພາະວ່າຄວາມຄິດເຮົາຍັງເປັນເດັກ ໃຫ້ແຕ່ພໍ່ແມ່ແລະຄຣູຈອບອອຍທຸກມື້ຊື່ໆ. ແຕ່ເຮົາຄວນຮຽນເອົາຕົວຢ່າງອາຈານຜູ້ນີ້ ເຖິງແມ່ນຈະຮຽນບໍ່ເກັ່ງແຕ່ຕັ້ງໃຈຮຽນກໍເຖິງທີ່ສຳເຣັດໄດ້.

ຜູ້ບັນທຶກພຣະທັມເຮັບເຣີບອກວ່າເປັນການຍາກທີ່ຈະອະທິບາຍໃຫ້ຄຣິສຕຽນເຂົ້າໃຈໃນເຣື່ອງໃຫຍ່ເຖິງແມ່ນເຂົາຈະເປັນຄຣິສຕຽນມາເຫິງນານແລ້ວກໍຕາມເຂົາກໍບໍ່ໄດ້ຮຽນຮູ້ຕາມສົມຄວນເພາະຄວາມເຊື່ອຂອງເຂົາຍັງເປັນເໝືອນເດັກນ້ອຍທີ່ຍັງບໍ່ສາມາດເຂົ້າໃຈເຣື່ອງຜູ້ໃຫຍ່ໄດ້, ຜູ້ບັນທຶກພຣະທັມເຮັບເຣີເອີ້ນເຂົາວ່າ *"ຄົນຫູໜັກ"* ຄຳວ່າຫູໜັກຕາມພາສາບ້ານເຮົາແປວ່າຄົນຫູໜວກ ແຕ່ຄຣິສຕຽນເຫລົ່ານັ້ນບໍ່ແມ່ນຄົນຫູໜວກຈັກຄົນ. ສລຸບແລ້ວແປວ່າເຂົາເປັນຄົນສອນຍາກຄ້າຍຄືກັບຄຣິສຕຽນໃນເມືອງໂກຣິນໂທທີ່ໄດ້ກ່າວມາຂ້າງເທິງນັ້ນ. ເມື່ອສອນບໍ່ເຂົ້າບໍ່ອອກຜູ້ສອນຈຳເປັນຕ້ອງກັບຄືນໄປສອນຫລັກທັມເບື້ອງຕົ້ນອີກຄ້າຍຄືໂຮງຮຽນອະນຸບານ ກ. ຂ. ຄ. ງ. ອີກເທື່ອນຶ່ງ.

ທຸກໂຮງຮຽນໃນໂລກມີຣະບຽບໃນການຮຽນແລະການສິດສອນ ຈະເປັນຣະບຽບແນວໃດນັ້ນສຸດແລ້ວແຕ່ຣະບຽບຂອງໂຮງຮຽນນັ້ນ, ສ່ວນໂຮງຮຽນພຣະເຢຊູນັ້ນແມ່ນພຣະອົງເອງເປັນຜູ້ວາງຣະບຽບໃຫ້ທຸກຄົນໝັ່ນອ່ານ, ສຶກສາ, ພິຈາຣະນາຕຶກຕອງ, ນຳເອົາຄຳສອນມາໃຊ້ໃນຊີວິດ ແຕ່ຈະບໍ່ສອບເສັງຈົນວັນນັ້ນມາເຖິງ. ເຮົາຈະເຫັນຕົວຢ່າງໃນໂຮງຮຽນວັນອາທິດທີ່ເຮົາໄດ້ຮຽນມາແຕ່ມື້ເຮົາເປັນຄຣິສຕຽນ ຈົນເຖິງທຸກວັນນີ້ ບໍ່ມີການສອບເສັງຈັກເທື່ອ ດັ່ງນັ້ນຈຶ່ງນັບໄດ້ວ່າໂຮງຮຽນວັນ ອາທິດເປັນໂຮງຮຽນດຽວໃນໂລກທີ່ບໍ່ມີການສອບເສັງໂດຍມະນຸດໜ້າໃດ ແຕ່ຈະສອບເສັງໂດຍພຣະເຈົ້າໃນຄາວສຸດທ້າຍ ດັ່ງນັ້ນເຮົາທັງຫລາຍຄວນໝັ່ນພຽນແລະມີຣະບຽບໃນການຮຽນເພື່ອຈະບໍ່ໄດ້ຢູ່ຫ້ອງອານຸບານອີກຕໍ່ໄປ ບາງທີເຮົາອາດຈະຖືກແສ້ເພາະຄ້າງຫ້ອງກໍເປັນໄດ້.

**<u>ສລູບ:</u>** ການຮຽນຮູ້ຈາກພຣະເຢຊູນັ້ນຈຳເປັນຈະຕ້ອງມີຣະບຽບຝ່າຍວິນຍານຈິດ, ພຣະເຢຊູໄດ້ສອນສາວົກຂອງພຣະອົງ ໃນຂະນະທີ່ເຂົາຕິດຕາມພຣະອົງເປັນເວລສາມປີກວ່ານັ້ນພຣະອົງໄດ້ສອນຝ່າຍວິນຍານຈິດ ດັ່ງນັ້ນໃຜກໍຕາມຫາກບໍ່ຮ່ຳຮຽນຢ່າງມີຣະບຽບທຸກມື້ທຸກວັນ ຄົນນັ້ນອາດຈະບໍ່ເປັນໄປຕາມທີ່ພຣະອົງຊົງຢາກໃຫ້ຜູ້ນັ້ນເປັນ. ເຮົາຄວນວາງຣະບຽບ ໃນການຮຽນຂອງເຮົາຄືນັກຮຽນທົ່ວໄປຫລືຄືບັນດາລູກຂອງພວກເຮົາ. ສັງເກດວ່າລູກເຮົາໄປໂຮງຮຽນຫ້າມື້ຕໍ່ອາທິດ ແລະເກືອບວ່າທຸກມື້ລູກເຮົາຈະມີ Home work ແລະອື່ນໆທີ່ໂຮງຮຽນຈັດໄວ້ໃຫ້ ແລະເຮົາເອງກໍພະຍາຍາມບອກລູກໃຫ້ເຮັດ Home work ແລະກິຈກັມຂອງເຂົາເຈົ້າເພື່ອລູກຈະຮຽນໄດ້. ພວກເຮົາກໍເຊັ່ນດຽວກັນໄປໂບດແຕ່ ວັນອາທິດເທົ່ານັ້ນແມ່ນບໍ່ພໍແນ່ນອນ ເຮົາຕ້ອງອ່ານພຣະຄັມພີ, ອ້ອນວອນເຝົ້າພຣະເຈົ້າທຸກໆມື້ຈຶ່ງຈະພໍ.

## <u>ຄຳຖາມ</u>

1. ລອງທວນຄິດຄືນຫລັງເບິ່ງວ່າໃນເວລາທ່ານເປັນຄຣິສຕຽນຄັ້ງແຣກກັບດຽວນີ້ທ່ານໄດ້ຈະເຣີນແດ່ບໍ່?

2. ສົມມຸດວ່າໂບດຂອງທ່ານຈະເລືອກຄົນມາເປັນເຖົ້າແກ່ ຫລືຜູ້ນຳທ່ານຄິດວ່າຄົນແນວໃດຈຶ່ງຈະເໝາະສົມ?

3. ສົມມຸດວ່າໂຮງຮຽນວັນອາທິດມີຈາກຫ້ອງ ປ1- ປ6 ທ່ານຈະຢູ່ໃນຫ້ອງໃດ? ເປັນຫຍັງ? ມີໃຜຄິດວ່າຄົນເອງຖືກຄ້າງຫ້ອງບໍ່?

4.ໂບດຂອງທ່ານເປີດໂອກາດໃຫ້ທ່ານຮຽນເປັນຜູ້ນຳບໍ່? ທ່ານຄິດແນວໃດກັບເຣື່ອງນີ້?

5. ໃນໂບດຂອງທ່ານມີຄຣິສຕຽນໃຫມ່ໆບໍ່? ທ່ານຈະຊ່ອຍລາວແນວໃດໃຫ້ກ້າວໜ້າ?

6. ເປັນຫຍັງໂປໂລຈຶ່ງເວົ້າກັບຄຣິສຕຽນເມືອງໂກຣິນໂທວ່າ ກິນອາຫານແຂງບໍ່ໄດ້ ແຕ່ຕ້ອງລ້ຽງດ້ວຍນ້ຳນົມ?

7. ໃນພຣະທັມເຮັບເຣີເວົ້າວ່າ ທ່ານທັງຫລາຍເປັນຄົນຫູໜັກ ໄດ້ຊ່ອຍກະຕຸ້ນໃຈຂອງທ່ານແນວໃດ?

*ດຣ. ທຸມພັນ ວົງສຸຣິດທ໌*

# ບົດຮຽນທີ 5
# ເປັນສາວົກຕ້ອງຮັບໃຊ້

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢຮັນ 13:3-17
**ພູມຫລັງຂອງພຣະຄັມພີ:** ໂຢຮັນ 13:1-17; 1ໂຢຮັນ 3:16-18
**ຈຸດສຳຄັນຂອງບົດຮຽນນີ້:** ການຮັບໃຊ້ຜູ້ອື່ນແມ່ນລັກສະນະຂອງຄຣິສຕຽນແທ້ຈິງ.
**ຄຳຖາມເພື່ອການຄົ້ນຄວ້າ:** ການຮັບໃຊ້ຜູ້ອື່ນແມ່ນທາງເລືອກເຮັດກໍໄດ້ບໍ່ເຮັດກໍໄດ້ບໍ່?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອສະແດງຄວາມເຊື່ອໂດຍການຍອມຮັບໃຊ້ຜູ້ອື່ນ.

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ທຸກຄົນທີ່ເຊື່ອໃນພຣະເຢຊູເປັນຜູ້ຮັບໃຊ້ພຣະເຈົ້າ.

## ຄຳນຳ

ພຣະເຢຊູຊົງສຳແດງການເປັນຄຣິສຕຽນທີ່ແທ້ຈິງໃຫ້ພວກສາວົກພຣະອົງໄດ້ເຫັນຄືພຣະອົງຍອມເຮັດການຕ່ຳສຸດໂດຍລ້າງຕີນພວກສາວົກ ເຊິ່ງບໍ່ເປັນການສົມຄວນທີ່ພຣະອົງຈະກະທຳເຊັ່ນນັ້ນ ແຕ່ພຣະອົງຍອມກໍເພື່ອສອນສາວົກຂອງພຣະອົງໃຫ້ເປັນຄົນຖ່ອມຕົວ. ເພາະວ່າພຣະອົງຊົງເອີ້ນສາວົກມາເພື່ອເຂົາຈະເຮັດຕາມແບບຢ່າງຂອງພຣະອົງໃນການຮັບໃຊ້ຄົນອື່ນ ໂດຍບໍ່ຄຳນຶງເຖິງກຽດຕິຍົດ ແລະພ້ອມທີ່ຈະເສັຍສະລະແມ່ນແຕ່ສັບສິນແລະຊີວິດຕົນເອງ.

## 1. ຍາກໃຈກໍຢ່າ (ໂຢຮັນ 13:1-5)

ພຣະເຢຊູຊົງຮັກສາວົກຂອງພຣະອົງນັບແຕ່ນີ້ພຣະອົງເອີ້ນພວກເຂົາມາຈາກການງານຝ່າຍໂລກ ຈົນເຖິງໃກ້ວັນສຸດທ້າຍແຫ່ງຊີວິດຂອງພຣະອົງຍັງຮັກ, ພຣະເຢຊູໄດ້ສະເດັດລົງມາໃນໂລກໃນຖານະພຣະບຸດຂອງພຣະເຈົ້າເພື່ອຈະນຳຄວາມລອດພົ້ນມາສູ່ມວນມະນຸດໃນໂລກ ມາເຖິງບັດນີ້ວັນເວລາຂອງພຣະອົງໃນໂລກນີ້ໃກ້ຈະໝົດແລ້ວ ແຕ່ພຣະອົງບໍ່ຢາກຈາກພວກສາວົກກັບຄືນໄປຫາພຣະບິດາທີ່ຟ້າສວັນເພາະຮັກເຂົາຫລາຍ ເຊິ່ງເວລານັ້ນກົງກັບເທສການປັສຄາລະນຶດເຖິງການຖວາຍລູກແກະອ່ອນ ພຣະອົງຈຶ່ງຕັດສິນໃນກິນປັສຄາຮ່ວມກັບສາວົກຄັ້ງສຸດທ້າຍ.

ໃນແລງວັນນຶ່ງໃນຂະນະທີ່ພຣະເຢຊູກຳລັງມີຄວາມທຸກໃຈ ເພາະພຣະອົງຊົງຮູ້ວ່າວັນເວລາຂອງພຣະອົງມາເຖິງແລ້ວ, ພຣະອົງໄດ້ກິນປັສຄາຮ່ວມກັບສາວົກຂອງພຣະອົງ. ປັສຄານີ້ແມ່ນຈາຣຶກເຖິງພຣະອົງຊົງວາຍພຣະຊົນເພື່ອຄວາມຜິດບາບຂອງຄົນທັງປວງ, ໃນສມັຍໂບຮານເພິ່ນໄດ້ຂ້າແກະນ້ອຍແລ້ວໄປເຜົາຖວາຍບູຊາແດ່ອົງພຣະຜູ້ເປັນເຈົ້າ ເພື່ອເປັນສັນຍາລັກວ່າແກະນ້ອຍນັ້ນໄດ້ຕາຍແທນຄວາມຜິດຂອງປະຊາຊົນໃນສມັຍນັ້ນ ແລະແກະນ້ອຍທີ່ເຜົາບູຊາໃນສມັຍກ່ອນນັ້ນແມ່ນໝາຍເຖິງຊີວິດຂອງພຣະເຢຊູນັ້ນເອງ. ໃນຂະນະທີ່ກິນປັສຄາໃນແລງວັນນັ້ນຊາຕານໄດ້ເຂົ້າສິງຢູ່ໃນໃຈຂອງຢູດາເປັນທີ່ຮຽບຮ້ອຍແລ້ວ, ມີຄວາມໝາຍວ່າມີຄົນບາບຄົນນຶ່ງນັ່ງກິນປັສຄາໃນຫ້ອງຮ່ວມກັບພຣະເຢຊູ.

ພຣະອົງຊົງຊາບວ່າມີຫລາຍຄົນໃນຫ້ອງນັ້ນຮັກພຣະອົງ ແລະຊົງຮູ້ວ່າໃນຈຳນວນຄົນທີ່ຮັກພຣະອົງນັ້ນກໍມີຄົນບາບຄົນນຶ່ງໃນຖ້າມກາງພວກເຂົາ, ຄວາມຈິງແລ້ວຢູດາເປັນຄົນດີ ແຕ່ຊາຕານໄດ້ເຂົ້າສິງໃນໃຈຂອງລາວເພື່ອໃຫ້ທໍຣະຍົດພຣະເຢຊູ, ເມື່ອຊາຕານສາມາດເຂົ້າສິງຄົນຂອງພຣະອົງໃນຂະນະທີ່ພຣະອົງຍັງຢູ່ທີ່ນັ້ນ ຫາກພຣະອົງບໍ່ຢູ່ຊາຕານຍິ່ງຈະມາລົບກວນໄພ່ພົນຂອງພຣະອົງຫລາຍປານໃດໜໍ, ນອກຈາກພຣະອົງຈະເປັນທຸກໃຈໃນການຈາກໄປຂອງພຣະອົງແລ້ວຍັງຕ້ອງມາທຸກໃຈເປັນຫ່ວງສາວົກ ຢ້ານວ່າຊາຕານຈະມາຫລອກລວງພວກເຂົາໃຫ້ຫລົງຄືໄດ້ຫລອກຄົນນຶ່ງໃນຈຳນວນສິບສອງຄົນທີ່ຢູ່ຮ່ວມກັນ ເຖິງປານນັ້ນພຣະອົງກໍບໍ່ໄດ້ປ້ອຍດ່າຢູດາແຕ່ຢ່າງໃດ. *"ພຣະອົງຊົງລຸກຂຶ້ນຈາກການຮັບປະທານອາຫານ ຊົງຖອດເຄື່ອງທົງຊັ້ນນອກອອກວາງໄວ້ ແລະຊົງເອົາຜ້າເຊັດຕົວມາຮັດແອວຂອງພຣະອົງພຣະອົງຊົງຖອກນ້ຳໃສ່ອ່າງແລ້ວຊົງຕັ້ງຕົ້ນລ້າງຕີນຂອງພວກສາວົກ ແລະເຊັດດ້ວຍຜ້າຮັດແອວນັ້ນ"* (ຂໍ້ 4-5). ງານລ້າງຕີນແມ່ນງານທີ່ພວກຄົນໃຊ້ໃນສັງຄົມຂອງຄົນຢິວມີໄວ້ສຳລັບລ້າງຕີນໃຫ້ເຈົ້ານາຍ ຫລັງຈາກເຈົ້ານາຍກັບຈາກການງານຂ້າງນອກ, ແລວວັນນີ້ພຣະເຢຊູຊົງຖ່ອມຕົວເປັນເໝືອນຄົນໃຊ້ ລ້າງຕີນໃຫ້ສາວົກຂອງພຣະອົງທຸກຄົນ.

**໒. <u>ສາວົກເຂົ້າໃຈຜິດ</u>** (ໂຢຮັນ13:6-11)

ພຣະເຢຊູຊົງລ້າງຕີນເທື່ອລະຄົນດ້ວຍຄວາມງຽບເຫງົາບໍ່ມີປາກຈັກຄົນ, ພວກສາສນາສາດພາກັນວິຈັຍວ່າພຣະເຢຊູມີແຕ່ຫຼັ່ງນ້ຳຕາໃນເວລານັ້ນ ແຕ່ພໍເມື່ອມາເຖິງຜຽນຂອງເປໂຕແລ້ວລາວກໍອົດທີ່ຈະເວົ້າບໍ່ໄດ້ ຈຶ່ງເອີ່ຽປາກຂື້ນວ່າ *"ນາຍເອີຍ, ທ່ານຈະລ້າງຕີນຂ້ານ້ອຍຫລື."* ອາດຈະມີຄວາມໝາຍວ່າທ່ານບໍ່ສົມຄວນຈະລ້າງຕີນຂ້ານ້ອຍ ຫລືຂ້ານ້ອຍບໍ່ໃຫ້ທ່ານລ້າງດອກເພາະຂ້ານ້ອຍເຫັນວ່າບໍ່ສົມຄວນ, ເປໂຕຍັງເຂົ້າໃຈວ່າພວກສາວົກຕ່າງຫາກຄວນຈະລ້າງຕີນພຣະເຢຊູ. ຫາກຈະເວົ້າຕາມຮີດຄອງປະເພນີແລ້ວສາວົກສົມຄວນຈະລ້າງຕີນພຣະເຢຊູດັ່ງທີ່ເປໂຕເຂົ້າໃຈ ແຕ່ພຣະເຢຊູໄດ້ເຮັດງານຕ່ຳຕ້ອຍນີ້ເພື່ອສອນໃຫ້ສາວົກເປັນຄົນຖ່ອມຕົວ ແລະການທີ່ພຣະເຢຊູເຮັດດັ່ງນີ້ເປັນການກະທຳທີ່ມະນຸດບໍ່ສາມາດເຂົ້າໃຈໄດ້ງ່າຍດາຍ ຍິ່ງໄປກວ່ານັ້ນພຣະເຢຊູຊົງຊາບຄວາມຄິດໃນໃຈຂອງເປໂຕທຸກປະການ ຈຶ່ງກ່າວແກ່ເປໂຕວ່າ *"ສິ່ງເຮົາເຮັດໃນເວລານີ້ທ່ານບໍ່ຮູ້ເຣື່ອງ ແຕ່ພາຍຫລັງທ່ານຈະເຂົ້າໃຈ"*. (ຂໍ້ 7ຂ).

ສັງເກດຄຳເວົ້າໃນຂໍ້ 7 ວ່າ *"ນາຍເອີຍ, ທ່ານຈະລ້າງຕີນຂ້ານ້ອຍຫລື"* ແລະ ຂໍ້ 8 *"ທ່ານຈະລ້າງຕີນຂອງຂ້ານ້ອຍບໍ່ໄດ້ຈັກເທື່ອ"* (ຂໍ້8ກ). ເປັນຄຳປະຕິເສດສອງເທົ່າເພາະເປໂຕບໍ່ເຂົ້າໃຈໃນສິ່ງທີ່ພຣະອົງຊົງກະທຳ ເພາະລາວໝັ້ນໃຈວ່າພຣະອາຈານບໍ່ສົມຄວນຈະລ້າງຕີນສາວົກ ພວກສາວົກຕ່າງຫາກສົມຄວນຈະລ້າງຕີນພຣະອາຈານ, ພຣະເຢຊູເວົ້າກັບເປໂຕອີກວ່າ *"ຖ້າເຮົາບໍ່ລ້າງທ່ານ ທ່ານຈະມີສ່ວນໃນເຮົາບໍ່ໄດ້"* (ຂໍ້ 8ຂ). ເມື່ອພຣະເຢຊູກ່າວເຊັ່ນນັ້ນເປໂຕຈຶ່ງຍອມໃຫ້ພຣະອົງລ້າງຕີນຂອງລາວ. ເວົ້າເຖິງການຊຳຣະລ້າງແລ້ວພຣະເຢຊູໄດ້ຊຳຣະລ້າງເຮົາທັງຫລາຍແລ້ວແຕ່ບໍ່ແມ່ນລ້າງຕີນ ແຕ່ແມ່ນລ້າງທັງຕົວຕົນແລະຈິດໃຈພາຍໃນ, ລ້າງເຮົາຈາກຄວາມຜິດບາບທັງສິ້ນໂດຍພຣະໂລຫິດອັນປະເສີດຂອງພຣະອົງເຮົາທັງຫລາຍຈຶ່ງມີສ່ວນໃນພຣະອົງ ຄືເຮົາຈະມີສ່ວນຮ່ວມທຸກໃນພາຣະກິດຂອງພຣະອົງໃນໂລກນີ້ ແລະເຮົາກໍຈະມີສ່ວນຮ່ວມສຸກກັບພຣະອົງໃນຟ້າສວັນເປັນນິດ.

ພຣະເຢຊູກ່າວກັບເປໂຕ *"ຖ້າເຮົາບໍ່ລ້າງທ່ານ ທ່ານຈະມີສ່ວນໃນເຮົາບໍ່ໄດ້"* (ຂໍ້ 8ຂ). ຄ້າຍກັບວ່າໃຫ້ເປໂຕເລືອກເອົາຈະໃຫ້ລ້າງແລ້ວມີສ່ວນໃນພຣະອົງ ຄືສ່ວນໃນແຜ່ນດິນສວັນ ຫລືບໍ່ໃຫ້ລ້າງແລ້ວກໍບໍ່ຕ້ອງມີສ່ວນອັນໃດອີກຕໍ່ໄປ, ຄຳເວົ້າຂອງພຣະເຢຊູຕອນນີ້ສຳຄັນຕໍ່ທຸກຄົນໃນໂລກປັຈຸບັນນີ້ ເພາະວ່າຄຳຖາມຄ້າຍຄືກັນນີ້ໄດ້ມາເຖິງທຸກຄົນໃນແຜ່ນດິນໂລກວ່າຈະມາເຊື່ອໃນພຣະອົງເພື່ອຈະໃຫ້ພຣະອົງຊຳຣະລ້າງຄວາມຜິດຄວາມບາບໃຫ້ໝົດສິ້ນ ແລ້ວມີສ່ວນໃນແຜ່ນດິນສວັນເປັນນິດບໍ່ ຫລືບໍ່ຍອມເຊື່ອພຣະອົງແລ້ວລົງບຶງໄຟນາຮົກ? ສຳລັບຂ້າພະເຈົ້າຈະເລືອກມາເຊື່ອແລ້ວມີສ່ວນໃນຣາຊແຜ່ນດິນສວັນດີກວ່າ, ພຣະເຢຊູກ່າວອີກວ່າ *"ທ່ານທັງຫລາຍບໍ່ສະອາດທຸກຄົນ"* (ຂໍ້ 11ຂ).

**໓. <u>ຮັບໃຊ້ຊຶ່ງກັນແລະກັນ</u>** (ໂຢຮັນ13:12-17)

ຫລັງຈາກພຣະເຢຊູໄດ້ລ້າງຕີນຂອງສາວົກທຸກຄົນແລ້ວ ພວກສາວົກຍັງພາກັນມິດງຽບເພື່ອລໍຖ້າຟັງຄຳອະທິບາຍຢູ່ ສ່ວນພຣະອົງກໍຊົງໃສ່ເຄື່ອງຊັ້ນນອກຂອງຕົນແລ້ວຕັ້ງຕົ້ນສົນທະນາກັບສາວົກດ້ວຍຄຳຖາມວ່າ *"ທ່ານທັງຫລາຍເຂົ້າໃຈໃນສິ່ງທີ່ເຮົາເຮັດກັບພວກທ່ານຫລື"* (ຂໍ້ 12ຂ). ພຣະເຢຊູບໍ່ໄດ້ຖາມວ່າທ່ານຮູ້ບໍ່ວ່າເຮົາເຮັດຫຍັງ? ເພາະສາວົກຮູ້ແລ້ວວ່າພຣະອົງຊົງລ້າງຕີນເຂົາ ແຕ່ພຣະອົງຖາມວ່າ ພວກທ່ານເຂົ້າໃຈວ່າເຮົາເຮັດຫຍັງບໍ່? ເປັນຫຍັງເຮົາຈຶ່ງເຮັດ? ໃນທຳນອງນີ້. ພຣະເຢຊູຈຳເປັນຕ້ອງອະທິບາຍໃຫ້ສາວົກເຂົ້າໃຈ ເພາະວ່າພຣະອົງຊົງເປັນພຣະອາຈານ, ສາວົກທັງໝົດກໍເປັນສິດ ດັ່ງນັ້ນພຣະອົງຈຶ່ງເລີ່ມຕົ້ນອະທິບາຍວ່າ *"ທ່ານທັງຫລາຍເອີ້ນເຮົາວ່າອາຈານ ແລະນາຍເຈົ້າ ພວກທ່ານເອີ້ນຖືກຕ້ອງແລ້ວ ເພາະເຮົາເປັນຢ່າງນັ້ນເຫດສັນນັ້ນເຮົາຜູ້ເປັນນາຍແລະອາຈານຂອງພວກທ່ານໄດ້ລ້າງຕີນຂອງທ່ານ ພວກທ່ານກໍຄວນລ້າງຕີນຂອງກັນແລະກັນເຫມືອນກັນ"* (ຂໍ້ 13-14). ພຣະອົງຊົງເປັນເຈົ້ານາຍ, ເປັນພຣະອາຈານທີ່ຮັກສາວົກຈົນໝົດຈິດໝົດໃຈ ຈຶ່ງຕັ້ງຕົນເປັນແບບຢ່າງຂອງຄວາມຮັກທີ່ສະແດງອອກເຖິງການປະຕິບັດ. ຜູ້ໃດທີ່ປະຕິເສດຮັບໃຊ້ຄົນອື່ນ ແມ່ນຄົນນັ້ນປະຕິເສດການຖ່ອມຕົວຂອງຕົນເອງ, ພຣະເຢຊູຜູ້ຊົງເປັນເຈົ້ານາຍທີ່ພວກສາວົກພາກັນນັບຖືໄດ້ຖ່ອມຕົວລົງມາຈາກຟ້າສວັນ ແຖມຍັງຖ່ອມຕົວລົງລ້າງຕີນສາວົກປະການໃດ ເຮົາທັງຫລາຍຜູ້ທີ່ເອີ້ນຕົນເອງວ່າເປັນຜູ້ເຊື່ອໃນພຣະອົງ ຄວນຮຽນເອົາແບບຢ່າງຂອງພຣະອົງທີ່ຊົງວາງແບບຢ່າງນີ້ ເຮົາຮູ້ວ່າບໍ່ມີເຈົ້ານາຍໃດໆໃນໂລກທີ່ເຮັດແບບຢ່າງນີ້ໄດ້ ມີແຕ່ພຣະເຢຊູເທົ່ານັ້ນ ທີ່ຍອມເປັນແບບຢ່າງທີ່ດີ ດັ່ງນັ້ນເຮົາຄວນຖ່ອມຕົວຮັບໃຊ້ຊຶ່ງກັນຕາມແບບຢ່າງທີ່ພຣະອົງວາງໄວ້ແລ້ວ. ຄຳວ່າ *ພວກທ່ານກໍຄວນລ້າງຕີນຂອງກັນແລະກັນເຫມືອນກັນ* ແປວ່າຖ່ອມຕົວລົງຍອມຮັບໃຊ້ຊຶ່ງກັນແລະກັນ. *"ດ້ວຍວ່າເຮົາໄດ້ວາງແບບຢ່າງໃຫ້ພວກທ່ານແລ້ວ ເພື່ອທ່ານຈະໄດ້ເຮັດເຫມືອນດັ່ງເຮົາໄດ້ເຮັດຕໍ່ພວກທ່ານແລ້ວ"* (ຂໍ້ 15).

ພຣະອົງບໍ່ໄດ້ລ້າງຕີນສາວົກເພື່ອເຂົາຈະເຮັດດີຕໍ່ກັນແລະກັນເທົ່ານັ້ນ, ພຣະປະສົງຂອງພຣະອົງແມ່ນໃຫ້ເຂົາເສີມຂຍາຍພຣະຣາຊກິດຂອງພຣະອົງໃນໂລກໃນຂະນະທີ່ພຣະອົງສະເດັດກັບໄປສວັນ ເພາະວ່າໃນໂອກາດຕໍ່ໄປພວກສາວົກກໍຈະອອກໄປປະກາດທົ່ວທຸກແຫ່ງຊຶ່ງຖືວ່າເປັນການຮັບໃຊ້ພຣະເຈົ້າ ແລະການຮັບໃຊ້ນັ້ນຜູ້ຮັບໃຊ້ຄວນຊ່ອຍເຫລືອຊຶ່ງກັນແລະກັນ, ພຣະອົງບໍ່ໄດ້ໝາຍຄວາມວ່າໃຫ້ພວກສາວົກໄປເລາະລ້າງຕີນໃຫ້ທຸກຄົນໃນໂລກ ແລະກໍບໍ່ໄດ້ໝາຍຄວາມວ່າຕ້ອງຍອມຮັບໃຊ້ຜູ້ຮັບໃຊ້ອື່ນໆເພື່ອຈະກາຍເປັນຜູ້ປະຕິບັດຢ່າງຄົບຖ້ວນ. ອີກປະການນຶ່ງແຕ່ລະຍຸກສມັຍບໍ່ຄືກັນ ຕົວຢ່າງສມັຍນັ້ນກັບສມັຍນີ້ການໃສ່ເກີບກໍບໍ່ຄືເກີບດຽວນີ້, ຍານພາຫະນະແຕ່ກ່ອນກໍມີແຕ່ໃຊ້ສັດລາກແກ່ເທົ່ານັ້ນ ບໍ່ມີເຄື່ອງກົນຈັກຄືດຽວນີ້, ດັ່ງນັ້ນການລ້າງຕີນອາດຈະຈຳເປັນສຳລັບສມັຍນັ້ນຫລາຍກວ່າ ສ່ວນສມັຍນີ້ອາດຈະມີບາງແຫ່ງທີ່ຫ່າງໄກຈາກຕົວເມືອງຫລືບ້ານນອກຍັງສົມຄວນຈະຫານ້ຳລ້າງຕີນໃຫ້ກັນກ່ອນຂຶ້ນເຮືອນ.

ທັງໝົດນີ້ມີຄວາມໝາຍວ່າຮັກພຣະເຈົ້າຕ້ອງຮັກມະນຸດ, ຮັກມະນຸດຕ້ອງຮັບໃຊ້ ຄຳວ່າຮັບໃຊ້ແມ່ນເລີ່ມແຕ່ການປະກາດເຣື່ອງແຜ່ນດິນສວັນຂອງພຣະເຈົ້າ, ເສັຽສະລະເວລາສ່ວນຕົວ, ເສັຽສະລະເຫື່ອແຮງ, ເສັຽສະລະຊັບສົມບັດສ່ວນຕົວ ຕລອດເຖິງຊີວິດກໍເປັນໄດ້ ເພາະພຣະອົງຊົງສະລະຊີວິດເພື່ອຄົນທັງປວງທີ່ເຊື່ອແລະໄວ້ວາງໃຈໃນພຣະອົງນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕລອດໄປເປັນນິດໃນຟ້າສວັນ. *"ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ຂ້ອຍໃຊ້ບໍ່ທ່ອນໃຫຍ່ກວ່ານາຍຂອງຕົນ ຜູ້ທີ່ຖືກໃຊ້ໄປບໍ່ທ່ອນໃຫຍ່ກວ່າຜູ້ໃຊ້ຕົນໄປນັ້ນຖ້າທ່ານທັງຫລາຍຮູ້ສິ່ງເຫລົ່ານີ້ແລະເຮັດຕາມທ່ານກໍເປັນສຸກ"* (ຂໍ້ 16-17). ຄຳວ່າເປັນສຸກໃນຕອນທ້າຍແປວ່າ ຮັບພຣະພອນ.

<u>**ຄຳຖາມ:**</u>

1. ວຽກທີ່ຄົນເຮັດໃນໂລກນີ້ທ່ານຄິດວ່າວຽກໃດເປັນວຽກທີ່ຕ່ຳທີ່ສຸດ? ເປັນຫຍັງ?

2. ຄົນໃດໃນໂບດທ່ານທີ່ທ່ານຄິດວ່າທ່ານສົມຄວນຈະຮຽນເອົາແບບໃນການຮັບໃຊ້ຂອງລາວ?

3. ໃນຍາມທີ່ພຣະເຢຊູທຸກໃຈພຣະອົງເຮັດແນວໃດ?

4. ທ່ານຄິດແນວໃດກັບການທີ່ພຣະເຢຊູລ້າງຕີນສາວົກ?

5. ເປັນຫຍັງພຣະເຢຊູຈຶ່ງລ້າງຕີນສາວົກ?

6. ເປັນຫຍັງເປໂຕຈຶ່ງບໍ່ຢາກໃຫ້ພຣະເຢຊູລ້າງຕີນລາວ? ພຣະເຢຊູວ່າແນວໃດລາວຈຶ່ງຍອມ?

7. ຄໍາວ່າ *ຖ້າເຮົາບໍ່ລ້າງທ່ານ ທ່ານຈະມີສ່ວນໃນເຮົາບໍ່ໄດ້* ສະທ້ອນໃຈທ່ານແນວໃດ?

8. ຄໍາວ່າ *ພວກທ່ານກໍຄວນລ້າງຕີນຂອງກັນແລະກັນເຫມືອນກັນ* ໝາຍຄວາມວ່າແນວໃດ?

*ດຣ. ທຸມພັນ ວົງສຸຣິດທ໌*

# ບົດຮຽນທີ 6
# ຮຽນຮູ້ໃນການຖວາຍ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** 2 ໂກຣິນໂທ 8:1-9; 9:6-8

**ພູມຫລັງຂອງພຣະຄັມພີ:** 2 ໂກຣິນໂທ ບົດທີ 8 ຫາ ບົດທີ 9

**ຈຸດສໍາຄັນຂອງບົດຮຽນນີ້:** ການຖວາຍຕົວໃຫ້ແກ່ພຣະເຈົ້າ ແມ່ນການມອບຕົວເອງ ແລະວັດຖຸສິ່ງຂອງທີ່ມີຢູ່ ໃຫ້ແກ່ຄວາມຈໍາເປັນຂອງຄົນອື່ນ ແລະເພື່ອຄວາມກ້າວຫນ້າຂອງຂ່າວປະເສີດ ຂອງພຣະເຈົ້າ

**ຄໍາຖາມເພື່ອຄົ້ນຄວ້າ:** ແມ່ນຫຍັງທີ່ຄຣິສຕຽນຄວນຖວາຍ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະໄດ້ຮຽນຮູ້ວ່າການຖວາຍຢ່າງແທ້ຈິງຄືຫຍັງ? ມີຜົນສະທ້ອນຕໍ່ຊີວິດຢ່າງໃດ?

**ຄົ້ນຄວ້າ ພ້ອມກັບການປະຕິບັດ**

- ຢັ້ງຢືນວ່າພຣະຄັມພີມີອໍານາດໃນການນໍາພາຊີວິດ ແລະໃນການປ່າວປະກາດ
- ແບ່ງປັນຂ່າວປະເສີດໃຫ້ແກ່ທຸກໆຄົນ
- ເສີມຂຍາຍການເຕີບໃຫ່ຍຂຍາຍຕົວຢ່າງບໍ່ຢຸດຢັ້ງ
- ເຊື່ອຟັງແລະຮັບໃຊ້ພຣະເຢຊູດ້ວຍຮ່າງກາຍ, ຈິດວິນຍານ, ແລະຄວາມຄິດຕ່າງໆ

## ຄໍານໍາ

ອາຈານທີ່ຄຣິສຕະຈັກແຫ່ງນຶ່ງ ໄດ້ຂໍຮ້ອງໃຫ້ສະມາຊິກທຸກຄົນຊ່ວຍໃນການໃຊ້ຈ່າຍຂອງຄຣິສຕະຈັກ. ສະຕຣີຄົນນຶ່ງໄດ້ຂຽນໃບສັ່ງຈ່າຍຈາກທະນາຄານຂອງລາວ 50 ໂດລ້າ ແລ້ວກໍຍື່ນໃຫ້ອາຈານແລະຖາມວ່າທໍ່ນີ້ພໍບໍ່? ອາຈານກໍຕອບວ່າ "ຖ້າເປັນຄວາມພໍໃຈຂອງເຈົ້າ."

ສະຕຣີຄົນນັ້ນຄິດຢູ່ຄາວນຶ່ງແລ້ວກໍຖາມເອົາໃບສັ່ງຈ່າຍນັ້ນຄືນ. ສອງວັນຕໍ່ມາລາວໄດ້ເຂົ້າມາຫາອາຈານອີກພ້ອມດ້ວຍໃບສັ່ງຈ່າຍ 5,000 ໂດລ້າ ແລະຖາມເຫມືອນກັນອີກວ່າ "ນີ້ແມ່ນຂອງຂວັນເດີ້, ຄົງຈະພຽງພໍຕີນໍ?" ອາຈານກໍຕອບວ່າ "ຖ້າເປັນຄວາມພໍໃຈຂອງເຈົ້າ."

ສັດຕຣີຄົນນັ້ນກໍຂໍເອົາໃບສັ່ງຈ່າຍນັ້ນຄືນອີກ ແລະຕໍ່ມາກໍໄດ້ເອົາໃບສັ່ງຈ່າຍ 50,000 ໂດລ້າ ຄືນມາໃຫ້ອາຈານອີກ. ໃນຂະນະທີ່ຍື່ນໃບສັ່ງຈ່າຍໃຫ້ອາຈານນັ້ນລາວກໍເວົ້າອອກໄປວ່າ " ຫລັງຈາກທີ່ໄດ້ອະທິຖານແລ້ວ, ຂ້ານ້ອຍເຫັນວ່ານີ້ຄືຂອງປະທານທີ່ຂ້ານ້ອຍໄດ້ຮັບ, ແລະຂ້ານ້ອຍກໍຍິນດີໃຫ້ດ້ວຍຄວາມເຕັມໃຈ."

ໂປໂລໄດ້ຫນູນໃຈພີ່ນ້ອງຄຣິສຕຽນຊາວໂກຣິນໂທວ່າຈົ່ງຖວາຍດ້ວຍຄວາມພໍໃຈແລະໃຫ້ດ້ວຍການຮູ້ບຸນຄຸນ. ຍັງບໍ່ພໍທໍ່ນັ້ນ ເພິ່ນຍັງໄດ້ໃຫ້ໂອກາດເຂົາເຈົ້າຖວາຍໃນຍາມຕ້ອງການດ່ວນແລະໃນຍາມຂັດສົນດ້ວຍ. ເພິ່ນໄດ້ຮຽກຮ້ອງໃຫ້ມີການສະເລັ່ຽກັນໃນຄຣິສຕະຈັກເຂດຢູໂຣບ ແລະຄຣິສຕະຈັກເຂດເອເຊັຍ ເພື່ອຈະໄດ້ສົ່ງໄປຊ່ວຍເຫລືອຄຣິສຕຽນທີ່ທຸກ

ຍາກຢູ່ກຸງເຢຣູຊາເລັມທີ່ເຂົາເຈົ້າກຳລັງມີບັນຫາທາງດ້ານເສຖກິດ, ການອຶດຫິວ ແລະການຖືກຂົ່ມເຫັງ. (1ໂກຣິນໂທ 16:1-4)

ໂປໂລໄດ້ໜູນໃຈໃຫ້ຄຣິສຕຽນຊາວໂກຣິນໂທຖວາຍດ້ວຍໃຈກວ້າງຂວາງ ແລະດ້ວຍການຂອບພຣະຄຸນ. ເພິ່ນຍັງໄດ້ໃຫ້ໂອກາດແກ່ພວກເຂົາເຈົ້າໃນການຖວາຍພິເສດຄືເວລາຫຍຸ້ງຍາກຂັດສົນ. ເພິ່ນໄດ້ຮິບໂຮມຂອງຖວາຍຈາກຄຣິສຕະຈັກເພື່ອນຳໄປຊ່ວຍຊາວຄຣິສຕຽນໃນກຸງເຢຣູຊາເລັມ ຊຶ່ງໄດ້ຮັບຄວາມຫຍຸ້ງຍາກໃນດ້ານເສຖກິດ, ແລະຖືກການຂົ່ມເຫັງ. (1 ໂກຣິນໂທ 16:1-4) ການສະເລັ່ຽການຊ່ວຍເຫລືອນີ້ ແມ່ນການໃຫ້ໂອກາດທັງຄົນຢິວແລະຄົນຕ່າງຊາດ; ທັງຄົນເກົ່າແລະຄົນໃໝ່ໄດ້ມີສ່ວນຮ່ວມໃນການປ່າວປະກາດເຣື່ອງຂອງພຣະເຈົ້າ.

ການສະເລັ່ຽການຊ່ວຍເຫລືອນີ້ແມ່ນດີກ່ວາການເຮັດການກຸສົນຫລາຍໄດ້, ເພາະວ່າການສະເລັ່ຽການຊ່ວຍເຫລືອນີ້ໄດ້ຊ່ວຍການເສີມສ້າງໃຫ້ຜູ້ທີ່ມີຄວາມເຊື່ອໄດ້ກ້າວໜ້າ.

## 1. <u>ໜູນໃຈໂດຍການໃຊ້ຜູ້ທີ່ເຊື່ອເປັນຕົວຢ່າງ</u> (2 ໂກຣິນໂທ 8:1-7)

ໂປໂລໄດ້ຍົກຄຣິສຕະຈັກໃນແຂວງມາເກໂດເນັຽມາເປັນຕົວຢ່າງ. ຄຣິສຕະຈັກເຫລົ່ານີ້ເປັນຄຣິສຕະຈັກທີ່ບໍ່ໃຫຍ່ ແລະກໍບໍ່ເປັນຄົນທີ່ຮັ່ງມີປານໃດ. ຊາວແຂວງມາເກໂດເນັຽໄດ້ຮັບຄວາມທຸກຍາກແລະການທົດລອງຢ່າງ "ແສນສາຫັດ" ໝາຍຄວາມວ່າໜັກຫລາຍ, ຂາດເຂີນຫລາຍຢ່າງ, ຊ້ຳບໍ່ພໍຍັງມີຄົນຕາມມາລົບກວນອີກ. ເຖິງປານນັ້ນເຂົາເຈົ້າຍັງມີຄວາມຍິນດີໃນການເປັນຄຣິສຕຽນ ແລະບໍ່ຍອມລົດລະໃນການຖວາຍໃຫ້ທານດ້ວຍໃຈກວ້າງຂວາງນີ້.

ການຖວາຍຂອງຄຣິສຕຽນ ບໍ່ແມ່ນສຳລັບແຕ່ຄົນທີ່ຮັ່ງມີເທົ່ານັ້ນທີ່ສາມາດເຮັດໄດ້ ແຕ່ເປັນກົດລະບຽບຂອງຄົນທີ່ມີຄວາມເຊື່ອທີ່ທຸກຄົນຄວນປະຕິບັດ ພ້ອມທັງເປັນການຖວາຍກຽດແກ່ພຣະເຈົ້າດ້ວຍ.

ຊາວແຂວງມາເກໂດເນັຍໄດ້ພາກັນຖວາຍ ຕາມຄວາມສາມາດ ແລະເກີນຄວາມສາມາດ ຊຶ່ງເກີນຄວາມຄາດໝາຍທີ່ໂປໂລໄດ້ຄາດໝາຍໄວ້ລ່ວງໜ້າ. ເພິ່ນບໍ່ໄດ້ບັງຄັບພວກເຂົາເຈົ້າໃຫ້ຖວາຍ ແຕ່ກັບໃຫ້ພວກເຂົາເຈົ້າຖວາຍດ້ວຍຄວາມສມັກໃຈ. ພວກພີ່ນ້ອງເຫລົ່ານີ້ບໍ່ແມ່ນຖວາຍແຕ່ຍາມມີການຮຽກຮ້ອງເທົ່ານັ້ນ ພວກເຂົາເຈົ້າໄດ້ຖວາຍສະສົມໄວ້ເພື່ອຊ່ວຍຄົນທຸກຍາກໃນທົ່ວທຸກບ່ອນດ້ວຍ.

ຖ້າຈະສົມທຽບກັບຊາວເມືອງໂກຣິນໂທແລ້ວ ເຫັນວ່າມີຄວາມແຕກຕ່າງກັນຫລາຍ. ໂປໂລຢາກໃຫ້ໂບດແຫ່ງນີ້ເອົາໂບດມາເກໂດເນັຽເປັນຕົວຢ່າງໃນການຖວາຍ.

ເຫດຜົນທີ່ຄຣິສຕະຈັກໃນແຂວງມາເກໂດເນັຽພາກັນເຮັດໄດ້ກໍຄື ພວກເຂົາເຈົ້າມີສາຍຕາໄກເຫັນຄົນອື່ນມີຄວາມສຳຄັນໄດ້ພາກັນຖວາຍຕົວໃຫ້ກັບພຣະເຈົ້າກ່ອນ ແລ້ວກໍພ້ອມຈິດພ້ອມໃຈກັນເຮັດຕາມນ້ຳພຣະທັຍຂອງພຣະເຈົ້າ. (2 ໂກຣິນໂທ 8:5) ພວກເຂົາເຈົ້າເຂົ້າໃຈວ່າທຸກຢ່າງເປັນຂອງພຣະເຈົ້າ, ຊັບສົມເງິນຄຳທຸກຢ່າງກໍເປັນຂອງພຣະເຈົ້າດ້ວຍ. ຖ້າທຸກຄົນຫາກເຂົ້າໃຈຢ່າງນີ້ການຖວາຍຄືນໃຫ້ແກ່ພຣະເຈົ້າກໍບໍ່ມີຫຍັງທີ່ຈະເປັນການຫຍຸ້ງຍາກ.

ຄຣິສຕຽນຊາວໂກຣິນໂທກໍມີບໍຣິບູນດ້ວຍຄວາມເຊື່ອ, ບໍຣິບູນດ້ວຍຖ້ອຍຄຳ, ບໍຣິບູນດ້ວຍວິຊາຄວາມຮູ້, ບໍຣິບູນດ້ວຍຄວາມຂຍັນຂັນແຂງແລະບໍຣິບູນດ້ວຍຄວາມຮັກ ແຕ່ພວກເຂົາຍັງຂາດບາງຢ່າງທີ່ພວກເຂົາເຈົ້າໄດ້ສັນຍາຕໍ່ພຣະເຈົ້າໄວ້. ໂປໂລໄດ້ສົ່ງຕີໂຕໄປຫາເຂົາເຈົ້າເພື່ອໜູນໃຈໃນການນີ້ ເພື່ອພວກເຂົາເຈົ້າຈະໄດ້ຄົບຖ້ວນໃນການເປັນຄຣິສຕຽນ.

## 2. **ໜູນໃຈໂດຍອີງໃສ່ພຣະເຢຊູຄຣິດເປັນຕົວຢ່າງ** (2 ໂກຣິນໂທ 8:8-9)

ໂປໂລຢາກສະແດງຄວາມຈິງໃຈວ່າລາວບໍ່ໄດ້ມີເຈຕນາທີ່ຈະບັງຄັບບັນຊາໃຜຜູ້ນຶ່ງແຕ່ລາວຢາກໃຫ້ທຸກຄົນຮູ້ຈັກບຸນຄຸນແລະໄດ້ປະກອບສ່ວນໃນການກຸສົນຂອງພຣະເຈົ້າ.

ການຖວາຍແມ່ນໝາກຫົວໃຈຂອງຂ່າວປະເສີດ. ແມ່ນຕົວຢ່າງອັນດີເລີດທີ່ພຣະເຢຊູຄຣິດໄດ້ວາງແບບຢ່າງໃຫ້ແກ່ພວກເຮົາ. ພຣະອົງຊຶ່ງຮັ່ງມີພຣະອົງກໍຍັງຍອມກາຍມາເປັນຄົນຍາກຈົນ ແລະຖວາຍຕົນເອງເພື່ອຄົນອື່ນ. ນີ້ແຫລະຄືຂ່າວປະເສີດອັນແທ້ຈິງ.

ສະມາຊິກຄຣິສຕະຈັກຄົນນຶ່ງ ເມື່ອອາຈານເທສນາກ່ຽວກັບເຣື່ອງເງິນເທື່ອໃດລາວຈະບໍ່ພໍໃຈທຸກເທື່ອບໍ່ມານະມັສການພຣະເຈົ້າເຖິງສາມສີ່ອາທິດ. ລາວບອກວ່າ "ເທສນາກ່ຽວກັບເຣື່ອງຂ່າວປະເສີດພັ້ນເດ໊, ເປັນຫຍັງຈຶ່ງເວົ້າແຕ່ເຣື່ອງເງິນແທ້?" ເມື່ອໄດ້ຍິນຄຳເວົ້າດັ່ງນີ້ ກໍເຂົ້າໃຈແລ້ວວ່າລາວຍັງບໍ່ທັນເຂົ້າໃຈຂ່າວປະເສີດເທື່ອ. ເພາະວ່າຂ່າວປະເສີດຈະກ່າວວ່າ " ເພາະວ່າພຣະເຈົ້າຊົງຮັກໂລກ ຈົນໄດ້ປະທານ...." ການໃຫ້ (ການຖວາຍ) ຄືໝາກຫົວໃຈອັນສຳຄັນຂອງຂ່າວປະເສີດຊຶ່ງພຣະເຢຊູຄຣິດໄດ້ວາງແບບຢ່າງໄວ້ໃຫ້ແກ່ພວກເຮົາ.

## 3. **ໜູນໃຈໂດຍອີງໃສ່ທັມມະຊາດເປັນຕົວຢ່າງ** (2 ໂກຣິນໂທ 9:6-8)

ໂປໂລໄດ້ຍົກເອົາທັມມະຊາດການຫວ່ານເມັດພືດແລະການເກັບກ່ຽວມາເປັນຕົວຢ່າງ ເພື່ອຕັກເຕືອນຊາວໂກຣິນໂທໃນການສະສົມຊັບສົມບັດ. "ຄົນທີ່ຫວ່ານພຽງເລັກນ້ອຍກໍເກັບກ່ຽວພຽງເລັກນ້ອຍ ແລະຄົນທີ່ຫວ່ານຫລາຍກໍເກັບກ່ຽວໄດ້ຫລາຍ" (9:6) ສົມມຸດວ່າພວກເຮົາປູກຕົ້ນໄມ້ສາມຕົ້ນພວກເຮົາກໍຈະໄດ້ຮັບໝາກຜົນສົມກັບສາມຕົ້ນ. ຖ້າພວກເຮົາປູກຕົ້ນໄມ້ຮ້ອຍຕົ້ນພວກເຮົາກໍຈະໄດ້ຮັບຜົນສົມກັບຮ້ອຍຕົ້ນ. ນີ້ເປັນຄວາມຈິງ, ຖ້າການປູກຕົ້ນໄມ້ເປັນຄວາມຈິງ, ທາງຝ່າຍຈິດວິນຍານກໍເປັນຄວາມຈິງດ້ວຍ.

ນີ້ກໍບໍ່ໄດ້ໝາຍຄວາມວ່າເວລາພວກເຮົາຖວາຍເງິນຫລາຍແລ້ວ ພຣະເຈົ້າຈະໃຫ້ເງິນພວກເຮົາຄືນຢ່າງຫລວງຫລາຍ. ເງິນຈຳນວນນີ້ຈະນຳໄປປ່າວປະກາດ ເພື່ອນຳຈິດວິນຍານຂອງຄົນທັງຫລາຍໃຫ້ເຂົ້າມາມີສ່ວນຮ່ວມໃນຣາຊອານາຈັກຂອງພຣະເຈົ້າ ແລະຈະນຳໄປຊ່ວຍຄົນທຸກຄົນຈົນໃນທົ່ວໂລກ.

ການໃຫ້ທານຂອງຄຣິສຕຽນບໍ່ແມ່ນປ່ອນເງິນລົງໄປໃນຂັນຖວາຍແລ້ວກໍແລ້ວໄປ. ການໃຫ້ທານຂອງຄຣິສຕຽນແມ່ນການໃຫ້ທີ່ມີເປົ້າໝາຍ, ໂປໂລກ່າວວ່າ "ຈົ່ງໃຫ້ຕາມທີ່ຕົນຄິດໝາຍໄວ້ໃນໃຈ ບໍ່ແມ່ນໃຫ້ດ້ວຍຄວາມຄິດເສັຽດາຍຫລືດ້ວຍຂືນໃຈໃຫ້" (9:7)

ຄວາມຊື່ນຊົມຍິນດີຈະເກີດມີໄດ້ກໍຕໍ່ເມື່ອພວກເຮົາຮູ້ວ່າເຮົາໄດ້ຖວາຍສິ່ງໃດສິ່ງນຶ່ງໃຫ້ແກ່ຜູ້ມີພຣະຄຸນ ແລະໃຫ້ດ້ວຍໃຈກວ້າງຂວາງແລະໃຫ້ດ້ວຍການມີເປົ້າໝາຍ.

ພວກເຮົາຈະບໍ່ມີຄວາມສຸກຖ້າພວກເຮົາຫາກຖືກບັງຄັບຫລືເຮັດດ້ວຍຄວາມຈຳເປັນ. ການຖວາຍຢ່າງນີ້ແມ່ນເຮັດໃຫ້ພວກເຮົາໃຈຮ້າຍ, ຈົ່ມ, ແລະບໍ່ເປັນສຸກ.

## **ສິ່ງທີ່ຄວນນຳໄປກະທຳ:**

ທ່ານໄດ້ໃຫ້ດ້ວຍການຂອບພຣະຄຸນແລ້ວຫລືຍັງ? ພຣະເຈົ້າໄດ້ປະທານໃຫ້ທ່ານຫລາຍວິທີທາງດ້ວຍກັນ, ເຫມືອນພີ່ນ້ອງຊາວໂກຣິນໂທ, ທ່ານຍັງຂາດບາງຢ່າງຢູ່. ຊີວິດຄຣິສຕຽນຈະບໍ່ສົດຊື່ນລາບລື່ນໄດ້ຖ້າຫາກຍັງຂາດການຖວາຍ. ການໃຫ້ບໍ່ແມ່ນເລີ້ມຕົ້ນຢູ່ທີ່ກະເປົາເງິນ ແຕ່ແມ່ນການເລີ້ມຕົ້ນຢູ່ທີ່ການຖວາຍຕົວ. ຖ້າມີການຖວາຍຕົວແລ້ວທຸກສິ່ງກໍຈະເປັນໄປໄດ້.

ສະນັ້ນຈົ່ງໃຫ້, ແຕ່ຢ່າໃຫ້ດ້ວຍຝືນໃຈ, ຈົ່ງໃຫ້ດ້ວຍການຮູ້ບຸນຄຸນວ່າພຣະເຢຊູໄດ້ໃຫ້ພວກເຮົາອັນໃດແດ່?

<u>ຄໍາຖາມ</u>

1. ຈົ່ງພິຈາຣະນາຄວາມເວົ້າຕອນນີ້: ການໃຫ້ທານແບບຄຣິສຕຽນແມ່ນບໍ່ກ່ຽວກັບຈໍານວນວ່າຂ້ອຍຕ້ອງໃຫ້ຫລາຍຫລືຫນ້ອຍ. ທ່ານເຫັນພ້ອມຫລືບໍ່? ເປັນຫຍັງຈຶ່ງເຫັນພ້ອມ? ຫລືເປັນຫຍັງຈຶ່ງບໍ່ເຫັນພ້ອມ?

2. ທ່ານເຫັນວ່າການຖວາຍຄວນຈະເປັນສິ່ງທີ່ຍິນດີ ຫລືຄວນຈະເປັນສິ່ງທີ່ຝືນໃຈ?

3. ພິຈາຣະນາການຖວາຍຂອງທ່ານ, ທ່ານເຄີຍຖວາຍເປັນປະຈໍາບໍ່? ຫລືເປັນຣະບົບບໍ່? ຫລືໃຫ້ໃນເວລາມີຂອງເສດເຫລືອບໍ່?

4. ທ່ານຄິດວ່າຈະເປັນຢ່າງໃດຖ້າຄຣິສຕຽນຫາກຢຸດການຖວາຍໃຫ້ໂບດຂອງຕົວເອງ? ທາງດ້ານຈິດວິນຍານເດຈະມີຫຍັງເກີດຂຶ້ນ?

5. ຈະມີຫຍັງເກີດຂຶ້ນຕໍ່ໂບດຂອງທ່ານເມື່ອທຸກຄົນຫາກບໍ່ຖວາຍເຫມືອນກັນກັບທ່ານ?

6. ພີ່ນ້ອງຊາວໂກຣິນໂທມີຄວາມຮັບຜິດຊອບຢ່າງໃດຕໍ່ຄໍາຮຽກຮ້ອງໃຫ້ຖວາຍຂອງໂປໂລ? ທ່ານເດທ່ານຈະມີຄວາມຮັບຜິດຊອບຢ່າງໃດ?

*ດຣ. ບຸນໂຮມ ພົມມະຈັນ*

## <u>ບົດຮຽນທີ 7</u>

## <u>ຝຶກຫັດໃນເວລານະມັສການ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ມາຣະໂກ 1:35-36; ລູກາ 4:16; 11:1-4; ຟີລິບປອຍ 4:6

**<u>ພູມຫລັງຂອງພຣະຄັມພີ:</u>** ມາຣະໂກ 1:35-36; ລູກາ 4:16; 11:1-4; ຟີລິບປອຍ 4:6

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ຕົວຢ່າງ ແລະຄຳສອນຂອງອົງພຣະເຢຊູທີ່ຄຣິສະຕຽນຄວນນະມັສການໃນທາງສ່ວນຕົວ ແລະທາງສ່ວນຣວມ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ນະມັສການມີຄວາມສຳຄັນຕໍ່ທ່ານຢ່າງໃດ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຈະຖວາຍຕົວເອງໃນການນະມັສການທາງສ່ວນຕົວ ແລະທາງສ່ວນຣວມ.

### <u>ບົດນຳ</u>

ອົງພຣະເຢຊູໄດ້ນະມັສການທາງສ່ວນຕົວແລະໃນທາງສ່ວນຣວມ. ຍິ່ງເປັນກວ່ານັ້ນ ພຣະອົງໄດ້ສອນເຖິງວິທີນະມັສການຢ່າງຖືກຕ້ອງ. ຕົວຢ່າງຂອງອົງພຣະເຢຊູໄດ້ສອນໃຫ້ຄຣິສະຕຽນເອົາໄປໃຊ້ໃນການນະມັສການໃນທາງສ່ວນຕົວ ແລະທາງສ່ວນຣວມ.

ໃນຫລາຍປີມາແລ້ວຂ້າພະເຈົ້າໄດ້ຍິນປໂຍກ <u>ສົງຄາມນະມັສການ.</u> ປໂຍກນີ້ໄດ້ເວົ້າເຖິງການໂຕ້ຖຽງກັນເຖິງແບບແລະວິທີການນະມັສການຢ່າງຖືກຕ້ອງ. ບາງພວກໄດ້ພະຍາຍາມຍຶດເອົາທຳນຽມທີ່ຕົນເອງເຄີຍເຮັດມານັ້ນຄືໃຫ້ຮ້ອງເພງຕາມປຶ້ມເພງ ໃຊ້ອໍເກນ. ບາງພວກໃຊ້ດົນຕີແບບຊາວໜຸ່ມຖືມາ ກີຕາ ແລະກອງ. ບາງພວກຕ້ອງການມີເສຣີພາບຈາກຕຳຣາໃນປຶ້ມ. ຢ່າງໃດກໍດີ ໃນເມື່ອພະຍາຍາມຈະເຂົ້າໃຈເຖິງປໂຍກທີ່ວ່າ <u>ສົງຄາມນະມັສການ</u> ນັ້ນກໍເຫັນວ່າສັບສົນພໍສົມຄວນ.

ຂໍໃຫ້ທ່ານຄິດວ່າເຖິງຕອນທ່ານມີປະສົບການດີໃນເວລານະມັສການ. ຫລາຍປີມາແລ້ວຂ້າພະເຈົ້າໄດ້ໄປຮັບໃຊ້ຕ່າງປະເທດ ຢູ່ປະເທດບຣາຊຽວ, ຄຣິສຕະຈັກທີ່ຂ້າພະເຈົ້າເທສນານັ້ນໄດ້ໃຊ້ກອງ ແລະກີຕາ. ມີຄົນເປັນຈຳນວນຫລາຍໄດ້ແຫ່ຍົ້ກັນຮ້ອງເພງຈາກຈິດໃຈ. ພວກເຂົາໄດ້ອ້ອນວອນດ້ວຍຄວາມຈິງໃຈ ແລະຍົກມືຂຶ້ນເພື່ອສັຣເສີນພຣະເຈົ້າ. ແນ່ນອນ ພຣະວິນຍານຂອງພຣະເຈົ້າໄດ້ສະຖິດຢູ່ໃນບ່ອນນັ້ນຢ່າງແທ້ຈິງ. ພວກເຂົາຮູ້ວິທີນະມັສການ ບໍ່ເປັນພຽງສຽງເທົ່ານັ້ນ ແຕ່ຈາກທຸກໆພາກສ່ວນຂອງຮ່າງກາຍ. ຂ້າພະເຈົ້າຄິດໃນໃຈວ່າ, <u>ນີ້ແຫລະເປັນການສົມຄວນທີ່ຈະນະມັສການພຣະເຈົ້າ.</u>

ໃນບໍ່ນານມານີ້ ຂ້າພະເຈົ້າມີໂອກາດໄປປະເທດອັງກິດ. ເວລາຢູ່ທີ່ນັ້ນຂ້າພະເຈົ້າໄດ້ໄປນະມັສການທີ່ເຮັດຕາມທຳນຽມຊຶ່ງພວກເຂົາເຈົ້າເຄີຍປະຕິບັດກັນມາເປັນເວລາພັນກວ່າປີ. ທີ່ຄຣິສຕະຈັກມີເພດານສູງໝາຍເຖິງຄວາມຍິ່ງໃຫຍ່ຂອງພຣະເຈົ້າ. ຝາກໍເຮັດໃຫ້ມີສຽງກ້ອງເວລາດົນຕີເສບຂຶ້ນມາ. ລາຍການນະມັສການກໍໄດ້ພິມອອກໄວ້ເປັນຢ່າງດີ. ທຸກຄົນທີ່ໄປນະມັສການກໍໄດ້ອ່ານຈາກ <u>ປຶ້ມຄູ່ມືອ້ອນວອນ.</u> ພວກນັກຮ້ອງໄດ້ຮ້ອງເພງຈາກປຶ້ມຄຳເພງ ບໍ່ມີຜູ້ໃດຍົກຍ້າຍໄປມາທາງໃດເວລາສັ່ງໃຫ້ຄຸເຂົ່າລົງ. ແນ່ນອນທຸກສິ່ງຢ່າງເຫັນວ່າເປັນຕາງົດງາມ ແລະຮູ້ສຶກວ່າພຣະເຈົ້າຊົງສະຖິດຢູ່ຖ້າມກາງທີ່ນັ້ນ. ຂ້າພະເຈົ້າຄິດວ່ານີ້ແຫລະ, <u>ການນະມັສການຄວນເປັນໄປຢ່າງນີ້.</u>

ຂ້າພະເຈົ້າເຫັນວ່າຕົນເອງສາມາດນະມັສການພຣະເຈົ້າໄດ້ທັງສອງລະບົບ. ຄຳຖາມມີຢູ່ວ່າ ອັນໃດເປັນການນະມັສການອັນແທ້ຈິງ? ພວກເຮົາຈະຮູ້ເຫັນວ່າການນະມັສການທີ່ແທ້ຈິງໄດ້ຢ່າງໃດ? ຈະຮູ້ໄດ້ໃນເມື່ອເວລາເຮົາຮ້ອງເພງຖວາຍ, ອ້ອນວອນ, ຖວາຍບູຊາ, ແລະເທສນາ. ນະມັສການແມ່ນການເຮັດຕໍ່ພຣະເຈົ້າ ແລະເພື່ອພຣະອົງແຕ່ອົງດຽວ.

1. <u>ອົງພຣະເຢຊູໄດ້ນະມັສການສ່ວນຕົວ</u> (ມາຣະໂກ 1:35-36)

ມາຣະໂກໄດ້ເວົ້າເຖິງການກະທຳຂອງພຣະເຢຊູ, ເວລາເພິ່ນຮ້ອງເອົາພວກສາວົກ, ໄລ່ຜີຮ້າຍອອກຈາກຊາຍຄົນນຶ່ງ, ປົວແມ່ເມັຽຂອງເປໂຕ, ແລະຊ່ອຍຝູງຊົນເວລາພວກເຂົາມາຫາພຣະອົງຫລັງຈາກຕາເວັນຕົກດິນ.

ອົງພຣະເຢຊູໄດ້ປະຕິບັດງານຫລາຍທີ່ສຸດ, ແຕ່ເຫັນວ່າແຕ່ເຊົ້າໆ ພຣະອົງໃຊ້ເວລາອ້ອນວອນ. ການອ້ອນວອນອະທິຖານເປັນສິ່ງນຶ່ງທີ່ພຣະອົງບອກໃຫ້ເຮັດໃນເວລານະມັສການ. ພວກເຮົາຮູ້ຈັກວ່າພຣະເຢຊູໃຊ້ເວລາອ້ອນວອນເພື່ອຕຽມຕົວທຳພາຣະກິດຕ່າງໆ. ຖ້າອົງພຣະເຢຊູໄດ້ອ້ອນວອນນະມັສການຢ່າງນັ້ນ ພວກເຮົາແຮງຕ້ອງການເຮັດຫລາຍເທົ່າໃດ?

ພຣະຄັມພີໄດ້ເວົ້າວ່າ ພຣະເຢຊູໄດ້ອອກໄປບ່ອນສງັດຄົນດຽວເພື່ອອ້ອນວອນ. ນັ້ນໝາຍຄວາມວ່າ "ຢູ່ໃນປ່າ" ແປວ່າພຣະເຢຊູໄປໃນບ່ອນທີ່ຄົນອື່ນຊອກຫາພຣະອົງບໍ່ໄດ້. ແຕ່ພວກສີດ ຊີໂມນແລະຄົນອື່ນກໍໄປພົບພຣະອົງ ແລະເອີ້ນໃຫ້ພຣະອົງກະທຳກິຈການຕ່າງໆ, ແຕ່ໃນເມື່ອທຳພາຣະກິດແລ້ວພຣະເຢຊູກໍໃຊ້ເລລາອະທິຖານ ນະມັສການຕໍ່ພຣະບິດາອີກ.

ຄຳເວົ້າວ່າໃນປ່າມີຄວາມໝາຍວ່າ ເປັນບ່ອນເວລາພຣະເຢຊູຖືກທົດລອງໂດຍມານ. ໃນທີ່ນັ້ນພຣະອົງປະຕິເສດການທົດລອງໃນເຣື່ອງມີຊື່ສຽງ, ເປັນນັກການເມືອງ, ແຕ່ພຣະເຢຊູຍອມຕິດຕາມນ້ຳພຣະທັຍຂອງພຣະບິດາຄືຍອມເປັນຜູ້ຮັບໃຊ້ທີ່ທຸກທໍຣະມານ. ຕອນນີ້ໃນເມື່ອພຣະເຢຊູໄດ້ປົວຝູງຄົນເປັນຈຳນວນຫລາຍ ຫລັງຈາກນັ້ນແລ້ວພຣະອົງກໍອອກໄປບ່ອນສງັດອີກເພາະພຣະອົງພຣະປະສົງນະມັສການ ເພື່ອຈະຕຶກຕອງເຖິງການສະເດັດມາຂອງພຣະອົງວ່າຈະເຮັດຫຍັງແດ່? ພຣະອົງສະເດັດມາເພື່ອປະກາດເຣື່ອງຣາຊອານາຈັກຂອງພຣະເຈົ້າ, ມາເພື່ອທຸກທໍຣະມານແລະຕາຍແທນຄົນບາບ. ການນະມັສການນີ້ໄດ້ຊ່ອຍໃຫ້ອົງພຣະເຢຊູເອົາໃຈໃສ່ເຖິງການຮັບໃຊ້ແລະປະຕິເສດການທົດລອງຢາກມີຊື່ສຽງທາງດ້ານຮ່າງກາຍ ແລະເປັນພຣະຜູ້ຊ່ອຍທາງການເມືອງເທົ່ານັ້ນ.

ການນະມັສການພຣະເຈົ້າສ່ວນຕົວຊ່ອຍພວກເຮົາໃຫ້ເອົາໃຈໃສ່ເຖິງນ້ຳພຣະທັຍຂອງພຣະເຈົ້າມີຕໍ່ພວກເຮົາ. ໂດຍການນະມັສການສ່ວນຕົວນີ້ ພຣະເຈົ້າໄດ້ເປີດການຮັບໃຊ້ທີ່ພຣະອົງມີໃຫ້ພວກເຮົາໄດ້ຮູ້. ການອ້ອນວອນ ແລະນະມັສການສ່ວນຕົວນີ້ໄດ້ເຕືອນພວກເຮົາເຖິງນ້ຳພຣະທັຍຂອງພຣະເຈົ້າ ແລະນຳພາພວກເຮົາອອກຈາກການທົດລອງ.

2. <u>ອົງພຣະເຢຊູນະມັສການກັບສ່ວນຣວມ</u> (ລູກາ 4:16)

ອົງພຣະເຢຊູບໍ່ໄດ້ນະມັສການແຕ່ສ່ວນຕົວເທົ່ານັ້ນ, ແຕ່ພຣະອົງໃຊ້ເວລານະມັສການຮ່ວມກັບຄົນອື່ນ. ການນະມັສການໃນບ່ອນສງັດເປັນສິ່ງສຳຄັນເພື່ອຈະເພີ້ມພູນກຳລັງດ້ານວິນຍານຈິດ. ແຕ່ຖ້າເມື່ອເຮົາບໍ່ເຂົ້າຮ່ວມນະມັສການກັບຄົນອື່ນ ພວກເຮົາກໍຂາດປະສົບການຝ່າຍວິນຍານທີ່ບໍ່ສາມາດຫາມາໄດ້ໃນທາງອື່ນ.

ພຣະຄັມພີໄດ້ສອນພວກເຮົາວ່າ ໃນວັນຊາບາໂຕອົງພຣະເຢຊູໄດ້ເຂົ້າໄປໃນໂຮງທັມສາລາໃນເມືອງນາຊາເຣັດ. ນີ້ເປັນບ້ານແລະຄຣິສຕະຈັກຂອງພຣະອົງເພື່ອພຣະອົງຈະໄດ້ສອນ. ໃນບ່ອນນີ້ບໍ່ແມ່ນບ່ອນທີ່ພຣະອົງບໍ່ຮູ້ຜູ້ໃດ. ຜູ້ທີ່ເຂົ້ານະມັສການລ້ວນແລ້ວແມ່ນແຕ່ຄົນໃນຄອບຄົວແລະຄົນຮູ້ຈັກກັນດີ. ພຣະອົງໄດ້ເລືອກເອົາໂອກາດຢ່າງນີ້ໃນການນະມັສການເພື່ອພຣະອົງຈະໄດ້ບອກເຣື່ອງພາຣະກິດທີ່ພຣະອົງຈະຕ້ອງທຳ.

ພຣະຄັມພີໄດ້ສອນພວກເຮົາວ່າ ອົງພຣະເຢຊູໄດ້ເຂົ້າຮ່ວມນະມັສການກັບຄົນອື່ນ. ນີ້ບໍ່ເປັນຄັ້ງດຽວແຕ່ເປັນໄປຕລອດຊີວິດຂອງພຣະອົງຮ່ວມກັບຄົນທີ່ພຣະອົງໄດ້ຮູ້ຈັກດີ. ພຣະອົງບໍ່ໄດ້ພຽງແຕ່ເຂົ້າຮ່ວມນະມັສການລ້າໆ ແຕ່ພຣະອົງໄດ້ເປັນຜູ້ນຳຄືພຣະອົງໄດ້ຢືນຂຶ້ນແລະອ່ານພຣະທັມ. ເຖິງຕອນນີ້ພວກທີ່ຮູ້ຈັກພຣະອົງບໍ່ໄດ້ຕ້ອນຮັບເອົາຄຳສອນ ແຕ່ພຣະອົງບໍ່ໄດ້ລົດລະໃນການເຂົ້າຮ່ວມນະມັສການກັບຄົນອື່ນໆ.

ບາງຄັ້ງຂ້າພະເຈົ້າໄດ້ຍິນຄົນກ່າວວ່າ ຕົນເອງໄດ້ນະມັສການພຣະເຈົ້າຕາມທີ່ຕ່າງໆໄດ້ດີຄືກັນເຊັ່ນ: ບ່ອນຕຶກປາສນາມຫລິ້ນກິລາ. ຂ້າພະເຈົ້າເຊື່ອວ່າເຮັດສິ່ງນັ້ນໄດ້ຖ້າມີຈິດໃຈຢາກນະມັສການ ແຕ່ຫລາຍໆເທື່ອເມື່ອເຂົ້າສນາມກິລາແລ້ວ ບໍ່ເຫັນຜູ້ໃດເອົາໃຈໃສ່ນະມັສການພຣະເຈົ້າໄດ້ດີ. ຕາມທີ່ເວົ້າໄປແລ້ວນັ້ນວ່າການນະມັສການສ່ວນຕົວເປັນສິ່ງດີ ແຕ່ຖ້າເມື່ອພວກເຮົາບໍ່ມາເຕົ້າໂຮມກັນນະມັສການແລ້ວ ກໍເຫັນການນະມັສການຂອງພວກເຮົາບໍ່ຄົບ-ຂາດການ

ເປັນອັນນຶ່ງອັນດຽວກັນ. ການທີ່ຮ່ວມກັນນະມັສການນັ້ນເປັນສິ່ງທີ່ຫລີກລ້ຽງບໍ່ໄດ້ໃນຊີວິດຂອງຄຣິສະຕຽນ. ປາສ ຈາກການນະມັສການຮ່ວມກັນແລ້ວ ກໍເຫັນວ່າພວກເຮົາບໍ່ສາມາດປະກອບການຮັບໃຊ້ໃນການປະກາດ ເພາະນັ້ນເປັນ ນ້ຳພຣະທັຍຂອງພຣະເຈົ້າ. ໃນເມື່ອຄົນຂອງພຣະເຈົ້ານະມັສການຮ່ວມກັນແລ້ວ ພຣະວິນຍານຂອງພຣະເຈົ້າໄດ້ສະ ຖິດຢູ່ທ່າມກາງພວກເຂົາເປັນພິເສດ, ແລະທຳການຕ່າງໆໃນຊີວິດຂອງພວກເຮົາ. ອົງພຣະເຢຊູໄດ້ໃຫ້ຕົວຢ່າງພວກ ເຮົາໃນການນະມັສການຮ່ວມກັນ. ພວກເຮົາຈະບໍ່ເປັນຄົນມີປັນຍາຖ້າບໍ່ຍອມ ເຂົ້າຮ່ວມນະມັສການກັບຮ່າງກາຍ ຂອງພຣະຄຣິດ ນັ້ນເປັນໂອກາດພິເສດ.

### 3. <u>ອົງພຣະເຢຊູຊົງສັ່ງສອນສາວົກໃຫ້ນະມັສການ</u> (ລູກາ 11:1-4)

ບໍ່ພຽງແຕ່ອົງພຣະເຢຊູໄດ້ນະມັສການສ່ວນຕົວແລະຮ່ວມກັບຄົນອື່ນເທົ່ານັ້ນ, ແຕ່ພຣະອົງໄດ້ສັ່ງສອນພວກສາວົກ ໃຫ້ຮູ້ວິທີນະມັສການອີກ, ໂດຍສະເພາະໃຫ້ເອົາໃຈໃສ່ໃນການອ້ອນວອນອະທິຖານ. ໃນຕອນນີ້ອົງພຣະເຢຊູໄດ້ອ້ອນ ວອນຮ່ວມກັບພວກສາວົກ, ຄຳອ້ອນວອນອະທິຖານຂອງພຣະອົງເຮັດໃຫ້ພວກສາວົກມີຄຳຖາມຂຶ້ນມາ. ພວກເຂົາມີ ຄວາມຕ້ອງປະສົງຢາກໃຫ້ພຣະເຢຊູສອນພວກເຂົາໃຫ້ຮູ້ວິທີການອ້ອນວອນ. ສິ່ງນັ້ນບໍ່ເປັນການແປກທີ່ວ່າລູກສິດ ໄດ້ຮ້ອງຂໍໃຫ້ຜູ້ເປັນຄຣູສອນໃຫ້ຮູ້ວິທີອ້ອນວອນ. ພຣະເຢຊູໄດ້ເອົາຕົວຢ່າງການອ້ອນວອນອະທິຖານໃຫ້ພວກສາວົກ ເປັນປະຈຳ.

ມີແມ່ຄົນນຶ່ງໄດ້ຍິນລູກສາວນ້ອຍທ່ອງພະຍັນຊະນະດ້ວຍຄວາມເອົາໃຈໃສ່. ຜູ້ເປັນແມ່ເລີຍຖາມວ່າ, "ເຈົ້າກຳລັງ ເຮັດຫຍັງ?" ລູກສາວຕອບວ່າ, "ຂ້ານ້ອຍກຳລັງອ້ອນວອນ, ຂ້ານ້ອຍບໍ່ຈັກວ່າຈະເວົ້າຢ່າງໃດ ດັ່ງນັ້ນລູກຈຶ່ງເວົ້າຕາມ ຕົວພະຍັນຊະນະ ແລະຂໍໃຫ້ພຣະເຈົ້າເປັນຜູ້ເອົາຄຳອ້ອນວອນນັ້ນເຂົ້າກັນຊ່ອຍຂ້ານ້ອຍ."

ການອ້ອນວອນຂອງເດັກນ້ອຍຢ່າງນັ້ນເປັນການໜູນນ້ຳໃຈ, ພຣະເຢຊູໄດ້ຊ່ອຍພວກເຮົາໃຫ້ໃຊ້ຄຳເວົ້າອັນຖືກຕ້ອງ. ພຣະເຢຊູໄດ້ໃຫ້ຄຳອ້ອນທີ່ເປັນຕົວຢ່າງແກ່ພວກສາວົກ ແລະທຸກວັນນີ້ພວກເຮົາກໍຍັງໄດ້ເອົາປະກອບໃຊ້. ການອ້ອນ ວອນແລະນະມັສການເປັນການເລີ້ມຕົ້ນຍອມຮັບວ່າພະເຈົ້າເປັນອົງບໍຣິສຸດ "ເປັນທີ່ໂຄຣົບບູຊາ" ນັ້ນໝາຍຄວາມວ່າ ພຣະເຈົ້າເປັນອົງສັກສິດແລະຖືກແຍກອອກຈາກທຸກສິ່ງ. ໃນການນະມັສການພວກເຮົາໄດ້ເວົ້າເຖິງສິ່ງນີ້ໃນການຮ້ອງ ເພງຖວາຍສັຣເສີນ.

ພຣະເຢຊູຊົງກ່າວວ່າຂໍໃຫ້ພຣະຣາຊອານາຈັກຂອງພຣະເຈົ້າມາຕັ້ງຢູ່. ສິ່ງນີ້ເກີດຂຶ້ນໄດ້ໃນເມື່ອມະນຸດໃນໂລກນີ້ ເອົາຊີວິດຂອງຕົນເອງເຂົ້າມາຢູ່ອ້ອມຮອບການປະກາດແລະພຣະປະສົງຂອງພຣະເຈົ້າ. ພຣະເຢຊູໄດ້ບອກວ່າພວກ ເຮົາຕ້ອງການພຣະເຈົ້າໃນໂລກນີ້. ພຣະເຢຊູໄດ້ທູນຂໍຕໍ່ພຣະເຈົ້າໃຫ້ປະທານສິ່ງທີ່ພວກເຮົາຕ້ອງການປະຈຳວັນ.

ແຕ່ຢ່າງໃດກໍຕາມ ພວກເຮົາຕ້ອງການຫລາຍກວ່າອາຫານການກິນ. ພວກເຮົາຕ້ອງການຍົກໂທດໃຫ້. ຄວາມຈິງ ແລ້ວພຣະເຈົ້າຕຽມພ້ອມສເມີທີ່ຈະອະພັຍໃຫ້ ແຕ່ພວກເຮົາຕ້ອງເປັນຄົນຍົກໂທດໃຫ້ຄົນອື່ນກ່ອນ. ການໃຫ້ອະພັຍນີ້ມີ ຜົນດີທັງສອງຢ່າງ-ທາງດ້ານວິນຍານແລະສັງຄົມ. ພຣະເຈົ້າໄດ້ໃຫ້ອະພັຍແກ່ພວກເຮົາ ແລະພວກເຮົາຕ້ອງຮຽນໃຫ້ ອະພັຍແກ່ຄົນອື່ນຜູ້ທີ່ເຮັດໃຫ້ເຮົາໄດ້ຮັບຄວາມເຈັບປວດ. ເຫດຜົນທີ່ເຮົາໃຫ້ອະພັຍເພາະວ່າພວກເຮົາໄດ້ປະສົບກັບ ການອະພັຍຈາກພຣະເຈົ້າ.

ສຸດທ້າຍນີ້ ພຣະເຈົ້າບອກພວກເຮົາໃຫ້ອ້ອນວອນເພື່ອພຣະເຈົ້າຈະໄດ້ຊ່ອຍເຮົາເວລາຖືກທົດລອງ. ພຣະເຈົ້າພ້ອມ ສເມີທີ່ຈະປະທານກຳລັງໃຫ້ເຮົາເພື່ອຈະເອົາຊະນະການທົດລອງນັ້ນໄດ້.

ການອ້ອນວອນຂອງພຣະເຢຊູເປັນຕົວຢ່າງໃຫ້ເຮົາໃຊ້ໃນເວລານະມັສການໃນສ່ວນຕົວຫລືສ່ວນຮວມ. ການນະ ມັສການຕ້ອງປະກອບດ້ວຍ ການຍົກຍ້ອງ, ທູນຂໍ, ສາຣະພາບບາບ, ຍົກໂທດ, ແລະໃຫ້ຄວາມໜູນໃຈເພື່ອພວກເຮົາຈະ ມີກຳລັງຕໍ່ສູ້ກັບການທົດລອງນາໆຊະນິດ.

ຄຳສອນຂອງພຣະເຢຊູນັ້ນໄດ້ເວົ້າເຣື່ອງຄວາມຮັບຜິດຊອບຫລາຍໆຢ່າງ ແລະພວກເຮົາຄວນສອນຄົນອື່ນໆຈະ ນ້ອຍຫລືໃຫຍ່ໃຫ້ຮູ້ຈັກວິທີນະມັສການ. ຜູ້ນຳນະມັສການ, ຄຣູສອນ, ໂດຍສະເພາະຜູ້ເປັນພໍ່ແມ່ມີໂອກາດດີທີ່ຈະສອນ ຄົນອື່ນໆໂດຍສະເພາະເດັກໃນບ້ານຂອງຕົນໃຫ້ຮູ້ວິທີການເຂົ້າເຝົ້ານະມັສການພຣະເຈົ້າ. ສິດຍາພິບານ, ຜູ້ນຳເພງມີ

ໜ້າທີ່ສິດສອນສະມາຊິກໃຫ້ຮູ້ຈັກວິທີມະນັສການທີ່ຖືກຕ້ອງ. ເດັກນ້ອຍເບິ່ງຜູ້ເປັນພໍ່ແມ່ແລະເອົາຕົວຢ່າງພວກເຮົາເວລາມະນັສການ, ພວກເຂົາໄດ້ຖາມເຖິງສິ່ງທີ່ເຂົາໄດ້ເຫັນໃນໂອກາດມະນັສການ. ດັ່ງນັ້ນ, ໃຫ້ພວກເຮົາເປັນຕົວຢ່າງແລະສອນຄົນອື່ນໃຫ້ຮູ້ເຖິງຄວາມສຳຄັນຂອງການມະນັສການ.

**4. <u>ຢ່າທຸກຮ້ອນໃຈ, ຂໍໃຫ້ມະນັສການ</u>** (ປີລິປອຍ 4:6)

ນາງຣຸດ ແກຣແຮມ ໄດ້ຖືກຍົກຍ້ອງຈາກຄົນອື່ນທີ່ລາວໄດ້ເວົ້າວ່າ, "ມະນັສການແລະການທຸກຮ້ອນໃຈບໍ່ສາມາດຢູ່ຮ່ວມກັນໄດ້." 2000 ປີກ່ອນນັ້ນ ໂປໂລໄດ້ເວົ້າຄ້າຍຄືກັນ "ຢ່າທຸກຮ້ອນໃຈ." ນັ້ນເປັນຄວາມເວົ້າສຳຄັນຕໍ່ຊີວິດຂອງພີ່ນ້ອງໃນເມືອງປີລິບປອຍ ເພາະພວກເຂົາມີຫລາຍຢ່າງຕ້ອງເປັນຫ່ວງ. ພວກເຂົາໃນເວລານັ້ນໄດ້ຮັບການຂົ່ມເຫງແລະມີການອຶດຢາກ. ອາຈານໂປໂລບອກພວກເຂົາໃຫ້ອ້ອນວອນເວລາມະນັສການ. ພວກເຂົາຄວນມອບຄວາມຢ້ານແລະຂໍໃຫ້ພຣະເຈົ້າປະທານສິ່ງຂອງຈຳເປັນປະຈຳວັນໃຫ້. ພວກເຂົາຄວນມະນັສການດ້ວຍການຂອບພຣະຄຸນ. ຕ້ອງມີຄວາມສາມາດທູນຂໍຕໍ່ພຣະເຈົ້າ ແລະມອບຄວາມກະວົນກະວາຍໄວ້ກັບພຣະເຈົ້າ.

ມະນັສການຍົກເອົາຄວາມກະວົນກະວາຍອອກໄປ ເພາະວ່າເຮົາມະນັສການແລະໄວ້ວາງໃຈໃນພຣະເຈົ້າວ່າພຣະອົງຈະໂຜດຊ່ອຍ. ຖ້າເຮົາຍັງຢູ່ໃນຄວາມກະວົນກະວາຍກໍໝາຍຄວາມວ່າເຮົາຍັງຂາດຄວາມໄວ້ວາງໃຈໃນພຣະເຈົ້າ, ແລະການມະນັສການຂອງເຮົາກໍໄຮ້ປະໂຍດ. ການມະນັສການທີ່ແທ້ຈິງນັ້ນແມ່ນການໄວ້ວາງໃຈໃນພຣະເຈົ້າໝົດໃຈ. ການອ້ອນວອນແລະການມະນັສການທີ່ແທ້ຈິງນັ້ນສາມາດປ່ຽນສະພາບຂອງພວກເຮົາໄດ້.

ໃນເມື່ອພວກເຮົາຮຽນໄວ້ວາງໃຈໃນພຣະເຈົ້າໃຫ້ພຣະເຈົ້າສິດສອນໃນການອ້ອນວອນແລະມະນັສການ, ໃນທີ່ສຸດພຣະເຈົ້າກໍໄດ້ປ່ຽນພວກເຮົາ. ມະນັສການທຳລາຍຄວາມກະວົນກະວາຍ ເພາະພວກເຮົາໄວ້ວາງໃຈໃນພຣະເຈົ້າຜູ້ທີ່ເຮົາກຳລັງຍົກຍ້ອງເທົ່ານັ້ນ.

## <u>ສິ່ງປະກອບໃຊ້ໃນຊີວິດ</u>

ຄຣິສະຕຽນມີຄວາມຮູ້ສຶກບໍ່ສະບາຍໃຈເຖິງພາບພົດຂອງການມະນັສການຢູ່ແຕ່ລະຄຣິສຕະຈັກ. ນັ້ນເປັນຂອງທັມມະດາ. ແຕ່ສິ່ງເຮົາຖືກໃຈນັ້ນບໍ່ຄວນເຮັດເປັນເຫດໃຫ້ມີບັນຫາກັບຄົນອື່ນທີ່ບໍ່ມັກເໝືອນເຮົາ. ການມະນັສການນັ້ນຄວນເປັນສິ່ງເຮັດໃຫ້ຄຣິສະຕຽນກາຍເປັນອັນນຶ່ງອັນດຽວກັນໄດ້.

ແບບມະນັສການນັ້ນບໍ່ແມ່ນບັນຫາເຣື່ອງໃຫຍ່. ບັນຫາແທ້ຕໍ່ຄົນສ່ວນຫລາຍແລ້ວແມ່ນເວລາເວົ້າເຖິງການມະນັສການ ຄືເວົ້າເຣື່ອງຂອງເຂົາເອງແລະສິ່ງທີ່ເຂົາມັກ. ການມະນັສການທີ່ແທ້ຈິງໃນສ່ວນຕົວແລະສ່ວນຣວມແລ້ວບໍ່ແມ່ນເວົ້າເຖິງຕົນເອງ, ແຕ່ແມ່ນເວົ້າເຣື່ອງຂອງພຣະເຈົ້າ, ແມ່ນການຍອມຮັບຮູ້ວ່າພຣະເຈົ້າເປັນອົງບໍຣິສຸດແລະລໍຄອຍພຣະຣາຊແຜ່ນດິນຂອງພຣະອົງມາຕັ້ງຢູ່, ຫວັງວ່າພຣະເຈົ້າຈະຈັດຫາສິ່ງເຮົາຕ້ອງປະສົງ, ຍິນດີທີ່ຈະໄດ້ຮັບການໃຫ້ອະພັຍຍະໂທດຈາກພຣະເຈົ້າ, ແລະຮ້ອງຂໍກຳລັງຈາກພຣະເຈົ້າໃຫ້ມີຊີວິດຢູ່ຢ່າງບໍຣິສຸດ.

ໃນເມື່ອທ່ານໄດ້ເຂົ້າມະນັສການພຣະເຈົ້າ, ຂໍໃຫ້ຊອກຫາບັນຍາກາດທີ່ກ່າວມານັ້ນເພື່ອຈະນຳພາພວກເຮົາເຂົ້າໄປໃນການມະນັສການອັນແທ້ຈິງ. ຖວາຍຕົວເອງຕໍ່ພຣະເຈົ້າ. ຢ່າເປັນຫ່ວງຫລືກະວົນກະວາຍ, ຂໍແຕ່ຕັ້ງໃຈມະນັສການ.

## <u>ຄຳຖາມ:</u>

1. ທ່ານໄດ້ເຂົ້າມະນັສການພຣະເຈົ້າສ່ວນຕົວເປັນປະຈຳຢູ່ບໍ່? ຍາມໃດເປັນເວລາດີທີ່ສຸດທີ່ທ່ານຈະຈັດໃຫ້ມີເວລາດ່ຽວກັບພຣະເຈົ້າຖ້າມກາງຄວາມຫຍຸ້ງຍາກຂອງແຕ່ລະວັນ?

2. ທ່ານຄິດວ່າຈະເອົາອັນໃດມາຝຶກໃຊ້ເວລາທ່ານມີໂອກາດມະນັສການພຣະເຈົ້າສ່ວນຕົວ?

3. ໃຫ້ສຶກສາລາຍການນະມັສການຂອງໂບດທ່ານ. ບ່ອນໃດທ່ານມີໂອກາດສັຣເສີນພຣະເຈົ້າ, ໄວ້ວາງໃຈໃນພຣະເຈົ້າ, ເພື່ອຈະສາຣະພາບ ແລະຍິນດີໃນການຍົກບາບໂທດໃຫ້, ແລະອ້ອນວອນເພື່ອຈະມີກຳລັງ?

4. ທ່ານແລະຄອບຄົວເຄີຍນະມັສການພຣະເຈົ້ານຳກັນບໍ່? ໃຫ້ຄິດເຖິງໂອກາດທີ່ຄວນສອນເດັກຂອງທ່ານ ຫລືລູກຫລານໃຫ້ເຂົາຮູ້ເຖິງວິທີນະມັສການ.

5. ວິທີໃດທີ່ທ່ານຊ່ອຍໃຫ້ຄຣິສຕະຈັກຂອງທ່ານເຂົ້າໃຈເຖິງຄວາມສຳຄັນຂອງການນະມັສການທີ່ແຕກຕ່າງກັນເວລາຮ່ວມກັນເປັນກຸ່ມໃຫຍ່?

*ດຣ. ບູນ ວົງສຸຣິດທ໌*

# ບົດຮຽນທີ 8
# ຝຶກຫັດໃຫ້ມີຄວາມສັມພັນເໝືອນພຣະຄຣິດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມັດທາຍ 18:15-17, 21-35; 2 ໂກຣິນໂທ 2:5-11

**ພູມຫລັງຂອງພຣະຄັມພີ:** ມັດທາຍ 18:15-17, 21-35; 2 ໂກຣິນໂທ 2:5-11

**ຈຸດສຳຄັນຂອງບົດຮຽນນີ້:** ພຣະຄຣິດໄດ້ຮ້ອງໃຫ້ຜູ້ເຊື່ອຕິດຕາມພຣະອົງໄປນັ້ນ ໃຫ້ມີຄວາມສັມພັນດີຕໍ່ກັນແລະກັນ, ເປັນຫ່ວງເປັນໃຍນຳຄຣິສຕະຈັກ, ແລະ ຍິນດີພ້ອມສເມີທີ່ຈະອະພັຍໃຫ້.

**ຄຳຖາມເພື່ອການຄົ້ນຄວ້າ:** ເຮັດຢ່າງໃດສະມາຊິກຂອງຄຣິສຕະຈັກຈະສ້າງຄວາມສັມພັນຕໍ່ກັນເຫມືອນອົງພຣະຄຣິດເຈົ້າ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຖວາຍຕົວເອງເພື່ອການສ້າງຄວາມສັມພັນກັບຄົນອື່ນເໝືອນອົງພຣະຄຣິດເຈົ້າ.

## ບົດນຳ

ໃນປຶ້ມຂ່າວປະເສີດນັ້ນມີເຣື່ອງທີ່ກ່າວໃຫ້ຄືນຄືນດີກັບພຣະເຈົ້າ ແລະຄືນດີຕໍ່ກັນແລະກັນ. ໃນເມື່ອຄວາມສັມພັນນັ້ນໄດ້ຖືກແຕກຫັກໄປສິ່ງນັ້ນບໍ່ຄວນປະໄວ້, ແຕ່ໃຫ້ເອົາໃຈໃສ່ເຮັດໃຫ້ຄືນດີກັນ. ອົງພຣະເຢຊູແລະອາຈານໂປໂລໄດ້ໃຫ້ຕົວຢ່າງທີ່ດີເພື່ອພວກເຮົາຈະເອົາມາປະກອບໃຊ້ໃນຊີວິດ ເພື່ອພວກເຮົາຈະມີຊີວິດເໝືອນອົງພຣະຄຣິດ.

ມີນັກຕໍ່ສູ້ເອົາເສຣີພາບຄົນນຶ່ງໃນປະເທດນິກາຣາກົວ ຊື່ວ່າໂທມາສ ບອກ, ໃນຄະນະທີ່ຕໍ່ສູ້ນັ້ນລາວຖືກເຈັບແລະຖືກຈຳຄຸກດ້ວຍຄວາມທໍຣະມານ, ລາວຍັງຖືກສັ່ງໃຫ້ໃສ່ຖົງອັດໜ້າໄວ້ເປັນເວລາເກົ້າເດືອນ. ລາວຕ້ອງອົດທົນເຫັນພວກສັດຕູຂົ່ມຂືນຜູ້ເປັນພັນລະຍາ. ຫລັງຈາກຄະນະປະຕິວັດຕໍ່ຕ້ານຄົນນຶ່ງໄດ້ກາຍເປັນນັກການເມືອງ ຕຳແໜ່ງອະທິບໍດີກະຊວງພາຍໃນລາວໄດ້ຖືກປ່ອຍຕົວ. ເວລາຂຶ້ນສານປະເຊີນໜ້າກັບສັດຕູ ຫົວໜ້າສານກ່າວວ່າ ເວລານີ້ທ່ານມີໂອກາດທີ່ຈະແກ້ແຄ້ນຂໍໃຫ້ທ່ານບອກມາວ່າຈະເຮັດແນວໃດກັບສັດຕູ. ທ່ານ ບອກ ໄດ້ເບິ່ງໜ້າຂອງສັດຕູໃກ້ໆແລະກ່າວວ່າ, "ການແກ້ແຄ້ນຂອງຂ້ອຍຄືຂ້ອຍອະພັຍໃຫ້ເຈົ້າແລ້ວ."

ການກະທຳຂອງທ່ານບອກ ເປັນໜ້າເຫລືອເຊື່ອ. ເຮັດແນວໃດລາວຈຶ່ງອະພັຍແກ່ສັດຕູຜູ້ເຮັດໃຫ້ລາວໄດ້ຮັບຄວາມທຸກທໍຣະມານແສນສາຫັດ. ຕາມທັມມະດາແລ້ວຄົນສ່ວນຫລາຍເວລາມີໂອກາດແກ້ແຄ້ນ ຄົນນັ້ນຈະໃຊ້ໂອກາດເຮັດໃຫ້ສັດຕູໄດ້ຮັບຄວາມເຈັບປວດຫລາຍເທົ່າທີ່ຈະເຮັດໄດ້. ແຕ່ວ່າໃນກໍຣະນີທ່ານບອກ ເປັນຄົນສາມັນກໍຍັງໃຫ້ອະພັຍໄດ້ຊຶ່ງເປັນສິ່ງທີ່ແປກທີ່ສຸດຕໍ່ສາຍຕາຄົນທີ່ຢູ່ໃນສານຕັດສິນນັ້ນ.

ຄວາມສັມພັນຂອງຄຣິສະຕຽນແຮ່ງມີຄວາມສຳຄັນຫລາຍກວ່າພວກນັກການເມືອງອີກ. ແຕ່ຫລາຍໆເທື່ອພວກເຮົາເຫັນວ່າຄວາມສັມພັນຂອງຄຣິສະຕຽນຜິດພາດ ແລະແຕກຫັກໄປເພາະມີການຕໍ່ສູ້ເກີດຂຶ້ນ. ຄວາມຂັດແຍ້ງໄດ້ເກີດຂຶ້ນເພາະເຂົາໄດ້ຍິນຄຳເວົ້າບໍ່ດີຕາມສະຖານທີ່ຕ່າງໆ. ບາງເທື່ອຫຸ້ນສ່ວນການຄ້າບໍ່ດີກໍນຳເອົາມາຜິດກັນ. ພວກເຂົາໄປນະມັສການແລະຮັບສິນມະຫາສນິດນຳກັນ, ແຕ່ເວລາອອກໄປຈາກຄຣິສຕະຈັກແລ້ວພວກເຂົາບໍ່ສາມາດອະພັຍຫລືຄືນດີກັນໄດ້.

ອົງພຣະເຢຊູໄດ້ສັ່ງພວກສາວົກໃຫ້ຄືນດີຕໍ່ກັນແລະກັນ. ພຣະອົງໄດ້ສອນໂດຍສະເພາະວິທີໃຫ້ຄືນດີກັນ. ພຣະເຢຊູຍັງບອກໃຫ້ເປີດຄວາມສັມພັນກັບຄົນເພື່ອໃຫ້ພວກເຂົາເປັນນ້ຳນຶ່ງໃຈດຽວກັນ, ໃຫ້ອະພັຍກັນໃນຄຣິສຕະຈັກ. ຍິ່ງໄປກວ່ານັ້ນ ອາຈານໂປໂລໄດ້ໃຫ້ຕົວຢ່າງທີ່ດີໃນເມືອງໂກຣິນໂທເຖິງເຣື່ອງອະພັຍຕໍ່ຜູ້ທີ່ເຮັດຜິດ. ເຖິງແມ່ນນັກການເມືອງທ່ານໂທມາ ບອກ ຜູ້ສາມາດໃຫ້ອະພັຍສັດຕູ, ພວກເຮົາທີ່ເປັນສາວົກຂອງອົງພຣະເຢຊູຈຳເປັນຕ້ອງຮຽນໃຫ້ອະພັຍຄົນອື່ນຫລາຍກວ່ານັ້ນອີກ.

1. **ຢາແກ້ຄວາມສັມພັນ** (ມັດທາຍ 18:15-17)

ຄວາມສັມພັນໃນຄຣິຕະຈັກເຫັນວ່າສັບສົນຫລາຍ ບາງຄັ້ງກໍມີການຕໍ່ສູ້ກັນເກີດຂຶ້ນ. ການຕໍ່ສູ້ກັນນັ້ນສາມາດທໍາລາຍຄວາມສັມພັນອັນດີໄດ້. ບາງຄັ້ງການຕໍ່ສູ້ກັນເກີດຂຶ້ນກໍເພາະຄວາມເຂົ້າໃຈຜິດພຽງເລັກນ້ອຍເທົ່ານັ້ນ ຈຶ່ງເຮັດຜິດບາບຕໍ່ສູ້ກັນ. ອົງພຣະເຢຊູເຂົ້າໃຈດີວ່າພວກສາວົກຢູ່ໃນໂລກແຫ່ງຜິດບາບ, ດັ່ງນັ້ນ, ການຕໍ່ສູ້ ຜິດຖຽງກັນຍ່ອມເກີດຂຶ້ນຊຶ່ງເປັນເຣື່ອງຫລີກລ້ຽງບໍ່ໄດ້. ໃຫ້ພວກເຮົາເຂົ້າໃຈວ່າ ເຖິງແມ່ນພວກເຮົາຢູ່ໃນໂລກບໍ່ທ່ຽງທັມນີ້ພວກເຮົາຍັງຢູ່ໃນຣາຊອານາຈັກຂອງພຣະເຈົ້າເໝືອນກັນ. ຄວາມສັມພັນຂອງຄຣິສະຕຽນນັ້ນຄວນດີກວ່າຊາວໂລກເພື່ອຈະເປັນຕົວຢ່າງເພາະພວກເຮົາເປັນຜູ້ຕິດຕາມອົງພຣະເຢຊູ.

ອັນໃດພວກສາວົກຂອງອົງພຣະເຢຊູໄດ້ໃຊ້ເພື່ອຈະປົວແປງແລະຄືນດີກັນເວລາຄວາມສັມພັນນັ້ນໄດ້ຖືກແຕກຫັກລົງໄປ? ອົງພຣະເຢຊູໄດ້ໃຫ້ຢາແກ້ຄືໃຫ້ພວກເຂົາເອົາຄວາມຮັກມາໃຊ້ເພື່ອໃຫ້ຜົນການຄືນດີກັນເກີດຂຶ້ນ.

ນຶ່ງ, ພຣະເຢຊູໄດ້ກ່າວວ່າ ຖ້າມີຄົນນຶ່ງຄົນໃດເຮັດຄວາມບາບຕໍ່ສູ້ທ່ານ ທ່ານມີໜ້າທີ່ຮັບຜິດຊອບເລີ້ມຕົ້ນສ້າງຄວາມສັມພັນນັ້ນໃຫ້ດີຄືນ. ກ້າວທີ່ຈະເລີ້ມນັ້ນແມ່ນຜູ້ທີ່ຖືກຄົນອື່ນເຮັດຄວາມຜິດຕໍ່ຄວນເປັນຄົນເລີ້ມ ຄົນທີ່ເຮັດຜິດຕໍ່ເຮົານັ້ນເຂົາບໍ່ສາມາດເລີ້ມໄດ້ເພາະເຂົາເປັນຄົນບໍ່ສາມາດຊ່ວຍຕົວເອງໄດ້ ເໝືອນຄົນເມົາຢາຫລືເມົາເຫລົ້າ. ຄົນຜູ້ທີ່ຖືກຫາເຣື່ອງໃສ່ຢູ່ໃນສະພາບດີກວ່າທີ່ຈະເລີ້ມຕົ້ນໃນການຄືນດີກັນ.

ກ້າວທໍາອິດທີ່ຈະເຮັດໃຫ້ຄືນດີກັນນັ້ນຕ້ອງເຮັດຢ່າງລັບໆເພື່ອບໍ່ໃຫ້ລະອາຍຕໍ່ຊຸມຊົນ. ຈຸດປະສົງນັ້ນແມ່ນເຮັດໃຫ້ຄືນດີກັນ ບໍ່ແມ່ນເພື່ອຈະໃຫ້ຄົນນຶ່ງຄົນໃດໄດ້ຮັບຄວາມເສັຽໜ້າ. ຖ້າວ່າຜູ້ທີ່ເຮັດຜິດນັ້ນຍອມ ກໍບໍ່ເປັນການຈໍາເປັນທີ່ຈະ ບອກໃຫ້ທີ່ຊຸມນຸມຮູ້ ໂດຍການໃຫ້ອະພັຍແລະກໍໃຫ້ລືມມັນເສັຽ.

ຫລາຍເທື່ອຜູ້ທີ່ຜິດນັ້ນປະຕິເສດໃນການຮ້ອງຂໍໃນທາງລັບ. ໃນກໍຣະນີນັ້ນຜູ້ທີ່ຖືກຫາເຣື່ອງຕໍ່ນັ້ນຄວນເອົາສອງສາມຄົນໃນຄຣິສຕະຈັກໄປນໍາເພື່ອຈະໄປເຈຣະຈາກັບຄົນທີ່ເຮັດຜິດນັ້ນ. ພຣະເຢຊູໄດ້ອ້າງເຖິງພຣະຄັມພີພຣະບັນຍັດສອງ 9:15. ກົດໝາຍນັ້ນເວົ້າເຖິງການມີຂໍ້ມູນພຽງພໍເວລາຂຶ້ນສານ. ຜູ້ເປັນພະຍານຄວນຮູ້ຈັກເຣື່ອງດີກັບສິ່ງຜູ້ທີ່ເຮັດຜິດນັ້ນໄດ້ເຮັດແທ້ແລະເປັນຄວາມຈິງ. ຖ້າເປັນໄປໄດ້ຜູ້ເປັນພະຍານນັ້ນຄວນຈະຊ່ອຍເປັນຄົນກາງເພື່ອເຮັດໃຫ້ທັງສອງຝ່າຍຄືນດີກັນ.

ເຮັດຢ່າງນັ້ນແລ້ວກໍຍັງບໍ່ມີການຕົກລົງກັນ, ເຣື່ອງຂັດແຍ້ງກັນນັ້ນກໍກາຍເປັນພາຣະກິດຂອງຄຣິສະຈັກເພາະມັນເປັນປັຣະປັກຕໍ່ການເປັນອັນນຶ່ງອັນດຽວກັນ. ໝາຍເຫດ: ກ້າວທີ່ຈະເຮັດໃນຄວາມຮັບຜິດຊອບໃນເຣື່ອງນີ້ຍາກຫລາຍ. ພວກສາວົກຂອງອົງພຣະເຢຊູໄດ້ຮັບຜິດຊອບຕໍ່ກັນແລະກັນ. ຖ້າວ່າຜິດຖຽງກັນໄດ້ເກີດຂຶ້ນ ຄຣິສຕະຈັກຄວນມີໜ້າທີ່ຮັບຜິດຊອບເພື່ອຮັກສາການເປັນນໍ້ານຶ່ງໃຈດຽວກັນ. ຖ້າວ່າຜູ້ທີ່ເຮັດຜິດນັ້ນຍັງບໍ່ຍອມກໍຂໍໃຫ້ຄຣິສຈະຈັກຮັບຮູ້ວ່າຄົນນັ້ນປະຕິເສດທີ່ຈະມີພາກສ່ວນກັບຄຣິສຕະຈັກນັ້ນ. ອັນນີ້ເຮັດໃຫ້ຄຣິສຕະຈັກມີຄວາມເສົ້າສລົດໃຈເພາະຄົນນັ້ນເລືອກທາງທີ່ຈະບໍ່ມີຄວາມສາມັກຄີທັມໃນກຸ່ມຄຣິສະຕຽນນັ້ນອີກຕໍ່ໄປແລ້ວ.

ໃຫ້ຖືວ່າການຄືນດີກັນນັ້ນຍັງມີຫວັງຢູ່ເຖິງແມ່ນຄົນນັ້ນເລືອກທາງອອກໄປຢ່າງຜິດພາດ. ແຕ່ຕອນນີ້ມັນກາຍເປັນໜ້າທີ່ຂອງຜູ້ເຮັດຜິດຄວນເປັນຄົນເລີ້ມຕົ້ນໃນການຄືນດີ. ໃນເມື່ອຜູ້ເຮັດຜິດກັບຄືນຮູ້ສຶກຕົວແລະຢາກຄືນດີກໍຂໍໃຫ້ຄຣິສຕະຈັກຕຽມພ້ອມສເມີທີ່ຈະຮັບເອົາຄົນນັ້ນຄືນແລະໃຫ້ອະພັຍແກ່ຄົນນັ້ນ.

## **2. <u>ຂໍກະແຈທີ່ຈະສ້ອມແປງຄວາມສັມພັນ</u>** (ມັດທາຍ 18:21-35)

ຂໍຈະແຈທີ່ໃຫ້ຄືນດີກັນນັ້ນແມ່ນການໃຫ້ອະພັຍ. ຈະບໍ່ເປັນການຄືນດີກັນຖ້າບໍ່ມີການໃຫ້ອະພັຍຜູ້ທີ່ເຮັດຜິດຕໍ່ເຮົາ. ເປໂຕຖາມພຣະເຢຊູວ່າ, ຈັກເທື່ອທີ່ຂ້ານ້ອຍຈະໃຫ້ອະພັຍຄົນອື່ນ? ເຈັດສິບເທື່ອບໍ່? ເປໂຕຄິດໃນໃຈວ່າຕົນເອງເປັນຄົນໃຈກວ້າງສົມຄວນ ເພາະລາວໄດ້ຍິນຫົວໜ້າສາສນາຢິວສອນວ່າພວກເຂົາຄວນອະພັຍໃຫ້ຄົນສາມເທື່ອ ຄັ້ງທີສີ່ເອົາໂທດ. ໝາຍຄວາມວ່າ ເປໂຕໄດ້ເພີ້ມການອະພັຍຈາກຄໍາສອນຂອງພວກຢິວສອງເທົ່າກວ່າ.

ພຣະເຢຊູ ໄດ້ສອນພວກສາວົກໃຫ້ອ້ອນວອນ, <u>ອະພັຍຄວາມຜິດບາບໃຫ້ແກ່ຂ້າພະອົງເໝືອນຂ້າພະອົງໄດ້ອະພັຍໃຫ້ແກ່ຄົນທີ່ຜິດຕໍ່ຂ້າພະອົງນັ້ນ.</u> ພວກເຮົາຕ້ອງການໃຫ້ພຣະອົງອະພັຍໃຫ້ພວກເຮົາພຽງເຈັດເທື່ອເທົ່ານັ້ນບໍ່? ຂ້າພະເຈົ້າເອງ ຕ້ອງການຄວາມອະພັຍຈາກພຣະເຈົ້າຫລາຍກວ່ານັ້ນ.

ພຣະເຢຊູໄດ້ຕອບວ່າ ພວກເຮົາຄວນອະພັຍໃຫ້ຄົນອື່ນໂດຍທີ່ນັບບໍ່ໄດ້. ອົງພຣະເຢຊູບໍ່ໄດ້ບອກພວກເຮົາໃຫ້ນັບການອະພັຍຄົນອື່ນ ແຕ່ວ່າຄວາມອະພັຍນັ້ນຄວນເປັນສິ່ງປະຕິບັດໄປເລື້ອຽງຢ່າງບໍ່ມີຂອບເຂດ. ໃນໂລກນີ້ການແກ້ແຄນນັ້ນເຮັດໄປໂດຍບໍ່ມີຂອບເຂດ ແຕ່ໃນຣາຊອານາຈັກຂອງພຣະເຈົ້າການໃຫ້ອະພັຍຄວນບໍ່ມີຂອບເຂດ ບໍ່ແມ່ນເຮັດເໝືອນຄົນໃນໂລກນີ້.

ພຣະເຢຊູໄດ້ໃຫ້ຕົວຢ່າງທີ່ໃຊ້ເປັນຫລັກການເຖິງການໃຫ້ອະພັຍ. ມີກະສັດອົງນຶ່ງໃຫ້ອະພັຍຊາຍຄົນນຶ່ງທີ່ເປັນໜີ້ 10,000 ຫລຽນ. ນັ້ນເປັນເງິນຫລາຍທີ່ສຸດ, ມີມູນຄ່າເຖິງ 60,000,000 ດີນາຣີໂອນ. ໃຫ້ເຂົ້າໃຈວ່າ ດີນາຣີໂອນນຶ່ງເປັນເງິນຄ່າແຮງງານວັນນຶ່ງຂອງພວກກັມມະກອນ. ຊາຍຜູ້ນັ້ນຕ້ອງເຮັດວຽກ 60 ລ້ານມື້ຈຶ່ງຈະສາມາດຈ່າຍໜີ້ຄືນໝົດ. ນັ້ນຖືວ່າເປັນຂອງຂວັນອັນຍິ່ງໃຫຍ່ທີ່ກະສັດໄດ້ອະພັຍໃຫ້.

ໃນເມື່ອຄົນນັ້ນໄດ້ຮັບການໃຫ້ອະພັຍຢ່າງໄປຕາມຖນົນ, ລາວໄດ້ພົບອີກຜູ້ນຶ່ງທີ່ເປັນໜີ້ລາວ 100 ດີນາຣີໂອນ. ລາວຖາມໜີ້ກັບຄົນນັ້ນ ແລະຄົນນັ້ນໄດ້ຮ້ອງຂໍເຍື້ອນເວລາເພື່ອຈະຫາເງິນມາຈ່າຍ ແຕ່ວ່າເຈົ້າໜີ້ປະຕິເສດ. ລາວເອົາຜູ້ເປັນໜີ້ 100 ດີນາຣີໂອນໄປຂັງຄຸກໄວ້ຈົນເຖິງຈ່າຍໜີ້ໝົດຈຶ່ງຈະປ່ອຍຕົວ. ແນ່ນອນ ລາວບໍ່ອາດສາມາດຈ່າຍໜີ້ໄດ້ເພາະລາວຢູ່ໃນຄຸກ ບໍ່ສາມາດໄປເຮັດວຽກໄດ້. ໃນເມື່ອກະສັດໄດ້ຍິນເຣື່ອງທີ່ຊາຍຄົນນັ້ນເຮັດຢ່າງບໍ່ທ່ຽງທັມ ພຣະອົງກໍໂກດຮ້າຍ ຈັບຄົນທີ່ເປັນໜີ້ເພິ່ນໄປຂັງໃນຄຸກຢ່າງທຸກທໍຣະມານ ຈົນລາວຈ່າຍໜີ້ 10,000 ຫລຽນນັ້ນຄືນໃຫ້ກະສັດ.

ຄວາມເມດຕາຂອງພຣະເຈົ້າບໍ່ມີຂອບເຂດ. ພຣະອົງໄດ້ອະພັຍໃຫ້ຄົນທີ່ເຮັດຜິດບາບອັນໃຫຍ່ຫລວງ. ເຮັດແນວໃດພວກເຮົາຍັງບັງອາດປະຕິເສດບໍ່ໃຫ້ອະພັຍຄົນອື່ນທີ່ເຮັດຜິດຕໍ່ເຮົາໄດ້?

ໂລກນີ້ເຕັມໄປດ້ວຍຄົນເສັຽສະຕິ ມີຄົນນຶ່ງເຂົ້າໄປໂຮງຮຽນຂອງພວກຄຣິສະຕຽນ ອາມມິສ. ມັນສັ່ງພວກເດັກນ້ອຍນັກຮຽນເຂົ້າແຖວແລະຍິງແຕ່ລະຄົນ. ມີພວກນັກຂ່າວໄດ້ໄປສຳພາດຄຣິສະຕຽນພວກນັ້ນ ເພາະພວກເຂົາມີຄວາມໂສກເສົ້າສລົດໃຈຫລາຍ. ນັກຂ່າວໄດ້ຮູ້ເຖິງຄວາມເຊື່ອຂອງພວກຄຣິສະຕຽນນັ້ນເພາະພວກເຂົາໃຫ້ອະພັຍແກ່ຄົນທີ່ຂ້າລູກຮັກຫລານແພງຂອງພວກເຂົາຢ່າງເລືອດເຢັນ. ຊ້ຳບໍ່ພໍພວກຄຣິສະຕຽນເຫລົ່ານັ້ນຍັງອອກໄປປອບໃຈຜູ້ເປັນພັລຍາຂອງຜູ້ຂ້າເດັກນ້ອຍ, ແລະບາງຄົນກໍຍັງໄປສົ່ງສະການຄົນທີ່ຂ້າເດັກນ້ອຍນັ້ນເໝືອນກັນ. ການກະທຳຂອງພວກເຂົາໄດ້ກ້ອງດັງໄປທົ່ວໂລກ ຕາມປົກກະຕິແລ້ວຄົນສ່ວນຫລາຍມັກແກ້ແຄ້ນ. ແຕ່ຄຣິສະຕຽນໃຫ້ອະພັຍຢ່າງບໍ່ມີຂອບເຂດ. ເຣື່ອງດັ່ງກ່າວນີ້ເປັນປໂຍດຕໍ່ການປະກາດເຖິງເຣື່ອງຂ່າວປະເສີດຂອງອົງພຣະເຢຊູຄຣິດເຈົ້າ. ພຣະເຈົ້າໄດ້ຖືກຍົກຍ້ອງເພາະພວກຄຣິສະຕຽນຄະນະອາມມິສຍອມໃຫ້ອະພັຍແກ່ຄົນທີ່ເຮັດຜິດຕໍ່ເຂົາ.

## 3. <u>ຕົວຢ່າງຂອງການປົວແປງຄວາມສັມພັນ</u> (2 ໂກຣິນໂທ 2:5-11)

ມີບາງຄົນໃນເມືອງໂກຣິນໂທໄດ້ເຮັດຜິດຕໍ່ອາຈານໂປໂລ. ຄວາມຜິດນັ້ນບໍ່ອາດຈະຮູ້ໄດ້ວ່າເປັນໄປຢ່າງໃດ. ມີພວກນັກປາດໄດ້ກ່າວວ່າຄວາມຜິດນັ້ນມັນອາດຈະກ່ຽວຂ້ອງກັບຜູ້ຊາຍຄົນນຶ່ງຊື່ວ່າ ໂປໂລ ໃນ 1 ໂກຣິນໂທ 5, ແຕ່ວ່າບໍ່ມີເຫດຜົນໃດເລີຍບອກວ່າ ອາຈານໂປໂລໄດ້ເວົ້າເຖິງຄົນນັ້ນ. ແນວໃດກໍດີ ມີບາງຄົນໄດ້ຕັ້ງໃຈເຮັດໃຫ້ອາຈານໂປໂລມີຄວາມທຸກໂສກ ແລະໄດ້ເປັນຜົນເສັຽຫາຍຕໍ່ຄຣິສຕະຈັກທາງດ້ານຄວາມສັມພັນທະໄມຕຣີຕໍ່ກັນ. ຜູ້ກໍ່ເຣື່ອງນັ້ນບໍ່ໄດ້ທຳລາຍອາຈານໂປໂລເທົ່ານັ້ນ ແຕ່ໄດ້ທຳລາຍຄຣິສຕະຈັກອີກດ້ວຍ. ດັ່ງນັ້ນ, ອາຈານໂປໂລ ຈຶ່ງໄດ້ຂຽນຈົດໝາຍຮ້າຍແຮງເຖິງຄຣິສຕະຈັກ ບອກໃຫ້ສັ່ງສອນຄົນທີ່ເຮັດຜິດນັ້ນໃຫ້ກັບໃຈ ເພື່ອຮັກສາການເປັນນ້ຳນຶ່ງ ໃຈດຽວກັນ. ຄວາມສັມພັນທີ່ບໍ່ດີເປັນຜົນເສັຽຫາຍຫລາຍເກີນຄວາມເຂົ້າໃຈ. ມັນບໍ່ເປັນພຽງແຕ່ຄົນເຮັດຜິດແລະຜູ້ ໄດ້ຮັບໂທດມີຜົນເສັຽຫາຍ, ແຕ່ເຫັນວ່າມັນນຳຜົນຮ້າຍນັ້ນໄປສູ່ທັງໝູ່ບ້ານ. ຄວາມຜິດບາບຂອງຄົນຜູ້ນຶ່ງທີ່ເຮັດຕໍ່ສູ້ອາຈານໂປໂລເປັນພະຍາດຮ້າຍແຮງລາມໄປເຖິງການເປັນອັນນຶ່ງອັນດຽວໃນຄຣິສຕະຈັກ.

ອາຈານໂປໂລກ່າວວ່າການຕິສອນຄົນທີ່ເຮັດຜິດຈາກສຽງສ່ວນຫລາຍໃນຄຣິສຕະຈັກນັ້ນເປັນການພຽງພໍ ແລະຕ້ອງໃຫ້ມີການຄືນດີກັນ. ອາຈານໂປໂລບອກວ່າບໍ່ໃຫ້ລົງໂທດແຮງເກີນໄປ ເພື່ອບໍ່ໃຫ້ຄົນທີ່ເຮັດຜິດນັ້ນບໍ່ຢາກເປັນພາກສ່ວນນຳອີກ. ໂປໂລບອກໃຫ້ຄຣິສຕະຈັກໃຫ້ອະພັຍຄົນທີ່ເຮັດຜິດ ແລະຫນູນໃຈຄົນນັ້ນ. ການໃຫ້ອະພັຍນັ້ນເປັນສິ່ງທີ່ເຮັດໃຫ້ຄົນຄືນດີກັນໄດ້ ແລະຮັບເອົາຄົນນັ້ນເຂົ້າມາໃນຄຣິສຕະຈັກອີກ.

ການຕີສອນນັ້ນມີສອງພາກ. ນຶ່ງ, ມັນຕ້ອງເປັນສິ່ງເຕືອນໃຈໃຫ້ຄົນທີ່ເຮັດຜິດນັ້ນສາຣະພາບ ເພື່ອຈະຄືນດີກັບຄຣິສຕະຈັກອີກ. ຢ່າລົງໂທດຄົນນັ້ນໜັກເກີນໄປເພາະຢ້ານວ່າຄົນນັ້ນອາດຈະເສັຽໃຈແລະຫັນໜີໄປຈາກຄວາມເຊື່ອ. ການຕີສອນບໍ່ແມ່ນການລົງໂທດ ແຕ່ເພື່ອໃຫ້ຄົນທີ່ເຮັດຜິດນັ້ນກັບຄືນດີ. ສອງ, ການຕີສອນນັ້ນເພື່ອເປັນການທົດສອບເບິ່ງວ່າຄຣິສະຕຽນເມືອງໂກຣິນໂທນັ້ນເອົາໃຈໃສ່ຕໍ່ທັມມະຈະຣິຍາ ແລະຜົນດີຂອງຂ່າວປະເສີດນັ້ນຫລືບໍ່. ໂປໂລຫວັງວ່າຄຣິສະຕຽນໃນເມື່ອງໂກຣິນໂທຈະເຮັດເໝືອນເພິ່ນແນະນຳເຖິງແມ່ນມັນຈະເປັນການຍາກກໍຕາມ. ຄວາມຈິງ ຄຣິສະຕຽນທີ່ນັ້ນໄດ້ເຮັດຫລາຍກວ່າຄຳແນະນຳຂອງທ່ານອາຈານໂປໂລເສັຽອີກ.

ການທີ່ຄຣິສຕະຈັກຕີສອນຄົນນຶ່ງຄົນໃດນັ້ນເປັນສິ່ງຍາກຫລາຍໃນຊີວິດ. ແຕ່ບາງຄັ້ງກໍຈຳເປັນຕ້ອງເຮັດເພື່ອຈະເປັນປໂຍດຕໍ່ການເປັນພະຍານຕໍ່ໂລກ ແລະເພື່ອການເປັນນ້ຳນຶ່ງໃຈດຽວກັນ.

ອາຈານໂປໂລໄດ້ຮ້ອງຂໍໃຫ້ໝົດທັງຄຣິສຕະຈັກໃຫ້ອະພັຍແລະປອບໃຈຄົນທີ່ເຮັດຜິດນັ້ນໃຫ້ກັບໃຈ. ຊ້ຳບໍ່ພໍອາຈານໂປໂລໄດ້ກ່າວເວລາຕີສອນຄົນນຶ່ງຄົນໃດ ເພິ່ນເວົ້າສເມີວ່າເພິ່ນໄດ້ໃຫ້ອະພັຍແລ້ວ ບໍ່ແມ່ນແຕ່ເພື່ອຄວາມຜິດຂອງຄົນນັ້ນ, ແຕ່ຍ້ອນເພາະຄຣິສຕະຈັກ. ການທີ່ໃຫ້ອະພັຍແລະເຮັດໃຫ້ຄືນດີກັນແມ່ນຄວາມສາມັກຄີທັມລະຫວ່າງຄຣິສຕະຈັກແລະຄົນທີ່ເຮັດຜິດ ແລະເພື່ອໃຫ້ທຸກຄົນໃນຄຣິສຕະຈັກມີຄວາມສັມພັນກັນດີຂຶ້ນ.

ຖ້າວ່າການຄືນດີກັນບໍ່ເກີດຂຶ້ນ, ອາຈານໂປໂລກ່າວວ່າເພິ່ນຢ້ານພວກເຂົາຈະຕົກໄປໃນກຳມືຂອງມານ. ທຸຣະກິດສ່ວນນຶ່ງຂອງມານແມ່ນເຮັດໃຫ້ຄຣິສຕະຈັກແຕກແຍກກັນ. ດ້ວຍມີຊີວິດເໝືອນອົງພຣະຄຣິດ ພວກເຮົາຢູ່ໃນສະພາບດີທີ່ຈະສ້າງຄວາມສັມພັນທະໄມຕຣີຂຶ້ນເພື່ອບໍ່ໃຫ້ມານມີໂອກາດເຂົ້າມາຫລອກລວງ

ການມີຊີວິດອັນສົມບູນໃນດ້ານຄວາມສັມພັນເຮັດໃຫ້ຄຣິສຕະຈັກເປັນພະຍານຕໍ່ຊາວໂລກໄດ້ດີ. ການທີ່ມີຄວາມຜິດຖຽງກັນນັ້ນເປັນຄວາມຜິດບາບ. ອົງພຣະເຢຊູສະເດັດລົງມາເພື່ອຈະໃຫ້ຄົນມາຫາພຣະເຈົ້າປອງດອງກັນແລະມີຄວາມສັມພັນດີຕໍ່ກັນ. ຖ້າພວກເຮົາປະຕິເສດໃນການຄືນດີກັນ ກໍໝາຍຄວາມວ່າພວກເຮົາປະຕິເສດຂ່າວປະເສີດແລະບໍ່ຕາມແຜນການທີ່ພຣະເຈົ້າມີຕໍ່ພວກເຮົາ.

ຂັ້ນສ່ວນຕົວ, ພວກເຮົາທຸກໆຄົນໄດ້ມີປະສົບການກັບການຜິດຖຽງກັນໃນຄຣິສຕະຈັກໃນທາງໃດທາງນຶ່ງ. ທ່ານອາດຖືກຄົນອື່ນເຮັດໃຫ້ເສັຽໃຈ. ຫລາຍເທື່ອພວກເຮົາກໍເຊື່ອງບັນຫານັ້ນໄວ້ໃນກ້ອງສາດ ແລະເຮັດເໝືອນວ່າບໍ່ມີຫຍັງເກີດຂຶ້ນ. ຄິດວ່າການເຮັດຢ່າງນັ້ນບັນຫາກໍຈະຫາຍໄປຕາມເວລາ. ຂ່າວປະເສີດສັ່ງສອນພວກເຮົາບໍ່ໃຫ້ຢູ່ລ້າໆໃນເມື່ອບັນຫາເກີດຂຶ້ນ ແຕ່ໃຫ້ກັບຄືນດີກັບພີ່ນ້ອງ.

ພາຣະຂອງການຄືນດີກັນນັ້ນຕ້ອງມີການໃຫ້ອະພັຍກັນກ່ອນ ແລະກໍປອບໃຈຜູ້ເຮັດຜິດ. ບໍ່ແມ່ນພຽງແຕ່ໃຫ້ອະພັຍໃນໃຈເທົ່ານັ້ນ ແຕ່ຕ້ອງໃຫ້ມີການກະທຳອອກມາເພື່ອໃຫ້ຜູ້ທີ່ເຮັດຜິດເຫັນ ແລ້ວຄົນທີ່ເຮັດຜິດນັ້ນຈະກັບໃຈຄືນດີກັນເໝືອນເດີມ. ພຣະຄຸນຂອງພຣະເຈົ້າໄດ້ໃຫ້ພະລັງແກ່ເຮົາ ໃຫ້ເຮົາສາມາດເຮັດໃນສິ່ງທີ່ເຮັດຍາກໄດ້.

ບາງເທື່ອຄຣິສຕະຈັກຈຳເປັນຕ້ອງຕີສອນຜູ້ເຮັດຜິດ. ແຕ່ໃຫ້ເຂົ້າໃຈວ່າ ການຕີສອນນັ້ນເພື່ອໃຫ້ຄົນທີ່ເຮັດຜິດນັ້ນຄືນດີ ເຂົ້າມາຮ່ວມສາມັກຄີທັມອີກ. ມັນບໍ່ແມ່ນການລົງໂທດໃຫ້ອັບອາຍ ແຕ່ມັນເປັນການຊອກເອົາການຖິ້ມໃຈເກົ່າແລະເອົາໃຈໃໝ່ຂອງຜູ້ທີ່ເຮັດຜິດ.

**<u>ຄຳຖາມ:</u>**

1. ທ່ານເຮັດແນວໃດໃນເມື່ອມີຄົນເຮັດໃຫ້ທ່ານເສັຽໃຈ? ທ່ານໄດ້ຕອບສນອງເໝືອນອົງພຣະຄຣິດ ຫລືເຮັດເໝືອນຄົນທີ່ບໍ່ຮູ້ຈັກພຣະເຈົ້າ?

2. ໃນກໍຣະນີໃດທ່ານຄິດວ່າຄຣິສຕະຈັກຄວນຕີສອນ? ຈະເອົາອັນໃດມາປະກອບໃຊ້ຕີສອນສະມາຊິກໃນຄຣິສຕະຈັກ? ຄຣິສຕະຈັກຈະເອົາລະບົບການໃດມາໃຊ້?

3. ມີຜູ້ໃດບໍ່ໃນຄຣິສຕະຈັກທີ່ທ່ານບໍ່ສາມາດອະພັຍໃຫ້ໄດ້? ບາດກ້າວອັນໃດທ່ານຕ້ອງເຮັດເພື່ອຈະໄດ້ສ້າງຄວາມສັມ

ພັນດີຂຶ້ນ?

4. ມີຜົນປະໂຫຍດອັນໃດເກີດຂຶ້ນໃນເມື່ອຄຣິສຕະຈັກຂອງທ່ານໄດ້ຕີສອນຄົນນຶ່ງຄົນໃດ ແລະບໍ່ໃຫ້ຄົນນັ້ນມີພາກສ່ວນໃນຄຣິສຕະຈັກ ແຕ່ຄົນນັ້ນຊ້ຳພັດໄປເປັນສະມາຊິກກັບໂບດໃກ້ຄຽງ?

*ດຣ. ບູນ ວົງສຸຣິດທ໌*

# ບົດຮຽນທີ 9
# ເມື່ອມີຊີວິດໃຫມ່

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂກໂລຊາຍ 3:1-14
**ພູມຫລັງຂອງພຣະຄັມພີ:** ໂກໂລຊາຍ 2:20--3:14
**ຈຸດສຳຄັນຂອງບົດຮຽນນີ້:** ຄຣິສຕຽນຈະຕ້ອງຢູ່ເພື່ອພຣະນາມແຫ່ງພຣະເຢຊູຄຣິດ.
**ຄຳຖາມເພື່ອການຄົ້ນຄວ້າ:** ທ່ານໄດ້ຢູ່ເພື່ອພຣະຄຣິດແນວໃດ?
**ຈຸດປະສົງຂອງບົດຮຽນນີ້:** ຕັດສິນໃຈຈະຢູ່ເພື່ອພຣະຄຣິດ.

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ທຸກຄົນທີ່ເຊື່ອໃນພຣະເຢຊູເປັນຜູ້ຮັບໃຊ້ພຣະເຈົ້າ.

## ຄຳນຳ

ທຸກຄົນທີ່ບັງເກີດໃຫມ່ໃນພຣະເຢຊູຄຣິດຈະບໍ່ມີຄວາມຄຶດຈິດໃຈເຫມືອນເດີມ ເພາະວ່າຫລັກສະນະການເປັນຢູ່ເມື່ອກ່ອນນັ້ນໄດ້ຕາຍໄປກັບພຣະເຢຊູຄຣິດທີ່ໄມ້ກາງແຂນເປັນທີ່ຮຽບຮ້ອຍແລ້ວ ຊີວິດທີ່ລາວມີນເວລານີ້ນັ້ນແມ່ນຊີວິດທີ່ມີຢູ່ໃນພຣະເຢຊູຄຣິດ ດັ່ງນັ້ນລາວຈະມີຄວາມຄຶດຈິດໃຈຂອງພຣະຢຊູ.

## 1. ຈາກຊີວິດເກົ່າຄືນມາຮັບຊີວິດໃຫມ່ ( ໂກໂລຊາຍ 3:1-4 )

ໂປໂລກ່າວກັບຄຣິສຕຽນໃນເມືອງໂກໂລຊາຍວ່າ ພວກເຂົາໄດ້ຄືນມາດ້ວຍກັນກັບພຣະຄຣິດແລ້ວ ໃນຂະນະທີ່ເຂົາຮັບບັບຕິສະມານັ້ນ, ການບັບຕິສະມາເປັນການປະກາດຖິ້ມໃຈເກົ່າເອົາໃຈໃຫມ່ຕັດສິນໃຈເດີນຕາມພຣະເຢຊູຄຣິດ. ໂປໂລໄດ້ກ່າວມາແລ້ວວ່າ *"ໄດ້ຖືກຝັງໄວ້ກັບພຣະອົງໃນພິທີບັບຕິສະມາແລ້ວ "* (2:12) ມີຄວາມຫມາຍວ່າຊີວິດເກົ່າທີ່ເນົ່າເຫມັນນັ້ນໄດ້ຕາຍແລະຝັງຕອນຮັບບັບຕິສະມາພຸ້ນ ແລະຈາກນັ້ນພີ່ນ້ອງເອເຟໂຊໄດ້ຟື້ນຄືນມາຈາກຕາຍໃນນ້ຳບັບຕິສະມາ ແລະໄດ້ຮັບຊີວິດໃຫມ່ໃນພຣະເຢຊູແລ້ວ ເຂົາຈຶ່ງບໍ່ເປັນຄົນເດີມອີກຕໍ່ໄປ ເພາະວ່າຄວາມຄຶດຂອງເຂົາໄດ້ຮັບການປ່ຽນແປງ ຊຶ່ງຕໍ່ຈາກນີ້ໄປເຂົາຈະເປັນຄົນເອົາໃຈໃສ່ໃນສິ່ງທີ່ຢູ່ເບື້ອງເທິງ ແທນທີ່ຈະເອົາໃຈໃສ່ຝ່າຍໂລກນີ້. ໂປໂລຍັງກ່າວເຕືອນອີກວ່າ ພຣະເຢຊູຄຣິດຊົງສະຖິດໃນສວັນທີ່ກ້ຳຂວາຂອງພຣະເຈົ້າ ດັ່ງນັ້ນຈົ່ງເອົາໃຈໃສ່ຫລືຕັ້ງໃຈໃນສິ່ງທີ່ຢູ່ ເບື້ອງເທິງໃຫ້ຫລາຍກວ່າເກົ່າ, ການທີ່ພຣະເຢຊູຊົງສະຖິດໃນສວັນທີ່ກ້ຳຂວາຂອງພຣະບິດາ ນັ້ນກໍປຽບເຫມືອນວ່າຜູ້ທີ່ຮັບບັບຕິສະມານັ້ນໄດ້ຢູ່ທີ່ດຽວກັນກັບພຣະເຢຊູຄຣິດ ເພາະວ່າຊີວິດເກົ່າຂອງເຂົາໄດ້ຕາຍໄປແລ້ວໃນນ້ຳບັບຕິສະມາຫລືຄວາມຜິດບາບທີ່ເຂົາໄດ້ກະທຳນັ້ນໄດ້ຖືກທຳລາຍໄປແລ້ວທີ່ເທິງກາງແຂນຮ່ວມກັບພຣະເຢຊູຄຣິດ ແລະຊີວິດໃຫມ່ຂອງເຂົານັ້ນໄດ້ມີໃນພຣະເຢຊູຄຣິດ ດັ່ງນັ້ນເມື່ອພຣະເຢຊູຢູ່ສວງສວັນຊີວິດໃຫມ່ຂອງເຂົາກໍຢູ່ໃນພຣະອົງນັ້ນ, ດ້ວຍເຫດນີ້ບຸກຄົນທີ່ບັງເກີດໃຫມ່ໃນພຣະເຢຊູຄຣິດສົມຄວນຈະຕັ້ງໃຈໃນສິ່ງທີ່ຢູ່ເບື້ອງເທິງຫລາຍກວ່າ. ດຽວນີ້ຊີວິດຂອງຄຣິສຕຽນທີ່ຮັບບັບຕິສະມາ ແລະມີຊີວິດໃນພຣະເຢຊູນັ້ນຍັງບໍ່ທັນປາກົດ ໂປໂລຈຶ່ງກ່າວວ່າ *ແລະຊີວິດຂອງພວກ*

*ເຈົ້າ ກໍຊົງບັງໄວ້ດ້ວຍກັນກັບພຣະຄຣິດໃນພຣະເຈົ້າ ເມື່ອໃດພຣະຄຣິດ ຜູ້ຊົງເປັນຊີວິດທີ່ແທ້ຈິງຂອງເຮົາທັງຫລາຍຊົງປາກົດ ເມື່ອນັ້ນເຈົ້າທັງຫລາຍກໍຈະປາກົດພ້ອມກັນກັບພຣະອົງໃນສະງ່າຣາສີເຫມືອນກັນ.* (ຂໍ້ 3-4).

ໂປໂລກ່າວກັບພີ່ນ້ອງເມືອງໂກຣິນໂທວ່າ "*ເຫດສັນນັ້ນຖ້າຜູ້ໃດຢູ່ໃນພຣະຄຣິດ ຜູ້ນັ້ນກໍເປັນຄົນທີ່ຊົງສ້າງຂຶ້ນໃໝ່ແລ້ວ ຖານະເກົ່າເຫລົ່ານັ້ນກໍລ່ວງໄປແລ້ວ ເບິ່ງແມ, ກາຍເປັນສິ່ງໃໝ່ທັງນັ້ນ* " (2ກຣທ 5:17). ມີຄວາມໝາຍວ່າໃຜກໍຕາມມີຄວາມໃກ້ຊິ ຕິດສນິດກັບພຣະເຢຊູຄຣິດ ຜູ້ນັ້ນກໍຈະກາຍເປັນຄົນໃໝ່, ວິຖີຊີວິດກ່ອນໜ້າພົບກັບພຣະເຢຊູນັ້ນກໍຈະລ່ວງກາຍໄປ ຫລືພົ້ນກາຍໄປ ຫລືຕາຍໄປກໍວ່າໄດ້ ເມື່ອສິ່ງເກົ່າໆຫລືຖານະການເປັນຢູ່ແບບເກົ່າຜ່ານກາຍໄປ ລາວຈຶ່ງກາຍເປັນຄົນໃໝ່ ໂປໂລບອກອີກວ່າບໍ່ແມ່ນໃໝ່ແຕ່ພາກສ່ວນໃດພາກສ່ວນນຶ່ງເທົ່ານັ້ນ ແຕ່ທັງໝົດກາຍເປັນສິ່ງໃໝ່ທັງນັ້ນ.

**2. ສິ່ງທີ່ຄວນເອົາອອກ** (ໂກໂລຊາຍ 3:5-11 )

ໂປໂລກ່າວວ່າຊີວິດກ່ອນພົບພຣະເຢຊູເປັນຊີວິດທີ່ຕາຍແລ້ວໃນຄວາມຜິດບາບ, ຄຳວ່າຕາຍແລ້ວໃນຄວາມຜິດບາບແມ່ນຊີວິດທີ່ເຮັດຕາມໃຈໂດຍບໍ່ຄຳນຶງເຖິງວ່າຕົນເອງເຮັດຜິດບາບອັນໃດຂໍພຽງແຕ່ໄດ້ຢ່າງດຽວ, ແຕ່ເມື່ອຮັບຊີວິດໃໝ່ແລ້ວໂປໂລຍັງຢ້ຳອີກວ່າ *ຈົ່ງປະຫານນິສັຍສ່ວນທີ່ອ່ຽງໄປຝ່າຍໂລກຂອງເຈົ້າທັງຫລາຍນັ້ນເສັຽ* (ຂໍ້ 5). ລາງເທື່ອເຮົາຈະມີຄຳຖາມວ່າ ນິສັຍທີ່ອຽງໄປຝ່າຍໂລກແປວ່າຫຍັງ ຫລືມີຫຍັງແດ່ ດັ່ງນີ້ເປັນຕົ້ນ, ໂປໂລໄດ້ຂຽນບອກເປັນລາຍການຈາກຂໍ້ 5-11 ຢ່າງລະອຽດ. ສັງເກດເຫັນວ່າໂປໂລໄດ້ແນະນຳໃຫ້ປະຫານເຣື່ອງການຫລິ້ນຊູ້ເປັນປະການແຣກ, ເວົ້າເຖິງການຫລິ້ນຊູ້ອາດຈະແບ່ງເປັນສອງຈຳພວກຄື; 1. ມີພຣະອົງອື່ນ, ຫລືນັບຖືພຣະອື່ນອີກແປວ່ານອກເໜືອຈາກພຣະເຈົ້າອົງທ່ຽງແທ້ແລ້ວຍັງມີພຣະອື່ນອີກ. 2. ຫລິ້ນຊູ້ແບບຊາຍຍິງ ຫລືຊູ້ທາງເພດນັ້ນເອງ, ຄວາມຈິງແລ້ວການທີ່ຊາຍຍິງມີເພດສັມພັນນັ້ນແມ່ນພອນອັນນຶ່ງຈາກພຣະເຈົ້າຫາກໃຊ້ແບບຖືກຕ້ອງ ແຕ່ຫາກໃຊ້ທາງຜິດກໍເກີດເປັນຄວາມຜິດບາບ ເຊັ່ນການມີເພດສັມພັນກ່ອນແຕ່ງງານ ແລະການມີເພດສັມພັນນອກເໜືອຈາກຄູ່ແຕ່ງງານກໍລ້ວນແຕ່ເປັນບາບທັງນັ້ນ, ສິ່ງເຫລົ່ານີ້ຈຶ່ງເອົາອອກຈາກຊີວິດຂອງເຮົາ.

ໂປໂລໄດ້ເວົ້າເຖິງຄວາມໂລບມາກຫລືຄວາມຢາກໄດ້ບໍ່ຮູ້ຈັກພໍ, ພວກເຖົ້າແກ່ບູຮານມັກໃຊ້ຄຳວ່າ ຄົນຕັນຫາພາໂລຫລືຄວາມປາຖນາຝ່າຍໂລກເຊັ່ນ; ການຊົ່ວຮ້າຍ, ຣາຄະຕັນຫາ, ຄວາມປາຖນາຊົ່ວ, ແລະໂລບຊຶ່ງເປັນການໄຫວ້ພຣະທຽມ ສິ່ງເຫລົ່ານີ້ໂປໂລເຕືອນວ່າ *ເພາະສິ່ງເຫລົ່ານີ້ ພຣະພິໂຣດຂອງພຣະເຈົ້າຈຶ່ງຈະລົງມາເທິງຄົນທັງປວງທີ່ບໍ່ຍອມເຊື່ອຟັງ* (ຂໍ້ 6). ແປວ່າຫາກຜູ້ໃດມີສິ່ງເຫລົ່ານີ້ພຣະຈົ້າຈະໂກດຮ້າຍແລະລົງໂທດຜູ້ນັ້ນ.

ໂປໂລໄດ້ບັນທຶກເປັນລາຍການອັນຍືດຍາວເປັນປະການທີສອງເພື່ອເຕືອນໃຈພີ່ນ້ອງເມືອງໂກໂລຊາຍໃຫ້ຫລີກໜີຈາກສິ່ງທີ່ເພິ່ນກ່າວມານັ້ນ. ໂປໂລໃຊ້ການນຸ່ງຫົ່ມເຄື່ອງເປັນຄຳປຽບທຽບຊີວິດເກົ່າແລະຊີວິດໃໝ່ເພື່ອໃຫ້ພີ່ນ້ອງເຫັນຮູບພາບ, ຄົນທີ່ນຸ່ງຫົ່ມເຄື່ອງໃໝ່ແລະສະອາດຈະບໍ່ມີກິ່ນສາບຄາວຄືເຄື່ອງເກົ່າທີ່ນຸ່ງມາແລ້ວຕັ້ງຫລາຍວັນແລະບໍ່ໄດ້ທຳຄວາມສະອາດຈັກເທື່ອ. ເຄື່ອງເກົ່າທີ່ໂປໂລກ່າວເຖິງນັ້ນແມ່ນ; *ຄວາມຄຽດ ຄວາມໂມໂຫ ການຄິດປອງຮ້າຍ ການກ່າວສຽດສີ ແລະຄຳຫຍາບຄາຍ ຢ່າໃຫ້ອອກຈາກປາກຂອງພວກເຈົ້າຢ່າກ່າວຄວາມຕົວະຕໍ່ກັນເພາະວ່າເຈົ້າທັງຫລາຍໄດ້ຖອດຖິ້ມສະພາບມະນຸດເກົ່າກັບການຂອງມະນຸດນັ້ນແລ້ວແລະໄດ້ສວມສະພາບມະນຸດໃຫມ່ທີ່ກຳລັງຊົງສ້າງຂຶ້ນໃຫມ່ຢູ່ສເມີໃຫ້ເຖິງຄວາມຮູ້ຈັກພຣະເຈົ້າຢ່າງຄົບຖ້ວນຕາມພຣະລັກສະນະຂອງພຣະອົງຜູ້ຊົງສ້າງຂຶ້ນນັ້ນ* (ຂໍ້ 9-10).

ມີພວກສາສນາສາດພາກັນສັນນິຖານວ່າ ໃນສມັຍບູຮານນັ້ນຄົນທີ່ຕຽມຮັບບັບຕິສະມາໄດ້ປ່ຽນເຄື່ອງນຸ່ງເກົ່າອອກຖິ້ມແລ້ວທາງໂບດໄດ້ຈັດເຄື່ອງນຸ່ງຫົ່ມຂາວຊຶ່ງເປັນສັນຍາລັກໃນການຮັບຊີວິດໃໝ່ ດ້ວຍເຫດນີ້ໂປໂລຈຶ່ງເວົ້າວ່າ *ຖອດຖິ້ມສະພາບມະນຸດເກົ່າກັບການຂອງມະນຸດນັ້ນແລ້ວແລະໄດ້ສວມສະພາບມະນຸດໃຫມ່.* ເພື່ອສືບຕໍ່ຄວາມຄິດນີ້ໂບດສ່ວນ

ຫລາຍໃນເວລານີ້ມັກຈະໃຫ້ຜູ້ຮັບບັບຕິສະມານຸ່ງເຄື່ອງຂາວໃນພິທີຮັບບັບຕິສະມາ ເພື່ອເປັນສັນຍາລັກວ່າຜູ້ຮັບບັບຕິສະມານັ້ນເປັນຄົນຖິ້ມໃຈເກົ່າເອົາໃຈໃໝ່ ຫລືບັງເກີດໃໝ່ໃນພຣະເຢຊູແລ້ວຈຶ່ງມີຄວາມຂາວສະອາດທີ່ໄດ້ສວມຊີວິດໃໝ່, ໂປໂລສັ່ງໃຫ້ຖອດສະພາບຄົນເກົ່າ ແລ້ວສວມສະພາບຄົນໃຫມ່ໃຫ້ສອດຄ່ອງກັບຄຳສອນພຣະເຢຊູທີ່ໄດ້ກ່າວວ່າ *"ເອົາບໍ່ເອົາເຫລົ້າແວງໃຫມ່ມາໃສ່ໄວ້ໃນຖົງຫນັງເກົ່າ ຖ້າເຮັດຢ່າງນັ້ນຖົງຫນັງຈະຂາດແລະເຫລົ້າແວງຈະຣົ່ວອອກທັງຖົງຫນັງກໍຈະເສັຽໄປເຫມືອນກັນ ແຕ່ເຂົາເອົາເຫລົ້າແວງໃຫມ່ໃສ່ໄວ້ໃນຖົງຫນັງໃຫມ່ ແລ້ວທັງສອງຢ່າງກໍຢູ່ດີດ້ວຍກັນ"* (ມັດທາຍ 9:17).

## 3. <u>ສິ່ງຄວນສວມໃສ່</u> (ໂກໂລຊາຍ 3:10-14)

ຄຣິສຕຽນເມືອງໂກໂລຊາຍໄດ້ຮັບຊີວິດໃໝ່ໃນພຣະເຢຊູຄຣິດແລ້ວ ໂປໂລບອກໃຫ້ເຂົາສວມສິ່ງໃໝ່ເຂົ້າໃນຊີວິດເພື່ອຈະເປັນການເໝາະສົມກັບຊີວິດໃຫມ່, ເພາະຄຣິສຕຽນຈຳຕ້ອງເລືອກເຮັດແຕ່ສິ່ງຖືກເພື່ອເປັນການເລີ້ມຕົ້ນ ຊຶ່ງເປັນການກົງກັນຂ້າມກັບບັນດາຫືວໜ້າພະແນກການຕ່າງໆ ທີ່ເຮັດໄປໂລດ ຜິດແລ້ວຈຶ່ງສ້ອມແປງທີຫລັງ. ດັ່ງນັ້ນໂປໂລຈຶ່ງປ່າວເຕືອນຄຣິສຕຽນເມືອງໂກໂລຊາຍໃຫ້ເລີ້ມຕົ້ນຊີວິດໃຫມ່ດ້ວຍການຖືກຕ້ອງຄື 1. ເອົາອັນເກົ່າເນົ່າເໝັນອອກ. 2. ເອົາອັນໃຫມ່ເຂົ້າມາຄື; *ຈົ່ງສວມໃຈເມດຕາ ໃຈປານີ ໃຈຖ່ອມລົງ ໃຈອ່ອນສຸພາບ ໃຈອົດທົນດົນນານ ຈົ່ງຜ່ອນຫນັກຜ່ອນເບົາເຊິ່ງກັນ ແລະກັນ ແລະຖ້າແມ່ນຜູ້ໃດມີເຣື່ອງຕໍ່ກັນ ກໍຈົ່ງຍົກໂທດໃຫ້ກັນແລະກັນ* (ຂໍ້ 12-13). ຄຳວ່າສວມກໍມີຄຳຄ້າຍຄືກັບສວມເສື້ອຜ້າ, ເມື່ອສວມເສື້ອຜ້າແລ້ວເສື້ອຜ້ານັ້ນກໍປົກຄຸມທົ່ວທັງຮ່າງກາຍບ່ອນທີ່ມີເສື້ອຜ້າປົກຄຸມກໍງົດງາມໄປຕາມເນື້ອຜ້າແລະລາຍສີຂອງມັນ ເມື່ອເປັນເຊັ່ນນັ້ນເຮົາກໍສາມາດຮູ້ໄດ້ວ່າເສື້ອຜ້າທີ່ຈະສວມນັ້ນບໍ່ໄດ້ມາພ້ອມຮ່າງກາຍຂອງເຮົາ, ດັ່ງນັ້ນຄຳວ່າສວມໃຈເມດຕາ, ສວມໃຈປານີ, ສວມໃຈຖ່ອມລົງ, ສວມໃຈອ່ອນສຸພາບ, ສວມໃຈອົດທົນດົນນານ, ຕລອດເຖິງການຜ່ອນໜັກຜ່ອນເບົາແລະການຍົກໂທດໃຫ້ກັນແລະກັນນັ້ນອາດຈະບໍ່ມີໃນຊີວິດຂອງເຂົາ ແຕ່ເມື່ອເຂົາສວມມັນແລ້ວເຂົາກໍຈະມີໃຈປານີ,ໃຈຖ່ອມລົງ,ໃຈອ່ອນສຸພາບ,ໃຈອົດທົນດົນນານ, ແລະສາມາດໃນການຜ່ອນໂທດຊຶ່ງກັນແລະກັນ, ເພາະເຄື່ອງທີ່ເຂົາສວມນັ້ນຈະກາຍເປັນເຄື່ອງປະດັບຄວາມເຊື່ອຂອງເຂົາໃຫ້ສວຍງາມເລີ້ມຕົ້ນຈາກຈິດໃຈໃສສະອາດ ເມື່ອຈິດໃຈໃສສະອາດແລ້ວການດຳຣົງຊີວິດຂອງເຂົາກໍຈະໃສສອາດໄປຕາມກັນ.

ຄວາມຈິງແລ້ວເຣື່ອງໃຈເມດຕາປານີນີ້ໃຜໆກໍພໍມີຢູ່ດອກ ມັນຕ່າງບ່ອນວ່າຜູ້ນຶ່ງມີຄວາມເມດຕາແຕ່ບໍ່ເຮັດຫຍັງເລີຽອີກ ຜູ້ນຶ່ງເມດຕາພາຍໃນຈິດໃຈແລ້ວສະແດງອອກເຖິງການປະຕິບັດ. ເຣື່ອງຂອງການຖ່ອມໃຈນັບວ່າເປັນການຍາກທີ່ສຸດທີ່ສາມັນຊົນຈະເຮັດໄດ້, ຫາກເຮົາຈະຖາມຄົນທົ່ວໄປວ່າຖ່ອມຕົວຫລືຖ່ອມລົງນັ້ນມີຄວາມໝາຍແນວໃດ? ຫລາຍຄົນກໍຈະຕອບຢ່າງຍືດຍາວ ສາສນາສາດຜູ້ນຶ່ງແປຄຳວ່າຖ່ອມໃຈແປວ່າ *"ເອົາໂຕເອງລົງຕ່ຳ"* ຊຶ່ງເພິ່ນໝາຍເຖິງຍອມໃຫ້ຜູ້ອື່ນຢູ່ເໜືອຕົນ, ແຕ່ການຈະຍອມໃຫ້ຜູ້ອື່ນຢູ່ເໜືອຕົນນັ້ນບໍ່ແມ່ນທຸກຄົນຈະເຮັດໄດ້ນອກຈາກຜູ້ທີ່ສວມຊີວິດໃໝ່ຢ່າງແທ້ຈິງເທົ່ານັ້ນ, ການອົດທົນກໍເປັນອີກເຣື່ອງນຶ່ງທີ່ໂປໂລເນັ້ນໜັກໃຫ້ຄຣິສຕຽນໂກໂລຊາຍໄດ້ຮຽນເອົາແບບຢ່າງການອົດທົນດົນນານຂອງພຣະເຢຊູທີ່ໄມ້ກາງແຂນ, ອີກປະການນຶ່ງການຜ່ອນໜັກແລະຍົກໂທດຊຶ່ງກັນແລະກັນນັ້ນເປັນຖານະໃໝ່ຂອງຄຣິສຕຽນຈະຕ້ອງມີ ເພາະວ່າພຣະຢຊູໄດ້ເປັນຜົນແຣກທີ່ຜ່ອນໂທດພວກເຮົາທຸກຄົນ. ເຣື່ອງທັງໝົດນີ້ເປັນເຣື່ອງທີ່ເຮົາທັງຫລາຍຈະປະຕິບັດຕົວໄດ້ຍາກແຕ່ໂປໂລໄດ້ບອກວິທີໃຫ້ຄື *"ເອົາຄວາມຮັກເປັນສາຍຜູກມັດທຸກສິ່ງໄວ້ໃຫ້ເຖິງທີ່ຄົບຖ້ວນ"* (ຂໍ້ 14).

**<u>ຄຳຖາມ:</u>**

1. ໂປໂລກ່າວວ່າຊີວິດເກົ່າລ່ວງໄປຊີວິດໃໝ່ທີ່ມີແມ່ນຊ້ອນຢູ່ໃນພຣະເຢຊູຄຣິດໝາຍຄວາມວ່າແນວໃດ?

2. ມີຫຍັງແດ່ທີ່ທ່ານໄດ້ຮັບການປ່ຽນແປງຫລັງຈາກພົບພຣະເຢຊູຄຣິດ? ແລະມີຫຍັງແດ່ຍັງບໍ່ທັນປ່ຽນ?

3. ໂປໂລໄດ້ກ່າວເຣື່ອງຊົ່ວຮ້າຍໃນຊີວິດເກົ່າ, ທ່ານຄິດວ່າຍັງມີຫຍັງແດ່ທີ່ເພິ່ນບໍ່ເວົ້າ?

4. ໂປໂລໄດ້ກ່າວຫລາຍຢ່າງໃນຊີວິດໃໝ່, ທ່ານຄິດວ່າມີຫຍັງແດ່ທີ່ເພິ່ນບໍ່ກ່າວ?

5. ຊີວິດໃໝ່ທີ່ຄຣິສຕຽນຄວນສວມໃສ່ນັ້ນແມ່ນຫຍັງ? ທ່ານຄິດວ່າແມ່ນຫຍັງທີ່ທ່ານສວມຍາກກວ່າໝູ່?

6. ທ່ານເຄີຍໄດ້ຍິນຄຣິສຕຽນເວົ້າເຣື່ອງການຖ່ອມຕົວ ຫລືຖ່ອມໃຈຢູ່ເລື້ອຍໆ, ສຳລັບທ່ານເດ ຖ່ອມຕົວຫລືຖ່ອມໃຈແປວ່າຫຍັງ?

7. ເຮົາຮູ້ແລ້ວວ່າການທີ່ຈະສວມຊີວິດໃໝ່ໃຫ້ຄົບບໍຣິບູນນັ້ນມັນຍາກ ແຕ່ເພື່ອຊ່ອຍເຮົາໃຫ້ເຮັດໄດ້ ໂປໂລແນະນຳຫຍັງໃນຕອນທ້າຍ?

*ດຣ. ທຸມພັນ ວົງສຸຣິດທ໌*

# ບົດຮຽນທີ 10
# ພຣະຄຳຂອງພຣະເຈົ້າຄວນມາກ່ອນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ 2:42; ໂຣມ 15:4; 2 ຕີໂມທຽວ 3:14-17; 2 ເປໂຕ 1:19-21

**ພູມຫລັງຂອງພຣະຄັມພີ:** ກິຈການ 2:42; ໂຣມ 15:4; 2 ຕີໂມທຽວ 3:14-17; 2 ເປໂຕ 1:19-21

**ຈຸດສຳຄັນຂອງບົດຮຽນນີ້:** ຄຣິສຕະຈັກສມັຍທຳອິດແລະສະມາຊິກທຸກຄົນໄດ້ຍົກໃຫ້ພຣະຄຳຂອງພຣະເຈົ້າມາກ່ອນ ຊຶ່ງເປັນຮາກຖານຂອງຄວາມເຊື່ອແລະການປະຕິບັດ

**ຄຳຖາມເພື່ອຄົ້ນຄວ້າ:** ທ່ານແລະຄຣິສຕະຈັກຂອງທ່ານຈະຕັດສິນໃຈຢ່າງໃດກ່ຽວກັບເຣື່ອງນີ້?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະໄດ້ໃຫ້ເຫດຜົນວ່າ ເປັນຫຍັງພຣະຄຳຂອງພຣະເຈົ້າຈຶ່ງເປັນຮາກຖານຂອງຄວາມເຊື່ອແລະການປະຕິບັດ.

**ຄົ້ນຄວ້າ ພ້ອມກັບການປະຕິບັດ**

- ຢັ້ງຢືນວ່າ ພຣະຄັມພີມີອຳນາດໃນການນຳພາຊີວິດ ແລະໃນການປ່າວປະກາດ
- ເສີມຂຍາຍການເຕີບໃຫຍ່ຂຍາຍຕົວຢ່າງບໍ່ຢຸດຢັ້ງ
- ສ້າງຜູ້ນຳ

**ຄຳນຳ**

ເມື່ອຂ້າພະເຈົ້າມາເຖິງສູນອົພຍົບໃຫມ່ໆ ອົງການຊ່ວຍເຫລືອກໍໄດ້ມາແຈກຢາຍເຄື່ອງໃຊ້ທີ່ຈຳເປັນຕ່າງໆໃນນັ້ນກໍມີພຣະຄັມພີສອດແຊກມາດ້ວຍ. ຂ້າພະເຈົ້າກໍໄດ້ໃຊ້ປຶ້ມຫົວນັ້ນອ່ານເພື່ອຂ້າເວລາ ໃນຂະນະທີ່ບໍ່ມີຫຍັງເຮັດ. ເມື່ອອ່ານນານໆແລ້ວພຣະຄັມພີກໍເລີຍກາຍມາເປັນສິ່ງສຳຄັນໃນຊີວິດຂອງຂ້າພະເຈົ້າ. ບໍ່ດົນນານພໍທ່ໃດຂ້າພະເຈົ້າກໍມີ ຄວາມຮູ້ສຶກຢາກຮັບໃຊ້ວຽກງານຂອງພຣະເຈົ້າ ແລະໃນທີ່ສຸດກໍຍອມຖວາຍຕົວຮັບໃຊ້ພຣະເຈົ້າ.

ລອງມາທວນຄິດນຳກັນເຖິງຄຣິສຕະຈັກສມັຍທຳອິດ. ຫລັງຈາກວັນເພັນເຕຄອສແລ້ວ, ຄຣິສຕະຈັກກໍເລີ້ມມີການຂຍາຍຢ່າງວ່ອງໄວ ເພາະພຣະວິນຍານບໍຣິສຸດນຳພາ, ພວກສາວົກ ກໍພະຍາຍາມສ້າງຜູ້ນຳ, ໃຫ້ຄົນຜູ້ທີ່ເຊື່ອໃຫມ່ຮັບສິນບັບຕິສມາ, ແລະສິດສອນຖ້ອຍຄຳຂອງພຣະເຢຊູໃຫ້ແກ່ພວກເຂົາເຈົ້າ.

ຊີວິດຄຣິສຕຽນຈຳເປັນຕ້ອງຍອມຖວາຍຕົນເອງໃຫ້ກັບສິ່ງທີ່ເປັນທີນຶ່ງກ່ອນ. ພວກສມັຍທຳອິດ ເຂົາເຈົ້າຍອມຮັບຄຳສອນຈາກພວກອັຄສາວົກ (ກຈ. 2:42) ພິຈາຣະນາເບິ່ງຄຳສອນຂອງເປໂຕທີ່ກ່າວເຖິງການປ່ຽນແປງໃນການຜິດພາດຂອງຕົນເອງ, ຫລືໂທມາທີ່ເອົາຊະນະຄວາມຂີ້ສົງສັຍ, ຫລືໂຢຮັນທີ່ກ່າວເຖິງເຣື່ອງຄວາມຮັກ. ຕົວຢ່າງເຫລົ່ານີ້ເປັນສິ່ງທີ່ດີຫລາຍສຳລັບພວກເຮົາທຸກຄົນເພື່ອຖອດຖອນບົດຮຽນ.

ພວກສາວົກພາກັນສິດສອນກ່ຽວກັບພຣະຄັມພີເດີມແລະພຣະຄຳຂອງພຣະເຢຊູ. ຕົວຢ່າງທີ່ດີເລີດກວ່າຫມູ່ກໍແມ່ນຄຳສອນຂອງເປໂຕທີ່ກ່າວໃນວັນເພັນເຕຄອສເຕ. ເພິ່ນກ່າວແລ້ວກ່າວອີກເພື່ອໃຫ້ເຫັນເຖິງການຊົງສ້າງ ຂອງພຣະເຈົ້າແລະເພື່ອພວກເຂົາເຈົ້າຈະລະນຶກເຖິງພຣະຄຸນໃນການຊົງໄຖ່ຂອງພຣະເຢຊູຄຣິດ. (ລູກາ 24: 27)

1. <u>ພົບທັງຄວາມຫຍຸ້ງຍາກແລະການຫນູນໃຈໃນພຣະຄຳ</u> (ກິຈການ 2:42; ໂຣມ15:4)

ຈົດໝາຍຂອງໂປໂລທີ່ຂຽນໂປເຖິງພີ່ນ້ອງຊາວກຸງໂຣມເປັນຈົດໝາຍທີ່ດີຫລາຍ ທີ່ກ່າວກ່ຽວກັບການເຊື່ອຖືທາງສາສນາ. ໂຣມ ບົດທີ 12 ຫາ ບົດທີ 16, ເພິ່ນໄດ້ກ່າວເຖິງການດຳເນີນຊີວິດຂອງຜູ້ທີ່ເຊື່ອໂດຍສະເພາະໂຣມບົດທີ 14 ຫາ ບົດທີ 15 ພວກເຮົາໄດ້ຮຽນຮູ້ວ່າຜູ້ທີ່ເຊື່ອທັງຫລາຍທີ່ມີຄວາມເຂັ້ມແຂງກໍພາກັນຍອມຮັບເອົາຜູ້ທີ່ມີຄວາມເຊື່ອອ່ອນ. ພວກເຮົາທີ່ມີຄວາມເຊື່ອທັງຫລາຍບໍ່ຄວນຈະຢູ່ເພື່ອຕົນເອງເທົ່ານັ້ນຕ້ອງພະຍາຍາມເສີມສ້າງຊຶ່ງກັນແລະກັນ. ພຣະເຢຊູຄຣິດຊົງເປັນຕົວຢ່າງໃຫ້ແກ່ພວກເຮົາ, ພຣະອົງບໍ່ໄດ້ດຳເນີນຊີວິດເພື່ອຕົນເອງເທົ່ານັ້ນ. ໂປໂລອ້າງເຖິງພຣະຄັມພີເດີມ ເພງສັຣເສີນ ບົດທີ 69:9 ເພື່ອຊີ້ໃຫ້ເຫັນວ່າ ຜູ້ຕິດຕາມພຣະເຢຊູຈະຕ້ອງຖືກຢຽດຫຍາມ ແຕ່ຄຳຢຽດຫຽາມເຫລົ່ານັ້ນຈຳຕ້ອງຕົກສູ່ຕົວເຂົາເອງ. ໂຣມ 15:3. ໂປໂລຍັງໄດ້ອະທິບາຍໃນຂໍ້ຕໍ່ໄປວ່າເປັນຫຍັງຈຶ່ງໃຊ້ພຣະຄັມພີເດີມມາສັ່ງສອນຄົນຍຸກໃໝ່. "ດ້ວຍວ່າ ທຸກສິ່ງທີ່ຂຽນໄວ້ໃນສມັຍກ່ອນນັ້ນກໍຂຽນໄວ້ເພື່ອສັ່ງສອນພວກເຮົາ ເພື່ອພວກເຮົາຈະໄດ້ມີຄວາມຫວັງໂດຍຄວາມພຽນແລະຄວາມຊ່ອຍຊູໃຈທາງພຣະຄັມພີນັ້ນ." ໂຣມ 15:4

ພຣະຄັມພີເປັນສິ່ງສຳຄັນບໍ່ວ່າຈະຢູ່ໃນຍຸກໃດສມັຍໃດກໍຕາມ. ເພາະວ່າພຣະເຈົ້າໄດ້ຊົງດົນໃຈໃຫ້ມະນຸດຂຽນຂຶ້ນ. ທຸກວັນນີ້ພຣະຄັມພີກໍຍັງຊ່ອຍບັນດາຜູ້ທີ່ມີຄວາມເຊື່ອທັງຫລາຍໃຫ້ເຂັ້ມແຂງ.

ໂປໂລຮຽກຮ້ອງໃຫ້ມີຄວາມອົດທົນພາກພຽນແລະການຊ່ອຍຊູໜູນໃຈ. ຄວາມອົດທົນພາກພຽນໝາຍເຖິງການຍອມຢູ່ໃຕ້ການນຳພາຂອງພຣະຄັມພີ. ພຣະຄັມພີເປັນສີລາອັນແຂງແກ່ນ ແມ່ນວ່າຊີວິດຈະຂັດສົນຫຍຸ້ງຍາກ ແຕ່ພຣະຄັມພີຈະໃຫ້ກຳລັງຜ່ານຜ່າສິ່ງເຫລົ່ານີ້ໄປໄດ້. ຖ້ອຍຄຳນີ້ຈະເຫັນໄດ້ໃນພຣະທັມໂຢຮັນເໝືອນກັນຊຶ່ງກ່າວວ່າ : "ພຣະອົງຈະຊົງປະທານພຣະຜູ້ຊ່ອຍອີກຜູ້ນຶ່ງໃຫ້ແກ່ພວກທ່ານຕລອດໄປເປັນນິດຄືພຣະວິນຍານແຫ່ງຄວາມຈິງ" (ໂຢຮັນ 14:16); "ແຕ່ພຣະຜູ້ຊ່ອຍຄືພຣະວິນຍານບໍຣິສຸດ" (ໂຢຮັນ 14:26); "ເພາະຖ້າເຮົາບໍ່ໄປ ອົງພຣະຜູ້ຊ່ອຍນັ້ນຈະບໍ່ໄດ້ສະເດັດມາຫາພວກທ່ານ" (ໂຢຮັນ16:7) ນີ້ລະຄືຄວາມຫວັງ ທີ່ພວກເຮົາເຊື່ອໝັ້ນໄດ້ວ່າພຣະອົງຊົງສະຖິດຢູ່ກັບພວກເຮົາ.

## 2. <u>ເສີມສ້າງຄົນຂອງພຣະເຈົ້າ ເພື່ອປະກອບການດີທຸກຢ່າງ</u> (2 ຕີໂມທຽວ 3:14-17)

ຈົດໝາຍສຸດທ້າຍທີ່ໂປໂລໄດ້ຂຽນ ແມ່ນເພື່ອຕັກເຕືອນຕີໂມທຽວດ້ວຍຂໍ້ພຣະທັມຄັມພີ. ຖ້າຈະເວົ້າແລ້ວໂປໂລໄດ້ຍົກຫລາຍສິ່ງຫລາຍຢ່າງຂຶ້ນມາໃຫ້ຕີໂມທຽວເຫັນ, ໃນທີ່ສຸດເພິ່ນກໍໄດ້ເນັ້ນກັບຕີໂມທຽວວ່າ ແຕ່ຝ່າຍເຈົ້າ ເຈົ້າໄດ້ຮຽນມາຢ່າງໃດກໍໃຫ້ດຳເນີນຊີວິດສືບຕໍ່ໄປ, ໃຫ້ຕິດຕາມພຣະຄຳຂອງພຣະເຈົ້າວ່າພຣະອົງໄດ້ສິດສອນເຈົ້າໂດຍຜ່ານແມ່ແລະແມ່ຕູ້ຂອງເຈົ້າ.

ຖ້າຈະເວົ້າແລ້ວ, ແມ່ແລະແມ່ຕູ້ຂອງຕີໂມທຽວເປັນຄຣິສຕຽນ ແລະກໍໄດ້ສັ່ງສອນຫລານໃຫ້ຮັກພຣະເຈົ້າ ແລະຕິດຕາມຄຳສັ່ງສອນຂອງພຣະເຈົ້າຕລອດມາ. ຕີໂມທຽວຍັງໄດ້ຍິນຄຳສອນຂອງໂປໂລອີກ. ( 2 ຕີໂມທຽວ 3:14) ກຳໄລຊີວິດທີ່ຕີໂມທຽວໄດ້ຮັບກໍຄືວ່າລາວໄດ້ຟັງຄຳສອນ ແລະກໍໄດ້ເຫັນການປະຕິບັດຂອງແມ່ແລະແມ່ຕູ້ດ້ວຍ.

ພຣະຄັມພີແມ່ນພຣະຄຳຂອງພຣະເຈົ້າ, ພຣະຄັມພີແມ່ນປຶ້ມທີ່ສັກສິດຂອງພຣະເຈົ້າ. ພຣະຄັມພີແມ່ນການຊົງບັນດົນໃຈຈາກພຣະເຈົ້າໃຫ້ມະນຸດຂຽນຂຶ້ນ. ເມື່ອເປັນດັ່ງນັ້ນພຣະຄັມພີຈຶ່ງເປັນປໂຍດຫລາຍໃນການສິດສອນ, ໃນການຕັກເຕືອນກັນ, ໃນການປັບປຸງແກ້ໄຂໃຫ້ຖືກຕ້ອງ, ແລະອົບຮົມໃນທາງຊອບທັມ.

ພຣະເຈົ້າໃຊ້ພຣະຄຳຂອງພຣະອົງອົບຮົມພວກເຮົາເພື່ອພວກເຮົາຈະໄດ້ເປັນຜູ້ໃຫຍ່, ບາງຄັ້ງ ພຣະອົງກໍໃຊ້ພຣະຄຳຂອງພຣະອົງຕິສອນເພື່ອປັບປຸງດັດແປງພວກເຮົາໃຫ້ຖືກຕ້ອງ. ທັງໝົດນີ້ກໍແມ່ນເພື່ອໃຫ້ພວກເຮົາໄດ້ປະກອບການດີເພື່ອພຣະອົງ.

**3. ຈົ່ງຕີຄວາມໝາຍໃນຂອບເຂດຂອງພຣະຄັມພີ** (2 ເປໂຕ 1:19-21)
ໃນຈົດໝາຍສະບັບທີສອງຂອງເປໂຕ, ຜູ້ຂຽນໄດ້ຕັກເຕືອນຜູ້ອ່ານທັງຫລາຍຕັ້ງແຕ່ເລີ້ມຕົ້ນມາແລ້ວວ່າເລື່ອງທີ່ເພິ່ນກ່າວນັ້ນເພິ່ນກ່າວດ້ວຍຄວາມຈິງ. ເປໂຕບໍ່ໄດ້ປະກາດໂດຍອີງໃສ່ນິຍາຍ, ບໍ່ໄດ້ອີງຕາມຄວາມສລາດຂອງຕົວເອງ, ແຕ່ເພິ່ນປະກາດຕາມທີ່ເພິ່ນໄດ້ເຫັນແລະໄດ້ຍິນ, ແລະເພິ່ນກໍສາມາດເປັນພະຍານໄດ້. (2 ເປໂຕ1:17) ເພິ່ນໄດ້ໃຊ້ຮູບພາບປະກອບວ່າພຣະຄຳນັ້ນປຽບເໝືອນແສງສະວ່າງທີ່ສ່ອງແສງໃນທີ່ມືດ ແລະເໝືອນດາວເພັກທີ່ຈະສ່ອງຢູ່ໃນໃຈຂອງທ່ານ. ດາວເພັກນີ້ອາດເວົ້າໄດ້ອີກວ່າເປັນດາວທີ່ຮຸ່ງໃນຍາມເຊົ້າພວກເຮົາກໍສາມາດເວົ້າໄດ້ວ່າດາວດວງ ນີ້ຄືອົງພຣະເຢຊູທີ່ສ່ອງຂຶ້ນໃນໃຈຂອງພວກເຮົາ, ແລະພວກເຮົາກໍຈຶ່ງສາມາດເຂົ້າໃຈແລະຕີຄວາມໝາຍພຣະຄັມພີໄດ້.

ແຕ່ຄາວສມັຍກ່ອນ, ຜູ້ທີ່ຈະກ່າວພຣະທັມຂອງພຣະເຈົ້າໄດ້ນັ້ນຕ້ອງມີພຣະວິນຍານບໍຣິສຸດຊົງນຳ, ໃນສມັຍນີ້ຫລາຍຄົນກໍແປໄປຕາມຄວາມເຂົ້າໃຈ, ຕາມຄວາມນຶກຄິດ, ຕາມອົງການຢາກໄປເຮັດ. ເວລາຕົນເອງຄິດຢາກເຮັດແລ້ວກໍບອກວ່າພຣະເຈົ້າຊົງນຳ. ຜູ້ທີ່ຕິດຕາມພຣະເຢຊູຫລືຜູ້ທີ່ເຊື່ອຢ່າງແທ້ຈິງຕ້ອງຄຳນຶງເຖິງພຣະຄຳຂອງພຣະເຈົ້າເສັຍກ່ອນໆຈະທຳອັນໃດລົງໄປ, ພຣະທັມຕອນນີ້ກ່າວຢ່າງໃດ.

**ຄຳແນະນຳ ແລະ ພາກປະຕິບັດ**
ຄຣິສຕະຈັກຍຸກທຳອິດ ໄດ້ຊຸມນຸມກັນທີ່ກຸງເຢຣູຊາເລັມ, ຄຣິສຕະຈັກທຸກວັນນີ້ກໍຍັງໄດ້ໝູນໃຊ້ນຳມາເປັນຕົວຢ່າງໃນການ ສິດສອນຂອງເຫລົ່າສາວົກ. ເວລາພວກເຮົາຮຽນພຣະຄັມພີຕາມບ້ານເຮືອນພວກເຮົາກໍໄດ້ຍົກມາເປັນຕົວຢ່າງ. ພວກເຮົາເປັນຜູ້ຕິດຕາມພຣະຄຳ, ພວກເຮົາເປັນຜູ້ຕິດຕາມປຶ້ມຕຳຣາຂອງພຣະເຈົ້າ, ພວກເຮົາເປັນຜູ້ຕິດຕາມແບບຢ່າງຂອງພຣະເຈົ້າ, ເພັງສັຣເສີນ 119 :105 "ພຣະຄຳຂອງພຣະອົງເປັນໂຄມສຳຫລັບຕີນຂອງຂ້າພະອົງແລະເປັນຄວາມ ສະວ່າງໃຫ້ແກ່ທາງເດີນຂອງຂ້າພະອົງ."

**ຄຳຖາມ**
1. ເປໂຕໃຊ້ພຣະຄັມພີຢ່າງໃດໃນບົດເທສນາຂອງລາວໃນວັນເພັນເຕຄອສເຕ (ກິຈການ 2:14-36)? ລາວຍົກເອົາບ່ອນໃດໃນພຣະຄັມພີເດີມ?

2. ອ່ານຄຳເວົ້າຂອງໂປໂລ ໃນຈົດໝາຍທີ່ຂຽນໄປເຖິງຊາວກຸງໂຣມ (ໂຣມ 15:4) ທ່ານເຫັນຄຳໃດບໍ່ທີ່ເປັນຄຳໝູນໃຈ, ຄຳສອນໃຫ້ມີຄວາມອົດທົນ, ຄຳສອນໃຫ້ມີຄວາມຫວັງ?

3. ຄວາມເຊື່ອຂອງຕີໂມທຽວເລີ້ມມີມາແຕ່ຊີວິດເປັນເດັກນ້ອຍ, ຄວາມເຊື່ອຂອງທ່ານເດເລີ້ມຕົ້ນແຕ່ເວລາໃດ?

4. ຄຣູສອນໂຮງຮຽນວັນອາທິດ, ຫລືຄຣິສຕຽນຄົນອື່ນໆບໍທີ່ເປັນຕົວຢ່າງໃຫ້ແກ່ທ່ານ ໃນການເພີ້ມຄວາມເຊື່ອຂອງທ່ານໃຫ້ຈະເຣີນຂຶ້ນ? ທ່ານເຫັນຢ່າງໃດໃນຊີວິດຂອງພວກເຂົາເຈົ້າ?

5. ພຣະຄັມພີທີ່ອ່ານໃນວັນນີ້ທ່ານເຫັນວ່າເປັນແນວໃດ? ພຣະຄັມພີໄດ້ສິດສອນທ່ານແດ່ບໍ່? ພຣະຄັມພີສອນທ່ານວ່າຢ່າງໃດ? ແລະທ່ານຈະຮັບຜິດຊອບຢ່າງໃດ?

6. ທ່ານເຊື່ອວ່າພຣະຄັມພີມາຈາກພຣະເຈົ້າເຖິງທ່ານບໍ່? (2 ເປໂຕ 1:21)? ທ່ານຈະຮັບຜິດຊອບຢ່າງໃດກັບພຣະຄັມພີ?

*ດຣ. ບຸນໂຣມ ພົມມະຈັນ*

# ບົດຮຽນທີ 11
# ສາມັກຄີທັມດ້ວຍຈິງໃຈ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ 2:41-47; 1ກຣທ 12:4-11; ຟີລິປອຍ 1:3-9
**ພູມຫລັງຂອງພຣະຄັມພີ:** ກິຈການ 2:41-37; 1ກຣທ 12:4-11; ຟີລິປອຍ 1:3-11
**ຈຸດສຳຄັນຂອງບົດຮຽນນີ້:** ຄົນໃນພຣະສັນຍາໃຫມ່ສາມັກຄີທັມກັນດ້ວຍສຸດໃຈ.
**ຄຳຖາມເພື່ອການຄົ້ນຄວ້າ:** ເຮັດແນວໃດການສາມັກຄີທັມໃນໂບດທ່ານຈະເຂັ້ມແຂງຂຶ້ນ.
**ຈຸດປະສົງຂອງບົດຮຽນນີ້:** ເພື່ອສົມທຽບການສາມັກຄີທັມຂອງທ່ານກັບຄົນໃນພຣະຄັມພີໃໝ່ ແລ້ວມາປັບປຸງການສາມັກຄີທັມໃນໂບດເຮົາໃຫ້ເຂັ້ມແຂງ

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ທຸກຄົນທີ່ເຊື່ອໃນພຣະເຢຊູເປັນຜູ້ຮັບໃຊ້ພຣະເຈົ້າ.

## ຄຳນຳ

ຄຣິສຕຽນໃນບົດຮຽນທີ່ຈະເວົ້າວັນນີ້ມີຄວາມສາມັກຄີທັມໂດຍພຣະວິນຍານ ດ້ວຍເຫດນີ້ເຂົາຈຶ່ງມີໃຈຮັກຊຶ່ງກັນແລະກັນ, ເຂົາພົບກັບດ້ວຍການພຣະທັມພຣະເຈົ້າແລະຕິດຕາມດ້ວຍເຂົ້າປາອາຫານດ້ວຍໃຈໃສທັດທາຈຶ່ງເປັນຕົ້ນເຫດໃຫ້ການສາມັກຄີທັມຂອງເຂົ້າມີປະສິດຕິພາບ.

## 1. ແບ່ງປັນໂດຍຄວາມຮັກ (ກິຈການ 2:41-47)

ເຫດການອັນອັສຈັນໄດ້ເກີດຂຶ້ນໃນໂບດນ້ອຍແຫ່ງນຶ່ງທີ່ມີຄົນນະມັສການຢູ່ປະມານ 120 ຄົນ ຊີໂມນເປໂຕກໍຮ່ວມນະມັສການຢູ່ທີ່ນັ້ນ, ໃນຂະນະທີ່ເຂົາຕັ້ງໃຈນະມັສການດ້ວຍຄວາມຈິງນັ້ນ ພຣະວິນຍານບໍຣິສຸດກໍໄດ້ລົງມາເທິງພວກເຂົາແລະພວກເຂົາແຕ່ລະຄົນກໍເຕັມໄປດ້ວຍພຣະວິນຍານບໍຣິສຸດ ເມື່ອຄຣິສຕຽນເຕັມໄປດ້ວຍພຣະວິນຍານບໍຣິສຸດແລ້ວຄົນທັງຫລາຍທີ່ກຳລັງເຝົ້າເບິ່ງພວກເຂົານັ້ນກໍພາກັນເຂົ້າຮັບເຊື່ອໃນວັນນັ້ນອີກປະມານ 3000 ຄົນ ເພີ້ມເຂົ້າຈຳນວນເດີມ 120 ຄົນ. ຈາກ 120 ຄົນ ມາເປັນ 3120 ຄົນ ໃນໂບດນ້ອຍຫລັງນັ້ນ. ໃນຈຳນວນ 3120 ຄົນນັ້ນມີຫລາຍຊາດຫລາຍພາສາ ແຕ່ຊາດແລະພາສານັ້ນບໍ່ເປັນກຳແພງໃຫ້ເຂົາຂາດສາມັກຄີທັມຕໍ່ກັນແລະກັນໃນພຣະນາມແຫ່ງພຣະເຢຊູຄຣິດ, ໃນພາສາກຣີກ ຄອຍໂນເນັຽ ແປວ່າສາມັກຄີທັມທີ່ມີຄວາມໝາຍເລີກໄປກວ່າການກິນເຂົ້າແລະນະມັສການດ້ວຍກັນເທົ່ານັ້ນ ແຕ່ມີຄວາມໝາຍເລີກໄປກວ່າການກິນແລະດື່ມອີກ ຄືນອກຈາກເຂົາຮ່ວມນະມັສການຕິດຕາມດ້ວຍພາເຂົ້າສາມັກຄີແລ້ວເຂົາຍັງມີຈິດໃຈຮັກແພງ, ແບ່ງປັນ ແລະຊ່ອຍເຫລືອຊຶ່ງກັນແລະກັນອີກ, ຄຣິສຕຽນໃນສມັຍນັ້ນມັກຈະພົບປະກັນຫລັງຈາການນະມັສການ ແລະຍັງພົບປະກັນທີ່ບ້ານເຮືອນອີກ. ສຳລັບສັງຄົມຄຣິສຕຽນທຸກວັນນີ້ແຕກຕ່າງກັບສມັຍໃນພຣະຄັມພີແດ່, ດຽວນີ້ເພື່ອນບ້ານໃກ້ຄຽງກັນກໍບໍ່ຮູ້ຈັກກັນ, ຄົນໃນໂບດດຽວກັນກໍບໍ່ຮູ້ຈັກກັນລາງເທື່ອກໍພາ

ກັນໄປຄືວ່າໂບດໃຫຍ່ກໍເປັນດັ່ງນັ້ນແຫລະ, ຫາກເຮົາຄິດທອນຄືນໂບດໃນປັດຈຸບັນນີ້ມີຮອດ 3120 ຄົນ ເຂົາເຮັດແນວໃດຈຶ່ງຮູ້ຈັກຮັກແພງສາມັກຄີທັມຊຶ່ງກັນແລະກັນ. ຊີວິດເຮົາລາງເທື່ອກໍຄືໂຕເໝັ້ນທີ່ມີຂົນເປັນໜາມແຂງເມື່ອຢູ່ໃກ້ກັນຂົນແຂງນັ້ນກໍປັກແທງກັນໃຫ້ເຈັບປວດ, ດ້ວຍເຫດນີ້ເຮົາທັງຫລາຍຄວນຈະກັບໄປຮຽນນຳຄຣິສຕຽນສມັຍກ່ອນວ່າເຮັດແນວໃດພວກເຂົາເຈົ້າຈຶ່ງຢູ່ໃກ້ກັນໂດຍສັນຕິວິທີ. ຄວາມຈິງແລ້ວຄຳວ່າສາມັກຄີທັມນັ້ນຍັງມີຄວາມໝາຍຢ່າງເດີມ ແຕ່ການປະຕິບັດຕ່າງໄປແດ່.

*"ເຂົາໄດ້ໝັ້ນຄົງຢູ່ໃນຄຳສອນຂອງພວກອັຄສາວົກ, ໃນການຮ່ວມໃຈກັນ, ໃນການຫັກເຂົ້າຈີ່ ແລະໃນການໄຫວ້ວອນ ທຸກຄົນເກີດມີຄວາມຢ້ານຢຳນັບຖື ສ່ວນພວກອັຄສາວົກກໍໄດ້ເຮັດການອັດສະຈັນແລະໝາຍສຳຄັນຫລາຍປະການ"* (ຂໍ້ 41-42). ຫາກເຮົາກັບໄປອ່ານຂໍ້ 41-42 ແລ້ວເຮົາຈະເຫັນບໍ່ເກີດຂອງການສາມັກຄີທັມຂອງພວກຄຣິສຕຽນໃນສມັຍນັ້ນດ້ວຍເຄັດລັບຢູ່ສອງຢ່າງຄື;

1. ເຂົາເຕັມໄປດ້ວຍພຣະວິນຍານບໍຣິສຸດ.
2. ເຂົາຕັ້ງໃຈຟັງຄຳສອນພວກສາວົກ ພ້ອມທັງຢຳເກງພວກສາວົກ.
3. ເຂົາພາກັນເອົາໃຈໃສ່ໃນການໄຫວ້ວອນຢູ່ບໍ່ຂາດ.

ສາວົກໃນສມັຍນັ້ນກໍແມ່ນອາຈານຫລືຜູ້ນຳໂບດໃນສມັຍນີ້ນັ້ນເອງ ຕ່າງແຕ່ວ່າຄຣິສຕຽນລາງຄົນໃນສມັຍນີ້ບໍ່ຄອຍຟັງຄວາມອາຈານເທົ່າໃດ, ລາງເທື່ອອາຈານເວົ້າຕັ້ງສາມເທື່ອເຂົາກໍຍັງບໍ່ໄດ້ຍິນ. ທ່ານຈະເຫັນບັນດາອາຈານຫລາຍຄົນໃນສມັຍນີ້ໄປຮອດໂບດກ່ອນສະມາຊິກ ເພື່ອຈັດຕຽມອາຫານເຊົ້າ ຫລືກາເຟຕຽມໄວ້ຕ້ອນຮັບສມາຊິກອີກ, ຍາມເລີກໂບດອາຈານກໍຕ້ອງລໍຖ້າປິດປະຕູ. ຍາມໄຫວ້ວອນກ່ອນນະມັສການອາຈານຈະຕ້ອງໄປຊອກຫາເຊີນຄະນະກັມມະການແລະພວກເຖົ້າແກ່ ເຊີນແລ້ວກໍເຊີນອີກປາກົດວ່າບໍ່ຄ່ອຍມີໃຜໄດ້ຍິນສຽງຂອງເພິ່ນ, ຫາກການໄຫວ້ວອນຢູ່ໂບດຮ່ວມກັບອາຈານຍາກປານນີ້ການອ້ອນວອນຢູ່ບ້ານຈະເປັນແນວໃດໜໍ? ເຮົາທັງຫລາຍຄວນຮຽນເອົາແບບຢ່າງຂອງຄຣິສຕຽນໃນສມັຍພຣະຄັມພີເສັຽກ່ອນ ການສາມັກຄີທັມແລະໂບດຂອງເຮົາຈຶ່ງຈະຈະເຣີນ.

## 2. <u>ແບ່ງປັນຂອງພຣະຣາຊທານ</u> (1 ກຣທ 12:4-11)

ພຣະເຈົ້າໄດ້ໂຜດປະທານໃຫ້ແຕ່ລະຄົນບໍ່ຄືກັນສຸດແລ້ວແຕ່ນ້ຳພຣະທັຍຂອງພຣະເຈົ້າ ແຕ່ຂອງປະທານທຸກຢ່າງທີ່ແຕກຕ່າງນັ້ນມີຈຸດປະສົງດຽວຄືເພື່ອທຸກຄົນຈະໃຊ້ຂອງປະທານນັ້ນເພື່ອປະກາດພຣະນາມຂອງພຣະອົງ ແລະຄວນຈະໃຊ້ຂອງປະທານນັ້ນເພື່ອຊ່ອຍເຫຼືອຊຸກຍູ້ຊຶ່ງກັນແລະກັນ ເພື່ອທຸກຄົນທີ່ມີຂອງປະທານຈະໄດ້ປະກາດຂ່າວປະເສີດໃນພຣະນາມແຫ່ງພຣະເຢຊູຄຣິດເທົ່ານັ້ນ. ດັ່ງນັ້ນຄຣິສຕຽນຈຶ່ງກາຍເປັນຜູ້ຮຽນຮູ້ທີ່ຈະແບ່ງປັນແລະຢູ່ດ້ວຍກັນໂດຍສັນຕິສຸກໃນທຸກບ່ອນທຸກທີ່. ພຣະບິດາ, ພຣະບຸດ ແລະພຣະວິນຍານບໍຣິສຸດມີຄວາມປອງດອງກັນສັນໃດຄຣິສຕຽນກໍຈະຕ້ອງມີຄວາມປອງດອງກັນສັນນັ້ນ ເພາະເຮົາທັງຫລາຍຮູ້ແລ້ວວ່າພຣະເຈົ້າໄດ້ຊົງສ້າງມະນຸດໃຫ້ມີຮູບຮ່າງຄ້າຍຄືພຣະອົງ ດັ່ງນັ້ນພຣະອົງຈຶ່ງມີພຣະປະສົງໃຫ້ມະນຸດປອງດອງກັບມະນຸດ ແລະມະນຸດຈະຕ້ອງປອງດອງກັບພຣະເຈົ້າ. *ການ ສະແດງຂອງພຣະວິນຍານນັ້ນມີແກ່ທຸກຄົນເພື່ອປໂຍດຮ່ວມກັນ"* (ຂໍ້ 7).

ໃນພຣະທັມ 1 ກຣທ 2:8-11; ໂຣມ 12:6-8; ເອເຟໂຊ 4:11; ແລະ 1ເປໂຕ 4:10-11 ໄດ້ບອກພວກເຮົາວ່າຂອງພຣະຣາຊທານນັ້ນມີຕ່າງກັນ ແຕ່ແມ່ນພຣະວິນຍານອົງດຽວເປັນຜູ້ໂຜດປະທານໃຫ້, ໂປໂລໄດ້ຍົກຕົວຢ່າງເຣື່ອງຮ່າງກາຍຂອງຄົນມີຫລາຍພາກສ່ວນກໍຈິງ ແຕ່ທັງໝົດກໍແມ່ນຮ່າງກາຍດຽວ ດັ່ງນັ້ນແຕ່ລະພາກສ່ວນຂອງຮ່າງກາຍຈຶ່ງມີຄວາມສຳຄັນຕໍ່ກັນແລະກັນສັນໃດ ຂອງພຣະຣາຊທານກໍມີຄວາມສຳຄັນຕໍ່ກັນແລະກັນສັນນັ້ນ. ດັ່ງນັ້ນຄຣິສຕຽນຄວນຈະນຳເອົາຂອງພຣະຣາຊທານນັ້ນມາທຳງານຮ່ວມກັນກໍຈະເປັນທີ່ພໍພຣະທັຍຂອງພຣະເຈົ້າ.

**๒. ຊ່ອຍກັນປະກາດພຣະກິດຕິຄຸນ** (ຟີລິປອຍ 1:3-11)
ຄຣິສຕະຈັກຟີລິບປອຍເປັນຄຣິສຕະຈັກຕົວຢ່າງໃນພຣະຄັມພີໃໝ່, ໂປໂລໄດ້ຂອບພຣະຄຸນພຣະເຈົ້າສຳລັບຄຣິສຕະຈັກນີ້ທຸກຄັ້ງທີ່ເພິ່ນໄດ້ອ້ອນວອນ ເພາະວ່າຄຣິສຕະຈັກຫລັງນີ້ໄດ້ຊ່ອຍເພິ່ນໃນຂະນະເພິ່ນຖືກຄຸມຂັງນັ້ນພວກເຂົາກໍພາກັນໄປຢ້ຽມຢາມແລະສົ່ງເຂົ້າປາອາຫານໃຫ້ເພິ່ນ, ດ້ວຍເຫດນີ້ໂປໂລຈຶ່ງກ່າວວ່າ *"ເພາະເຫດທີ່ເຈົ້າທັງຫລາຍໄດ້ມີສ່ວນໃນງານຂ່າວປະເສີດດ້ວຍກັນ ຕັ້ງແຕ່ວັນຕົ້ນນັ້ນແລະຕໍ່ມາຈົນເຖິງບັດນີ້"* (ຂໍ້ 5). ເຂົາໄດ້ຮັບເຊື່ອໃນຂ່າວປະເສີດທີ່ໂປໂລໄດ້ປະກາດແກ່ເຂົາ ແລະເຂົາກໍເລີ້ມຕົ້ນຮ່ຳຮຽນແລະປະກາດຊ່ອຍກັນຢູ່ເລື້ອຍມາ ໂດຍບໍ່ຄຳນືງເຖິງຄວາມທຸກຍາກລຳບາກປະການໃດ ດັ່ງນັ້ນໂປໂລຈຶ່ງຍົກຍ້ອງນ້ຳໃຈ ແລະຂອບໃຈເຂົາທີ່ພວກເຂົາພາກັນເສັຍສະລະ ແລະສ່ຽງພັຍອັນຕະລາຍຕ່າງໆຕລອດເຖິງຢ້ຽມຢາມເພິ່ນທີ່ຄຸມຂັງທີ່ກຸງໂຣມ, ຊຶ່ງການທີ່ເຂົາໄດ້ກະທຳນັ້ນໂປໂລຖືວ່າເປັນການປະກາດພຣະກິດຕິຄຸນຮ່ວມກັນ *"ເຈົ້າທັງຫລາຍໄດ້ຮັບສ່ວນຮ່ວມໃນພຣະຄຸນດ້ວຍກັນກັບເຮົາ ໃນການທີ່ເຮົາຖືກຈຳຈອງ ແລະໃນການກ່າວປ້ອງກັນໃຫ້ຂ່າວປະເສີດນັ້ນຕັ້ງໝັ້ນຄົງຢູ່"* (ຂໍ້ 7).

ໃນຂະນະທີ່ໂປໂລຖືກກັກຂັງຍ້ອນການປະກາດຂ່າວປະເສີດທີ່ກຸງໂຣມນັ້ນຄຣິສຕຽນເມືອງຟີລິປອຍບໍ່ໄດ້ປະລະໃນການຢ້ຽມຢາມແລະອ້ອນວອນເພື່ອເພິ່ນຢູ່ບໍ່ຂາດ ແລະເພິ່ນເອງກໍໄດ້ແຕ່ອ້ອນວອນຂອບພຣະຄຸນພຣະເຈົ້າສຳລັບພວກເຂົາທຸກເມື່ອທຸກຍາມ ດັ່ງນັ້ນໂປໂລແລະຄຣິສຕຽນເມືອງຟີລິປອຍຈຶ່ງມີຄວາມໃກ້ຊິດເປັນພິເສດ, ໃຈຄວາມສຳຄັນໃນຄຳອ້ອນຂອງໂປໂລມີດັ່ງນີ້; *"ເຮົາອ້ອນວອນຂໍໃຫ້ຄວາມຮັກຂອງເຈົ້າທັງຫລາຍຈະເຣີນຫລາຍຂຶ້ນສເມີ ພ້ອມກັບຄວາມຮູ້ແລະຄວາມສັງເກດທຸກຢ່າງເພື່ອເຈົ້າທັງຫລາຍຈະສັງເກດໄດ້ວ່າ ສິ່ງໃດປະເສີດທີ່ສຸດ ແລະເພື່ອພວກເຈົ້າຈະໄດ້ເປັນຄົນບໍຣິສຸດ ແລະບໍ່ມີທີ່ຕິໄດ້ໃນວັນແຫ່ງພຣະຄຣິດຈະໄດ້ເປັນຜູ້ບໍຣິສຸດດ້ວຍຜົນຂອງຄວາມຊອບທັມ ຊຶ່ງເກີດຂຶ້ນດ້ວຍພຣະເຢຊູຄຣິດ ເພື່ອຖວາຍພຣະກຽດແລະຄວາມສັຣເສີນແກ່ພຣະເຈົ້າ"* (ຂໍ້ 9-11).

ເຖິງແມ່ນວ່າການເດີນທາງປະກາດຂ່າວປະເສີດຈະຖືກຢຸດເພາະຖືກລ່າມໂສ້ໃນຄຸກຄຸມຂັງ ແຕ່ການອ້ອນວອນຂອງເພິ່ນບໍ່ມີໃຜສາມາດລ່າມໂສ້ໄວ້ໄດ້, ເພິ່ນໄດ້ອ້ອນວອນດ້ວຍຄວາມພໍໃຈທີ່ເຫັນຄວາມຮັກຂອງພີ່ນ້ອງຟີລິປອຍຈະເຣີນຂຶ້ນ ເພາະເຂົາສາມາດຮູ້ຈັກສັງເກດການວ່າສິ່ງໃດດີ ແລະຮູ້ຈັກສັງເກດວ່າສິ່ງໃດປະເສີດ ແລ້ວເຂົາກໍເຮັດຕາມການທີ່ເຂົາຮູ້ຈັກສັງເກດນັ້ນ ເພື່ອເຂົາຈະຕຽມພ້ອມໃນວັນທີ່ພຣະເຢຊູຄຣິດຈະສະເດັດກັບມາຍັງໂລກອີກຄັ້ງນຶ່ງ, ເຖິງແມ່ນໂປ ໂລຈະຖືກກັງຂັງແລະຖືກລ່າມໂສ້ໄວ້ໃນຄຸກ ແຕ່ຂ່າວປະເສີດນັ້ນກໍບໍ່ໄດ້ຖືກຢຸດ ແລະລ່າມໂສ້ປະການໃດ ເພາະວ່າພວກສິດຂອງໂປໂລກໍພາກັນປະກາດດ້ວຍການເອົາໃຈໃສ່ ດ້ວຍເຫດນີ້ຈຶ່ງມີຄຣິສຕຽນເພີ້ມຂຶ້ນທຸກວັນ.

**ຄຳຖາມ:**

1. ໂບດຂອງທ່ານມີການສາມັກຄີທັມກັນແບບໃດ?

๒. ທ່ານໄດ້ເຮັດຫຍັງແດ່ເພື່ອປະກອບສ່ວນໃນການສາມັກຄີທັມ?

3. ທ່ານໄດ້ຍິນດີກັບຜູ້ຍິນດີ, ຮ້ອງໄຫ້ກັບຜູ້ຮ້ອງໄຫ້ແນວໃດ?

4. ເປັນຫຍັງຄຣິສຕຽນໂບດນ້ອຍໆ 1๒0 ຄົນ ທີ່ຟີລິບປອຍຈຶ່ງເພີ້ມຂຶ້ນ 3000 ຄົນໃນວັນດຽວ?

5. ເຄັດລັບຂອງໂບດຟີລິບປອຍມີອັນໃດ?

6. ທ່ານມີຂອງພຣະຣາຊທານອັນໃດ? ທ່ານເຮັດແນວໃດກັບສິ່ງນັ້ນ?

7. ໃນຂະນະທີ່ໂປໂລຖືກຄຸກທີ່ກຸງໂຣມນັ້ນ ຄຣິສຕຽນຟີລິບປອຍເຮັດຫຍັງແດ່?

8. ຄໍາວ່າຊ່ອຍກັນປະກາດແມ່ນເຮັດຫຍັງແດ່?

*ດຣ. ທຸມພັນ ວົງສຸຣິດທ໌*

# ບົດຮຽນທີ 12
# ມະມັສການພຣະເຈົ້າຮ່ວມກັນ.

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ 2: 42-47; 1 ໂກຣິນໂທ 11:17-34; ເອເຟໂຊ 5: 19-20

**ພູມຫຼັງຂອງພຣະຄັມພີ:** ກິຈການ 2: 42-47; 4:23-31; 20:7-12; 1 ໂກຣິນໂທ 11:17-34; 14: 26-33; ເອເຟໂຊ 5: 19-20; ເຮັບເຣີ 10: 24-25.

**ຈຸດສຳຄັນຂອງບົດຮຽນນີ້:** ຄຣິສຕະຈັກຕາມພຣະສັນຍາໃໝ່ມະມັສການພຣະເຈົ້າຮ່ວມກັນ.

**ຄຳຖາມເພື່ອການຄົ້ນຄວ້າ:** ການມະມັສການໃນຄຣິສຕະຈັກຂອງພວກເຮົາເປັນແນວໃດ ຖ້າປຽບໃສ່ຄຣິສຕະຈັກໃນສມັຍແລກ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຮຽນຮູ້ວ່າຂ້ອຍຈະມະມັສການໃນຄຣິສຕະຈັກໃຫ້ໄດ້ຜົນດີດ້ວຍວິທີໃດ.

## ຄຳນຳ

ໃນຖານະຂອງຄຣິຕະຈັກຕາມພຣະສັນຍາໃໝ່, ພວກເຮົາໄດ້ຮັບການເກີດໃໝ່ໃຫ້ມະມັສການພຣະເຈົ້າດ້ວຍນິສັຍ, ການປະພຶດ, ແລະທຸກຢ່າງໃນເຮົາ.

ໃນສມັຍນີ້, ການສົນທະນາເຣື່ອງການມະມັສການໄດ້ກາຍເປັນການພຍາຍາມຈູງໃຈຄົນອື່ນໃຫ້ຮັບການມະມັສການແບບຂອງຕົວເອງ ແທນທີ່ຈະຮັບຟັງຄວາມຄິດເຫັນຂອງຄົນອື່ນ. ຫລາຍຄົນສແວງຫາຄຣິສຕະຈັກທີ່ມີການມະມັສການຕາມຣົດນິຍົມຂອງຕົນ. ແຕ່ລືມຄິດໄປວ່າ ການມະມັສການບໍ່ແມ່ນການຊອກຫາສິ່ງຕົນຢາກໄດ້, ແຕ່ແມ່ນເຣື່ອງທີ່ພຣະເຈົ້າຄວນຈະໄດ້ຮັບຫຍັງແດ່ຈາກຊີວິດຂອງພວກເຮົາ.

**1. ການເອົາໃຫ້ເວລາມະມັສການ** (ກິຈການ 2: 42-47)
ພວກຜູ້ເຊື່ອໃນສມັຍເລີ້ມຕົ້ນບໍ່ໄດ້ເປັນຜູ້ຮັບໃນເວລາມະມັສການ, ແຕ່ເຂົາເຈົ້າໄດ້ເປັນຜູ້ເອົາໃຫ້. ຜູ້ຂຽນທ່ານລູກາໄດ້ຂຽນວ່າ "ເຂົາໄດ້ຕັ້ງໝັ້ນຄົງ," ຊຶ່ງໝາຍເຖິງການເອົາໃຈໃສ່ທີ່ສຸດໃນຄຳສອນ, ການສາມັກຄີທັມ, ການຫັກເຂົ້າຈີ່, ແລະການໄຫວ້ວອນ (2:42). ໃນສມັຍນັ້ນພວກສາວົກໄດ້ມະມັສການຕາມບ້ານ ແລະພວກເຂົາເຈົ້າໄດ້ຖືວ່າການໄຫວ້ວອນເປັນເຣື່ອງໃຫຍ່. ການອ້ອນວອນຮ່ວມກັນມີຣິດເດດ; ແລະພຣະເຈົ້າກໍໄດ້ເຮັດສິ່ງອັສຈັນແລະໝາຍສຳຄັນຫລາຍໆຢ່າງຜ່ານຊີວິດຂອງພວກເຂົາເຈົ້າ (2:43). ຄົນທັງຫລາຍມີຄວາມຢ້ານ ແລະຢຳເກງພຣະຜູ້ເປັນເຈົ້າທີ່ສຸດ; ກົງກັນຂ້າມກັບພວກເຮົາໃນສມັຍນີ້ ມັກຈະເບິ່ງການມະມັສການວ່າເປັນພຽງການສລອງ. ເວລາມະມັສການເປັນເວລາສຳລັບພິສູດຕົນເອງ; ຜູ້ປະກາດພຣະທັມເອຊາຢາມະມັສການພຣະເຈົ້າ ແລະໄດ້ເຫັນຄວາມຜິດບາບຂອງລາວເອງ (ເອຊາຢາ 6: 1-8). ຜູ້ມະມັສການທີ່ຕັ້ງໃຈຈະເຫັນສິ່ງຍິ່ງໃຫຍ່ທີ່ພຣະເຈົ້າຊົງກະທຳຖ້າມກາງຜູ້ຄົນ.

ພວກສາວົກມີຄວາມຊົມຊື່ນຍິນດີໃນພຣະຜູ້ເປັນເຈົ້າ ແລະໄດ້ສັຣເສີນພຣະອົງໃນເວລາມະມັສການ (2:46-47). ພຣະທັມໃນຕອນນີ້ບອກໃຫ້ພວກເຮົາຮູ້ເຖິງການມະມັສການທີ່ຖືກຕ້ອງຂອງພວກສາວົກ. ພຣະເຈົ້າ "ໄດ້ຊົງໂຜດໃຫ້ຄົນທັງຫລາຍຊຶ່ງກຳລັງຈະລອດພົ້ນນັ້ນມາເຂົ້າກັບພວກສິດທຸກໆວັນ." ການມະມັສການໃນສມັຍແລກກໍມີທັງການສລອງແລະການປະເຊີນໜ້າ; ແຕ່ກໍບໍ່ໄດ້ໃຫ້ລາຍລະອຽດວ່າເຂົາເຈົ້າໄດ້ເຮັດຫຍັງແດ່ໃນເວລາມະມັສການ. ຄຣິສຕະຈັກຂອງ

ພຣະເຈົ້າ ໃນປັດຈຸບັນກໍມີຄວາມແຕກຕ່າງກັນຫລາຍພໍສົມຄວນ ເພາະແຕ່ລະແຫ່ງຕ່າງກໍມະມັສການຕາມວິທີ, ຄວາມນິຍົມ, ແລະເວລາຂອງໃຜລາວ,

**ຂ. ສິນມະຫາສນິດໃນເວລາມະມັສການ** (1 ໂກຣິນໂທ 11: 17-34)
ຫລາຍຄົນໃນສມັຍນີ້ ມີຄຳຖາມເຣື່ອງການຮັບສິນມະຫາສນິດວ່າ: ພວກເຮົາຄວນຮັບສິນມະຫາສນິດເລື້ອຍປານໃດ? ຄວນຮັບທຸກໆອາທິດບໍ່ ຫລືທຸກຄັ້ງທີ່ມີການຊຸມນຸມກັນບໍ່? ຄວາມຈິງແລ້ວແຕ່ລະຄະນະ ຫລືແຕ່ລະຄຣິສຕະຈັກກໍມີປະເພນີຂອງຕົນເອງໃນເຣື່ອງນີ້; ຜູ້ຂຽນເຫັນວ່າສິ່ງເຫລົ່ານີ້ບໍ່ຄວນຈະຖືເປັນເຣື່ອງໃຫ້ຄຣິສຕຽນຕ້ອງແຕກແຍກກັນ.

ເມື່ອຄຣິສຕະຈັກໄດ້ຂຍາຍຕົວອອກ, ອັຄສາວົກໂປໂລໄດ້ຕັ້ງຄຣິສຕະຈັກແຫ່ງນຶ່ງທີ່ເມືອງໂກຣິນໂທແລະທ່ານກໍໄດ້ຢູ່ທີ່ນັ້ນເປັນເວລາ 18 ເດືອນ (ກິຈການ 18:11). ພາຍຫລັງມາ, ໂປໂລໄດ້ຂຽນຈົດໝາຍເຖິງຄຣິສຕະຈັກແຫ່ງນີ້ ເພາະຄຣິສຕະຈັກໄດ້ເກີດມີບັນຫາເຣື່ອງການຢູ່ລອດ ແລະການເຕີບໃຫຍ່ໃນເມືອງທີ່ຄົນທັງຫລາຍບໍ່ນັບຖືພຣະເຈົ້ານີ້. ໃນຈົດໝາຍນີ້, ໂປໂລໄດ້ໃຫ້ຄຳແນະນຳເຣື່ອງການຖືສິນມະຫາສນິດ ເພາະໄດ້ຮັບຂ່າວວ່າ ຄຣິສຕະຈັກແຫ່ງນີ້ໄດ້ໃຊ້ເວລາຂອງການຖືສິນຢ່າງບໍ່ຖືກຕ້ອງ (11:17) ແລະໄດ້ກໍ່ໃຫ້ມີຄວາມສັບສົນໃນເວລາມະມັສການ ແລະການສາມັກຄີທັມ. ເຫດເກີດຂຶ້ນເພາະການຮັບປະທານອາຫານຊຶ່ງອາດຈະມາກ່ອນ ຫລືອາດຈະເປັນພາກສ່ວນຂອງການຮັບສິນມະຫາສນິດ. ສິນມະຫາສນິດແມ່ນຫຍັງ? ນຶ່ງ, ສິນມະຫາສນິດໃຫ້ໂອກາດສຳລັບການສາມັກຄີທັມກັບພຣະເຈົ້າພຣະເຢຊູຜູ້ຊົງຕາຍ ທີ່ເທິງໄມ້ກາງແຂນ ແລະຜູ້ຊົງເປັນຄືນມາຈາກຄວາມຕາຍ; ໂປໂລກ່າວວ່າພຣະເຢຊູຊົງເປັນຜູ້ສະຖາປະນາພິທີສິນມະ ຫາສນິດໄວ້ (1 ກຣທ 11:23). ສອງ, ສິນມະຫາສນິດເປັນໂອກາດໃຫ້ຄຣິສຕະຈັກໄດ້ເນັ້ນເຣື່ອງພຣະຄຣິດໂດຍປະກາດການວາຍພຣະຊົນຂອງພຣະອົງ ແລະການຈະສະເດັດກັບມາເທື່ອທີສອງ ( 1 ກຣທ 11: 23-27). ສາມ, ສິນມະ ຫາສນິດໃຫ້ໂອກາດຄຣິສຕຽນເພື່ອຕຽມຕົວຝ່າຍຈິດວິນຍານ. ໂປໂລສັ່ງຄຣິສຕຽນທຸກຄົນໃຫ້ "ພິຈາຣະນາເບິ່ງໃຈ ຂອງຕົນເອງ ເພື່ອເຮົາຈະບໍ່ຖືກການຊົງພິພາກສາ" (1 ກຣທ 11: 31).
ຖ້າພວກເຮົາບໍ່ໄດ້ເຮັດຕາມທີ່ກ່າວມານັ້ນ, ພວກເຮົາກໍໄດ້ນຳຄວາມຜິດບາບມາສູ່ຕົວເອງ.

ສິນມະຫາສນິດຍັງເປັນໂອກາດໃຫ້ຜູ້ທີ່ເຊື່ອໄດ້ສາມັກຄີທັມ. ໂປໂລແນະນຳໃຫ້ຄອຍຖ້າເຊິ່ງກັນແລະກັນເວລາຮ່ວມຮັບປະທານອາຫານ (1 ກຣທ 11: 33-34); ເພາະຄຣິສຕຽນເປັນສມາຊິກໃນຄອບຄົວດຽວກັນ ແລະເປັນອ້າຍນ້ອງກັນ. ແຕ່ຖ້າຜູ້ນຶ່ງຜູ້ໃດຫິວຫລາຍ ກໍໃຫ້ຜູ້ນັ້ນກິນມາແຕ່ເຮືອນຂອງຕົນກ່ອນການປະຊຸມ.

ພຣະຄຣິດຊົງໄດ້ວາຍພຣະຊົນເພື່ອໃຫ້ມະນຸດໄດ້ຄືນດີກັບພຣະເຈົ້າ; ສະນັ້ນຈຶ່ງບໍ່ເປັນການສົມຄວນທີ່ຈະມີຄວາມແຕກແຍກເກີດຂຶ້ນໃນເວລາສລອງເພື່ອລະນຶກເຖິງພຣະອົງ. ໃນພິທີຖືສິນມະຫາສນິດ, ພວກເຮົາຈະຕ້ອງຄິດເຫັນຄວາມຕ້ອງການຂອງຄົນອື່ນໆ ແທນທີ່ຈະເປັນຄົນເຫັນແກ່ຕົວ.

**3. ສື່ສັມພັນການມະມັສການຂອງພວກເຮົາ** (ເອເຟໂຊ 5: 19-20)
ການສົນທະນາເຣື່ອງການມະມັສການໃນສມັຍນີ້ສ່ວນຫລາຍຈະເວົ້າເຖິງດົນຕຣີ. ບາງກຸ່ມມັກເພງປະເພດງຽບຈາກປີອາໂນ ຫລືອໍແກນ; ອີກບາງກຸ່ມໃຊ້ກີຕ້າ, ກອງ, ແລະຄີບອດ. ຄວາມຈິງແລ້ວ ບັນຫາບໍ່ຢູ່ທີ່ການໃຊ້ເຄື່ອງດົນດີເພາະໃນສມັຍໂບຣານກໍມີການໃຊ້ເຄື່ອງດົນຕຣີເພື່ອມະມັສການພຣະເຈົ້າ (ເພງສັຣເສີນ 150: 3-5). ແຕ່ໃນການສົນທະນາເຣື່ອງການມະມັສການ ຄົນສ່ວນຫລາຍຖືວ່າເປັນເຣື່ອງພຣະຄັມພີແລະເຣື່ອງຈິດວິນຍານ.

ພຣະສັນຍາໃໝ່ໄດ້ສອນຫຍັງແດ່ກ່ຽວກັບເຄື່ອງດົນຕຣີໃນຄຣິສຕະຈັກ? ຈາກຈົດໝາຍຂອງໂປໂລ, ພວກເຮົາສັງເກດ

ໄດ້ວ່າຄຣິສຕຽນທີ່ເມືອງເອເຟໂຊໄດ້ "ສົນທະນາກັນດ້ວຍເພງສັຣເສີນ, ເພງນະມັສການ, ແລເພງຍ້ອງຍໍສໍຣະເສີນຝ່າຍພຣະວິນຍານ" (5: 19). ການນະມັສການໃນສມັຍແລກປະກອບດ້ວຍເພງປະເພດຕ່າງໆ ຊຶ່ງອາດຈະແມ່ນເພງທີ່ພວກເຂົາເຈົ້າຂຽນເອງ ຫລືເພງທີ່ພຣະວິນຍານຊົງດົນໃຈໃຫ້ຂຽນ. ສະນັ້ນການນະມັສການບໍ່ໄດ້ຈຳກັດເວລາຫລືສະຖານທີ່ ແຕ່ສາມາດນະມັສການໄດ້ໃນທຸກເວລາ ແລະສະຖານທີ່. ໂປໂລແນະນຳຄຣິສຕຽນຈົ່ງ "ຮ້ອງເພງແລະສັຣເສີນຈາກໃຈຂອງທ່ານທັງຫລາຍຖວາຍແດ່ອົງພຣະຜູ້ເປັນເຈົ້າ" (5:19). ຈິດໃຈທີ່ເຕັມດ້ວຍການຂອບພຣະຄຸນຕໍ່ພຣະຜູ້ເປັນເຈົ້າ ໃນພຣະນາມຂອງອົງພຣະເຢຊູຄຣິດມີຄວາມສຳຄັນກວ່າເຄື່ອງດົນຕຣີ. ເປົ້າໝາຍຂອງການນະມັສການກໍຄືພຣະເຈົ້າແລະການເສີມສ້າງຄຣິສຕະຈັກໃຫ້ເຂັ້ມແຂງຜ່ານສຽງເພງ ແລະການເທສນາພຣະທັມ (1 ກຣທ 14:16-32).

## 4. <u>ການຖວາຍຕົວເພື່ອນະມັສການ</u> (ເຮັບເຣີ 10:24-25)

ຜູ້ຂຽນພຣະທັມເຮັບເຣີໄດ້ຊັກຊວນຜູ້ອ່ານເຣື່ອງນະມັສການເຖິງສີ່ຄັ້ງດ້ວຍຄຳວ່າ "ຈົ່ງ.." ໃນເຮັບເຣີ 10:22-25. ການນະມັສການທີ່ດີທີ່ສຸດແມ່ນການນະມັສການໃນກຸ່ມ. ຈຳເປັນບໍ່ທີ່ພວກເຮົາຈະຕ້ອງເຕົ້າໂຮມກັນ? ຄຳຕອບກໍຄືວ່າ "ຈຳເປັນ." ເພາະການນະມັສການບໍ່ແມ່ນເພື່ອເຮົາຜູ້ດຽວ; ບາງຄົນໄດ້ເວົ້າວ່າ "ຂ້ອຍບໍ່ຈຳເປັນຕ້ອງໄປໂບດ ເພາະໄດ້ຟັງເທສນາຈາກວິທະຍຸ ແລະເບິ່ງນັກເທດໃນໂທຣະທັດເປັນປະຈຳ." ສິ່ງນັ້ນຄືຄວາມຄິດທີ່ຜິດ; ການຢູ່ຮ່ວມກັນກັບຄຣິສຕຽນຄົນອື່ນໆຊ່ວຍໃຫ້ເຕີບໃຫຍ່ຝ່າຍຈິດວິນຍານ. ນອກນັ້ນຄຣິສຕຽນຈະຕ້ອງມີຄວາມຮັບຜິດຊອບຕໍ່ກັນແລະກັນ.

ເພາະຄຣິສຕຽນເປັນອ້າຍນ້ອງກັນແລະເປັນສະມາຊິກໃນຄອບຄົວດຽວກັນ ພວກເຮົາມີໜ້າທີ່ໃນການ "ປຸກໃຈຊຶ່ງກັນແລະກັນໃຫ້ມີຄວາມຮັກ ແລະເຮັດການດີງາມ " ແລະໃນການໜູນໃຈກັນບໍ່ໃຫ້ປະການນະມັສການ " ເພາະທ່ານກໍຮູ້ກໍເຫັນຢູ່ວ່າ<u>ວັນນັ້ນ</u>ໃກ້ເຂົ້າມາແລ້ວ."

"ວັນນັ້ນ" ໝາຍເຖິງ "ວັນຂອງພຣະເຈົ້າ" ຊຶ່ງເປັນວັນທີ່ພຣະເຈົ້າຈະຊົງພິພາກສາມະນຸດທັງຫລາຍ (ໂຢເອນ 2:31; ມາລາກີ 3:1-2). ຄຣິສຕຽນໃນສມັຍແລກເຂົ້າໃຈເຣື່ອງນີ້ດີວ່າເປັນວັນທີ່ພຣະຄຣິດຈະສະເດັດກັບມາເທື່ອທີສອງ. ສະນັ້ນການພົບກັນແຕ່ລະອາທິດກໍເປັນໂອກາດນຶ່ງ ທີ່ພວກເຮົາຈະໄດ້ໜູນໃຈກັນໃນການດຳເນີນຊີວິດທີ່ຕຽມພ້ອມ ບໍ່ວ່າພຣະຄຣິດຈະກັບມາມື້ໃດ ຫລືເວລາໃດ.

## <u>ພາກປະຕິບັດ</u>

ພຣະສັນຍາໃໝ່ເຕືອນເຣື່ອງການເຫັນແກ່ຕົວໃນເວລານະມັສການ. ການສລອງສິນມະຫາສນິດ, ການໄຫວ້ວອນ, ການຮ້ອງເພງ, ແລະການອົບຮົມສັ່ງສອນ ຈະຕ້ອງຖວາຍກຽດພຣະເຈົ້າກ່ອນຢ່າງອື່ນ. ນອກນັ້ນພວກເຮົາຈະຕ້ອງຄິດເຖິງຄວາມຕ້ອງການຂອງໄພ່ພົນຂອງພຣະເຈົ້າຄົນອື່ນໆດ້ວຍ.

ພວກເຮົາຮູ້ສິ່ງທີ່ມັກ ແລະບໍ່ມັກເຣື່ອງເຄື່ອງດົນດີ ຫລືການຮ້ອງເພງ; ແຕ່ພວກເຮົາຕ້ອງເຂົ້າໃຈວ່າພຣະເຈົ້າຄືຈຸດສຳຄັນໃນການນະມັສການຂອງພວກເຮົາ. ການນະມັສການທີ່ຖືກຕ້ອງຈະຊ່ວຍໃຫ້ພວກເຮົາຮູ້ພຣະເຈົ້າດີຂຶ້ນ. ສະນັ້ນພວກເຮົາບໍ່ໄດ້ໄປນະມັສການເພື່ອຈັບຜິດຄົນອື່ນ ແຕ່ເພື່ອພຣະເຈົ້າຈະໄດ້ພິສູດພວກເຮົາ. ພຣະເຈົ້າເປັນຜູ້ຊົມເບິ່ງການນະມັສການຂອງພວກເຮົາ; ຄຳຖາມທີ່ພວກເຮົາຈະຕ້ອງຖາມຕົວເອງກໍຄື, ຂ້າແດ່ພຣະຜູ້ເປັນເຈົ້າ ພວກຂະນ້ອຍເຮັດໄດ້ດີແລ້ວບໍ່? ພວກຂະນ້ອຍໄດ້ໃຫ້ພຣະອົງສິ່ງທີ່ດີທີ່ສຸດຈາກທຸກຢ່າງທີ່ມີຢູ່ແລ້ວບໍ່?

## <u>ຄຳຖາມ:</u>

1. ການໄຫວ້ວອນມີສ່ວນຫຍັງແດ່ໃນເວລານະມັສການ?

2. ທ່ານໄດ້ເຫັນຄວາມຍິ່ງໃຫຍ່ຂອງພຣະເຈົ້າໃນການນະມັສການບໍ່?

3. ການຮ້ອງເພງແລະການເທສນາປະເພດໃດແດ່ທີ່ຖືກຕ້ອງໃນການນະມັສການ?

4. ທ່ານສາມາດແບ່ງແຍກ ຫລັກໃນພຣະຄັມພີ ແລະປະເພນີໃນການເລືອກວິທີນະມັສການບໍ່? ຕົວຢ່າງ, ພຣະຄັມພີໄດ້ບົ່ງວິທີນະມັສການ ຫລືເພງສຳລັບໃຊ້ໃນການນະມັສການໄວ້ຢ່າງລະອຽດບໍ່? ຄຣິສຕຽນຄວນຜິດຖຽງກັນໃນເຣື່ອງນີ້ບໍ່?

*ດຣ. ສິດນີ ຄານ*

## ບົດຮຽນທີ 13
## ຮັບໃຊ້ຄວາມຂັດສົນ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ກິຈການ 2: 43-45; 3: 1-8; 1 ໂກຣິນໂທ 6:1-3; ຢາໂກໂບ 2: 14-17.

**ພູມຫຼັງຂອງພຣະຄັມພີ:** ກິຈການ 2: 42-47; 3: 1-10; 1 ໂກຣິນໂທ 6:1-3; ຢາໂກໂບ 2: 14-17.

**ຈຸດສໍາຄັນຂອງບົດຮຽນນີ້:** ຄຣິສຕະຈັກໃນພຣະສັນຍາໃໝ່ຮັບໃຊ້ຄວາມຂັດສົນຂອງຄົນທັງຫລາຍ.

**ຄໍາຖາມເພື່ອການຄົ້ນຄວ້າ:** ທ່ານແລະຄຣິສຕະຈັກຂອງທ່ານຮັບໃຊ້ຄວາມຂັດສົນຂອງຄົນທັງຫລາຍວິທີໃດແດ່?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຮຽນຮູ້ວິທີທີ່ຂ້ອຍຈະຮ່ວມມືກັບຄຣິສຕະຈັກ ເພື່ອຮັບໃຊ້ຄວາມຂັດສົນຂອງຄົນທັງຫລາຍ.

### ຄໍານໍາ

ການຮັບໃຊ້ທີ່ເກີດມາຈາກຄວາມຮັກຈະບໍ່ຢຸດຢູ່ພຽງຂອບເຂດຂອງຄຣິສຕະຈັກ. ຄຣິສຕະຈັກໃນພຣະສັນຍາໃໝ່ເລີ້ມຕົ້ນດ້ວຍການຮັບໃຊ້ຊຶ່ງກັນແລະກັນ ແຕ່ໃນທີ່ສຸດພວກເຂົາເຈົ້າກໍໄດ້ຮັບໃຊ້ຄົນທົ່ວໂລກ.

ຄຣິສຕະຈັກຈະເຮັດຢ່າງໃດຈຶ່ງຈະສາມາດຮັບໃຊ້ຄວາມຂັດສົນອັນມະຫາສານຂອງຄົນທົ່ວໂລກ? ແຕ່ລະມື້ພວກເຮົາໄດ້ເຫັນຄົນຫລາຍໆພັນໃນໂລກເສັຽຊີວິດເພາະຄວາມອຶດຢາກ; ເດັກນ້ອຍເສັຽຊີວິດເພາະພະຍາດໄຂ້ປ່າ; ຜູ້ໃຫຍ່ເສັຽຊີວິດເພາະໂລກປອດແຫ້ງ; ຊາວໜຸ່ມເສັຽຊີວິດເພາະໂລກເອດ. ຄວາມຂັດສົນມີຢ່າງຫລວງຫລາຍຢູ່ໃນໂລກຂອງພວກເຮົາ. ບາງຄັ້ງພວກ ເຮົາຄິດຢາກຈະຍອມແພ້ ເພາະເຮົາຄິດວ່າບັນຫານັ້ນໃຫຍ່ຫລາຍໂພດ. ບາງຄົນກໍຂອບຄຸນພຣະເຈົ້າທີ່ຕົວເອງບໍ່ໄດ້ມີບັນຫາເຣື່ອງຄວາມອຶດຢາກ ຫລືເປັນພະຍາດທີ່ບໍ່ມີຢາປົວ. ພວກເຮົາຈະເອົາຊະນະຄວາມຄິດແບບນີ້ໄດ້ຢ່າງໃດ? ຄຣິສຕຽນຕ້ອງຖາມຕົວເອງວ່າ, ມີຫຍັງແດ່ທີ່ຂ້ອຍເຮັດໄດ້ເພື່ອຊ່ວຍຫລຸດຜ່ອນຄວາມຂັດສົນອັນມະຫາສານທີ່ມີຢູ່ໃນໂລກນີ້?

ຄຣິສຕະຈັກໃນພຣະສັນຍາໃໝ່ຮັບໃຊ້ຄວາມຂັດສົນຂອງຄົນທັງຫລາຍດ້ວຍຄວາມຮັກ. ໃຜເປັນຄົນບອກໃຫ້ຄຣິສຕະຈັກຮັບໃຊ້ຄວາມຂັດສົນຂອງຄົນອື່ນໆ? ຄຣິສຕຽນໃນສມັຍແລກໄດ້ເຫັນການຮັບໃຊ້ຂອງພຣະເຢຊູ; ເຂົາເຈົ້າໄດ້ເຫັນພຣະອົງລ້ຽງຄົນຫ້າພັນຄົນທີ່ກໍາລັງຫິວ ແລະພຣະອົງໄດ້ບອກພວກສາວົກເອົາອາຫານໃຫ້ຄົນທັງຫລາຍ (ລູກາ 9:13). ຄຣິສຕຽນໃນສມັຍແລກບໍ່ເຫັນແກ່ຄວາມອິດເມື່ອຍຂອງຕົວເອງ. ພວກເຂົາເຈົ້າໄດ້ເຮັດຈົນສຸດຄວາມສາມາດ. ລູກາ ໄດ້ຂຽນໄວ້ໃນຕອນນີ້ວ່າ "ໃນພວກເຂົານັ້ນບໍ່ມີຜູ້ໃດຂັດສົນ ດ້ວຍວ່າບຸກຄົນໃດມີໄຮ່ນາຫລືຢ້າວເຮືອນກໍໄດ້ຂາຍເສັຽ ແລະນໍາເງິນຄໍາແລະຂອງທີ່ຂາຍໄດ້ນັ້ນ, ມາມອບໄວ້ໃນມືຂອງພວກອັຄສາວົກ" (ກິຈການ 4: 34-35).

### 1. ຊ່ວຍການຂັດສົນໃນພຣະກາຍ (ກິຈການ 2:43-45; 4:34-36; 1 ໂກຣິນໂທ 16:1-3; ຢາໂກໂບ 2:14-17)

ພວກເຮົາຈະຊ່ວຍຄວາມຂັດສົນທີ່ມີໃນຄຣິສຕະຈັກຂອງພຣະເຈົ້າວິທີໃດ? ນຶ່ງ, ພວກເຮົາຈະຕ້ອງພ້ອມທີ່ຈະແບ່ງປັນສິ່ງທີ່ພຣະເຈົ້າໄດ້ມອບໃສ່ມືເຮົາ. ຄຣິສຕຽນທີ່ແທ້ບໍ່ອາດຈະຢືນເບິ່ງຄົນທີ່ຂັດສົນ ເມື່ອຕົວເອງມີທຸກຢ່າງພຽງພ້ອມ. ພວກຜູ້ເຊື່ອທີ່ຄຣິສຕະຈັກເຢຣູຊາເລັມໄດ້ນໍາຊັບສິ່ງຂອງມາເປັນຂອງສ່ວນຮວມ (2:43-45). ຫລາຍຄົນໄດ້ຂາຍທີ່ດິນແລະສິ່ງຂອງ ເພື່ອມາແຈກຢາຍໃຫ້ຄົນທີ່ມີຄວາມຕ້ອງການ. ບາຣະນາບາໄດ້ຂາຍນາຂອງລາວບ່ອນນຶ່ງແລະນໍາເງິນມາມອບໃຫ້ພວກອັຄສາວົກ (ກິຈການ 4: 36-37).

**ສອງ**, ພວກເຮົາຮຽນແບ່ງປັນສິ່ງທີ່ເຮົາມີກັບຄົນອື່ນໆ. ຄຣິສຕຽນໃນສມັຍແລກໃຫ້ຕາມທີ່ທຸກຄົນຕ້ອງການ (ກິຈການ 2:45). ພຣະເຈົ້າຊົງສັນຍາກັບຊາວອິສຣາເອນວ່າ ໃນຖ້າມກາງພວກເຂົາຈະບໍ່ມີຄົນຂາດເຂີນ (ພຣະບັນຍັດທີສອງ 15: 4). ພຣະສັນຍານີ້ໄດ້ເປັນຈິງໃນຄຣິສຕະຈັກ (ກິຈການ 4:34). ໃນເວລາຄຣິສຕະຈັກເຢຣູຊາເລັມມີຄວາມຂັດສົນ, ໂປໂລໄດ້ແນະນຳໃຫ້ຄຣິຕະຈັກທີ່ໂກຣິນໂທຈົ່ງບໍຣິຈາກເພື່ອຊ່ວຍເຫລືອ "ໄພ່ພົນຂອງພຣະເຈົ້າ" (1 ໂກຣິນໂທ 16:1). ສະມາຊິກໄດ້ພາກັນຖວາຍຕາມລາຍໄດ້ຂອງຕົນໃນວັນຕົ້ນສັປດາ (1 ໂກຣິນໂທ 16:2). ນອກນັ້ນກໍມີຄຣິຕະຈັກຄາລາເຕັຽທີ່ໄດ້ມີສ່ວນໃນການບໍຣິຈາກເພື່ອຄວາມອຶດຢາກທີ່ຄຣິສຕະຈັກເຢຣູຊາເລັມ.

ພຣະສັນຍາໃໝ່ໄດ້ສອນພວກເຮົາໃຫ້ຊ່ວຍເຫລືອຜູ້ທີ່ຂາດເຂີນໃນຄອບຄົວຂອງພຣະເຈົ້າ ເພື່ອສະແດງໃຫ້ເຫັນວ່າພວກເຮົາມີຄວາມເຊື່ອທີ່ແທ້ຈິງ (ຢາໂກໂບ 2:14-17). ນອກຈາກການດູແລຄົນທີ່ຢູ່ໃນຄຣິສຕະຈັກແລ້ວ, ພວກເຮົາຍັງມີພາລະຕໍ່ຄົນທີ່ຢູ່ນອກຄອບຄົວຂອງພຣະເຈົ້າອີກ. ຄວາມເຊື່ອທີ່ຂາດການປະຕິບັດ ກໍບໍ່ແມ່ນຄວາມເຊື່ອແທ້.

**2. <u>ຊ່ວຍຄວາມຂັດສົນນອກພຣະກາຍ</u>** (ກິຈການ 2:43; 3:1-8)

ພວກອັຄສາວົກໄດ້ເຮັດສິ່ງອັສຈັນຫລາຍຢ່າງ, ບໍ່ພຽງໃນຄຣິສຕະຈັກ ແຕ່ກັບພົລເມືອງທີ່ຢູ່ນອກຄຣິສຕະຈັກ (ກິຈການ 3: 1-10). ພວກຜູ້ເຊື່ອທັງຫລາຍໄດ້ຕຽມພ້ອມທີ່ຈະຮັບໃຊ້ຄົນຂ້າງນອກ ໂດຍການມີສ່ວນຮ່ວມໃນພຣະວິຫານ. ເປໂຕແລະໂຢຮັນຂຶ້ນໄປພຣະວິຫານໃນຍາມອ້ອນວອນ; ເຂົາເຈົ້າໃຊ້ເວລາໂອ້ລົມກັບຄົນຂໍທານ (ກິຈການ 3: 4,6). ຄຣິສຕຽນຫລາຍໆຄົນເປັນເໝືອນປະໂຣຫິດແລະເລວີ ໃນຄຳອຸປມາເຣື່ອງໄທຊາມາເຣັຽຜູ້ໃຈດີ (ລູກາ 10: 25-37).

ເປໂຕ ແລະໂຢຮັນບໍ່ມີເງິນຫລືຄຳທີ່ຈະໃຫ້ຄົນຂໍທານ ແຕ່ພວກເຂົາເຈົ້າມີພຣະນາມຂອງພຣະເຢຊູ ແລະຣິດອຳນາດຂອງພຣະອົງເພື່ອການປິ່ນປົວຮັກສາ. ຖ້າທ່ານຢູ່ໃນສະຫະຣັດອະເມຣິກາ, ທ່ານອາດຈະບໍ່ມີທຸກຢ່າງທີ່ທ່ານຕ້ອງການ ແຕ່ເມື່ອປຽບທຽບກັບຄົນທັງຫລາຍໃນປະເທດທີ່ດ້ອຍພັທນາ, ທ່ານກໍເປັນຜູ້ມີຖານະດີຫລາຍແລ້ວ.

ເປໂຕແລະໂຢຮັນໄດ້ຊ່ວຍຄົນຂໍທານທີ່ເປັນຄົນພິການໃຫ້ຍ່າງເປັນປົກຕິໂດຍພຣະນາມຂອງພຣະເຢຊູ (ກິຈການ 3:7). ຊີວິດຂອງຊາຍຄົນນັ້ນໄດ້ປ່ຽນຈາກຜູ້ນັ່ງຂໍທານ ແລະອາສັຍຄົນອື່ນ ກາຍເປັນຜູ້ສັຣເສີນພຣະເຈົ້າ ເພາະຄວາມຮັກຂອງຄຣິສຕຽນ ແລະຣິດອຳນາດຂອງພຣະເຈົ້າ. ແມ່ນຫຍັງຈະເກີດຂຶ້ນຖ້າຄຣິສຕຽນໃນສມັຍນີ້ບໍ່ໃຊ້ສິ່ງຂອງທີ່ພວກເຂົາເຈົ້າມີຢູ່ເພື່ອຊ່ວຍເຫລືອຄວາມຂາດເຂີນອັນມະຫາສານທີ່ມີຢູ່ໃນໂລກນີ້?

ພວກເຮົາໄດ້ເຫັນຄວາມຂາດເຂີນຂອງເພື່ອນມະນຸດດ້ວຍກັນໃນທົ່ວໂລກ, ທ່ານໄດ້ເຮັດຫຍັງແດ່? ທ່ານໄດ້ເຮັດຫຍັງແດ່ເພື່ອຊ່ວຍຜ່ອນຄວາມອຶດຫິວໃນລາວ, ຊູແດນ, ແລະປະເທດອື່ນໆ. ທ່ານອາດຈະເຮັດຫລາຍບໍ່ໄດ້; ແຕ່ທ່ານສາມາດເຮັດໄດ້ບາງຢ່າງ. ຫລາຍຄົນໄດ້ຖວາຍຊັບຜ່ານຄຣິສຕະຈັກ ເພື່ອຊ່ວຍຜ່ອນຄວາມອຶດຫິວໃນໂລກ; ບາງຄົນໄດ້ອອກໄປຮັບໃຊ້ດ້ວຍຕົວເອງໃນທີ່ຕ່າງໆ. ຢ່າໃຫ້ຄວາມຮັກຂອງພຣະເຈົ້າຢຸດຢູ່ພຽງຕົວທ່ານເອງ ແຕ່ຈົ່ງນຳຄວາມຮັກຂອງພຣະເຈົ້າອອກໄປເພື່ອຄົນໃນໂລກຕາມຄວາມສາມາດແລະຊັບສິ່ງຂອງທີ່ພຣະເຈົ້າໄດ້ໃຫ້ກັບທ່ານ.

**<u>ພາກປະຕິບັດ</u>**

ຂ່າວປະເສີດເຣື່ອງພຣະເຢຊູຄຣິດມີຄວາມໝາຍຫລາຍກວ່າຂ່າວປະເສີດສັງຄົມ, ແນ່ນອນພວກເຮົາຈະຕ້ອງຊ່ວຍເຫລືອສັງຄົມ. ການຊ່ວຍຄວາມຂາດເຂີນຝ່າຍເນື້ອໜັງຂອງຄົນທັງຫລາຍຈະສະແດງຄວາມຈິງເຣື່ອງຄວາມຮັກ ແລະຣິດອຳນາດຂອງພຣະຄຣິດ ໃນການທີ່ຈະຊ່ວຍຄວາມຂັດສົນຝ່າຍຈິດວິນຍານຂອງພວກເຂົາເຈົ້າເໝືອນກັນ. ເວລາຄຣິສຕຽນ

ຮັບໃຊ້ຄວາມຂັດສົນຝ່າຍເນື້ອໜັງ, ພວກເຮົາກໍໄດ້ສືບຕໍ່ການຮັບໃຊ້ຂອງພຣະເຢຊູຄຣິດສຳລັບຄົນທຸກຍາກ, ຄົນທີ່ຫລົງຫາຍ, ແລະຄົນທີ່ຕ້ອຍຕ່ຳທີ່ພຣະອົງໄດ້ຊົງເຮັດໃນເວລາທີ່ຢູ່ໃນໂລກມະນຸດ.

<u>ຄຳຖາມ:</u>

1. ຄຣິສຕະຈັກຂອງທ່ານໄດ້ຮັບໃຊ້ຄວາມຂາດເຂີນໃນຄຸ້ມບ້ານຂອງທ່ານ ແລະໃນໂລກຂອງເຮົາວິທີໃດແດ່?

2. ທ່ານເຄີຍສະເທືອນໃຈເພາະຄວາມຂາດເຂີນອັນມະຫາສານທີ່ມີໃນໂລກຂອງພວກເຮົາບໍ່? ການສຶກສາຄຣິສຕະຈັກພຣະສັນຍາໃໝ່ ໃນມື້ນີ້ ຊ່ວຍທ່ານໃຫ້ເຫັນຊ່ອງທາງທີ່ຈະມີສ່ວນໃນການຮັບໃຊ້ ວິທີໃດແດ່?

3. ມີໃຜແດ່ທີ່ກຳລັງນັ່ງຢູ່ຕໍ່ໜ້າຄຣິສຕະຈັກຂອງທ່ານ? ທ່ານມີວິທີໃດແດ່ທີ່ຈະຊ່ວຍພວກເຂົາເຈົ້າໃຫ້ເຂົ້າມາຂ້າງໃນ?

4. ເປໂຕແລະໂຢຮັນໄດ້ເບິ່ງພຣະເຢຊູປິ່ນປົວຄົນປ່ວຍ ແລະລ້ຽງດູຄົນທຸກຍາກ. ຄວາມສັມພັນສ່ວນຕົວກັບພຣະຄຣິດໄດ້ປ່ຽນທັສນະຂອງທ່ານກ່ຽວກັບຄວາມຂາດເຂີນທີ່ມີຢູ່ໃນໂລກຂອງພວກເຮົາແນວໃດ?

5. ຄຳສອນຂອງໂປໂລໃນ 1 ໂກຣິນໂທ 16: 1-14 ສອນພວກເຮົາແນວໃດແດ່ເລື່ອງການຮ່ວມມືກັບຄຣິສຕະຈັກອື່ນໆເພື່ອການຮັບໃຊ້? ຄຣິສຕະຈັກຂອງທ່ານເຄີຍໄດ້ຮັບການຊ່ວຍເຫລືອຈາກຄຣິສຕະຈັກອື່ນໆບໍ່?

6. ຢາໂກໂບໄດ້ສອນເລື່ອງຄວາມສັມພັນລະຫວ່າງຄວາມເຊື່ອແລະການປະຕິບັດ. ການລ້ຽງຄົນທຸກ ແລະການໃຫ້ເຄື່ອງຂອງກັບພວກເຂົາເຈົ້າ ສະແດງເຖິງຄວາມເຊື່ອທີ່ແທ້ຂອງທ່ານວິທີໃດ?

## <u>ຕົວຢ່າງເລື່ອງການຮັບໃຊ້</u>

ຊອກວິທີທີ່ຄຣິສຕະຈັກຂອງທ່ານຈະສາມາດຮັບໃຊ້ຄົນທັງຫລາຍທີ່ຂາດເຂີນໃນສັງຄົມຂອງທ່ານ. ຄຣິສຕະຈັກບາງແຫ່ງເປີດບໍຣິການລ້າງຣົດຟຣີ ແລະບອກເຈົ້າຂອງຣົດວ່າ, "<u>ພວກເຮົາບໍ່ຫາລາຍໄດ້ ແຕ່ຢາກສະແດງຄວາມຮັກຂອງພຣະຄຣິດ</u>." ບາງຄຣິສຕະຈັກແຈກຢາຍເງິນຫລຽນຕາມສະຖານທີ່ຊັກຜ້າ ເພື່ອສະແດງຄວາມຮັກຂອງພຣະຄຣິດ. ຫລາຍໆເມືອງມີສາງເກັບອາຫານ ແລະເຄື່ອງນຸ່ງທີ່ຄຣິສຕະຈັກສາມາດນຳອອກໄປແຈກຢາຍໃຫ້ຜູ້ທີ່ຂາດເຂີນ. ພວກເຮົາບໍ່ສາມາດທີ່ຈະເຮັດໄດ້ໝົດທຸກຢ່າງ, ແຕ່ພວກເຮົາສາມາດເຮັດໄດ້ບາງຢ່າງ. ໂດຍພຣະຄຸນຂອງພຣະເຈົ້າ, ໃຫ້ພວກເຮົາຈົ່ງເຮັດໃນສິ່ງທີ່ສາມາດເຮັດໄດ້.

*ດຣ. ສົດນີ ດານ*

# <u>ບົດຮຽນທີ 14</u>
# <u>ເປັນພຍານກັບໂລກ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ກິຈການ 2: 47; ມັດທາຍ 28:18-20; ໂຢຮັນ 20:19-21; ກິຈການ 11: 19-26.

**<u>ພູມຫຼັງຂອງພຣະຄັມພີ:</u>** ກິຈການ 2: 42-47 ; ມັດທາຍ 28:18-20; ໂຢຮັນ 20:19-21; ກິຈການ 11: 19-26.

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ຄຣິສຕະຈັກພຣະສັນຍາໃໝ່ພະຍາຍາມເປັນພຍານກັບຄົນທັງຫລາຍເຣື່ອງພຣະຄຣິດ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ການປະກາດຂ່າວປະເສີດກັບຄົນໃນໂລກມີຄວາມສຳຄັນຢ່າງໃດສຳລັບທ່ານ ແລະ ຄຣິສຕະຈັກຂອງທ່ານ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຈະຮຽນຮູ້ວິທີທີ່ຂ້ອຍຈະຕ້ອງເຮັດເພື່ອເປັນພຍານເຣື່ອງພຣະຄຣິດ.

## <u>ຄຳນຳ</u>

ໃນຖານະຂອງຜູ້ເຊື່ອຕາມພຣະສັນຍາໃໝ່, ພວກເຮົາຈະຕ້ອງເຊື່ອຟັງພຣະບັນຊາຂອງອົງພຣະຄຣິດເຣື່ອງການດຳເນີນຊີວິດເພື່ອເປັນພຍານ ເພື່ອພວກເຮົາຈະໄດ້ນຳຄົນທັງຫລາຍມາຫາພຣະອົງ. ເພາະຄວາມສະດວກເຣື່ອງການສື່ສານ ແລະການຄົມມະນາຄົມ, ຄຣິສຕຽນໃນສມັຍຂອງພວກເຮົາມີໂອກາດຫລາຍທີ່ຈະເຊື່ອຟັງພຣະມະຫາບັນຊາ.

ຄຣິສຕະຈັກແຫ່ງນຶ່ງມີປະເພນີທີ່ວ່າພວກເຂົາເຈົ້າຈະເຊີນຄົນທີ່ພາຜູ້ເຊື່ອໃໝ່ໃຫ້ມາຮູ້ຈັກກັບພຣະຄຣິດໃຫ້ຢືນຂຶ້ນເວລາລາວຮັບພິທີບັບຕິສະມາ. ປະກົດວ່າມີຍິງຄົນນຶ່ງທີ່ຈະຕ້ອງໄດ້ຢືນແລ້ວຢືນອີກຕັ້ງຫລາຍເທື່ອ. ຫລັງຈາກບັບຕິສະມາແລ້ວ ສິດຍາພິບານຈະຖາມສະມາຊິກທີ່ບັບຕິສະມາໃໝ່ໆວ່າ, ຜູ້ຍິງຄົນນີ້ມີສ່ວນຫຍັງແດ່ໃນການຕັດສິນໃຈມາເປັນຄຣິສຕຽນຂອງພວກເຈົ້າ? ລາວໄດ້ໃຊ້ໃບປີວບໍ່? ລາວເປັນຄົນຈູ້ຈີ້ບໍ່?

ພວກຄຣິສຕຽນໃໝ່ຈະຕອບເປັນສຽງດຽວກັນວ່າ, "ບໍ່, ແຕ່ລາວເຮັດການຢູ່ບ່ອນດຽວກັນ. ລາວໄດ້ມີສ່ວນຊ່ອຍຫລືອພວກເຮົາແຕ່ລະຄົນ. ພວກເຮົາຮູ້ສຶກເປັນໜີ້ບຸນຄຸນຂອງລາວ. ພວກເຮົາບໍ່ກ້າປະຕິເສດເວລາລາວເຊີນມາໂບດ." ພວກເຂົາເຈົ້າໄດ້ຍິນຂ່າວປະເສີດເພາະການມາຢ້ຽມໂບດ ແຕ່ພວກເຂົາເຈົ້າໄດ້ເຫັນຂ່າວປະເສີດໃນຍິງຄົນດັ່ງກ່າວໃນຂະນະທີ່ທຳງານຮ່ວມກັນແຕ່ລະວັນ.

ການປະກາດໃນພຣະສັນຍາໃໝ່ເລີ້ມຕົ້ນດ້ວຍການມີຄວາມສັມພັນ. ເວລາພວກເຮົາດຳເນີນຊີວິດແບບມີຊັຍຊະນະ, ຄົນທັງຫລາຍຈະສົນໃຈຢາກຮູ້ພຣະຄຣິດຜູ້ທີ່ໄດ້ປ່ຽນແປງຊີວິດຂອງພວກເຮົາ.

### 1. <u>ການປະກາດເລີ້ມຈາກຄວາມສັມພັນ</u> (ກິຈການ 2:46-47)

ຄຣິສຕະຈັກໃນສມັຍທຳອິດປະກາດວິທີໃດ? ທ່ານລູກາໄດ້ຂຽນວ່າ, "ຝ່າຍອົງພຣະຜູ້ເປັນເຈົ້າໄດ້ຊົງໂຜດໃຫ້ຄົນທັງຫລາຍຊຶ່ງກຳລັງຈະລອດພົ້ນນັ້ນມາເຂົ້າກັບພວກສິດທຸກໆວັນ" (ກິຈການ 2:47). ຖ້າເບິ່ງບໍ່ດັກຄືວ່າພຣະເຈົ້າໄດ້ນຳຄົນມາໂບດ ໂດຍຄຣິສຕະຈັກບໍ່ໄດ້ເຮັດຫຍັງເລີຍ. ຄວາມຈິງແລ້ວພຣະທັມໃນຂໍ້ນີ້ແມ່ນຜົນສືບຕໍ່ມາຈາກວຽກຕ່າງໆທີ່ພວກສາວົກໄດ້ພາກັນເຮັດ. ພວກເຂົາເຈົ້າ "ໄດ້ຕັ້ງໝັ້ນຄົງໃນຄຳສອນຂອງພວກອັຄສາວົກ, ໃນການຮ່ວມໃຈກັນ, ໃນການຫັກເຂົ້າຈີ່, ແລະໃນການໄຫວ້ວອນ."

ຄວາມຊື່ນຊົມຍິນດີ ແລະຄວາມສັດຊື່ຂອງຄຣິສຕຽນໃນສມັຍແລກໄດ້ດຶງດູດຈິດໃຈຂອງຄົນທີ່ບໍ່ເຊື່ອໃຫ້ມາສແວງຫາພຣະເຈົ້າ (ກິຈການ 2. 46-47). ພວກເຮົາໃນສມັຍນີ້ມີຄວາມຊົມຊື່ນຍິນດີບໍ່? ພວກເຮົາມີຄວາມສັດຊື່ບໍ່? ການເປັນ

ພຍານເຣື່ອງພຣະຄຣິດຂອງພວກເຮົາຈະບໍ່ເກີດຜົນ ຖ້າພວກເຮົາເວົ້າຢ່າງນຶ່ງ ແຕ່ໄປເຮັດອີກຢ່າງນຶ່ງ. ຄົນທັງຫລາຍໄດ້ເຫັນຄວາມຍິນດີໃນພຣະເຈົ້າຂອງພວກເຮົາໃນຊີວິດປະຈຳວັນບໍ່? ເວລາຄົນທັງຫລາຍຮູ້ວ່າພວກເຮົາເປັນຄຣິສຕຽນແທ້ ພວກເຂົາເຈົ້າກໍຢາກຈະມາຮູ້ພຣະເຢຊູຄຣິດ.

**໒. <u>ການປະກາດເອີ້ນໃຫ້ພວກເຮົາເຊື່ອຟັງໃນການອອກໄປຫາຄົນໃນໂລກ</u>** (ມັດທາຍ 18:18-໒0; ໂຢຮັນ ໒0: 19-໒0)

ເປັນຫຍັງຄຣິສຕະຈັກໃນສມັຍແລກຈຶ່ງອອກປະກາດ? ການປະກາດເກີດຂື້ນເພາະພຣະຄຣິດຊົງບັນຊາ. ພຣະເຢຊູໄດ້ຊົງສັ່ງພວກສາວົກວ່າ "ຈົ່ງເຮັດໃຫ້ຄົນທຸກຊາດເປັນສິດ ໃຫ້ເຂົາບັບຕິສະມາ... ສັ່ງສອນເຂົາ..."

ພຣະທັມມັດທາຍໄດ້ບອກເຖິງການຮັບໃຊ້ຢ່າງມີຣິດເດດຂອງພຣະເຢຊູ (ມັດທາຍ 7:໒8-໒9; 8:9; 9:8). ພຣະອົງໄດ້ຊົງມອບຣິດເດດໃຫ້ຄຣິສຕະຈັກເພື່ອການປະກາດກັບຄົນທັງຫລາຍໃນໂລກ; ພຣະອົງຊົງສັ່ງວ່າ: "ອຳນາດທັງໝົດ ໃນສວັນແລະທີ່ແຜ່ນດິນໂລກກໍດີ ຊົງມອບໃຫ້ແກ່ເຮົາແລ້ວ. ເຫດສັນນັ້ນພວກທ່ານຈົ່ງອອກໄປ" (ມັດທາຍ ໒8:18). ພຣະເຢຊູຊົງສັ່ງຄຣິສຕະຈັກໃຫ້ສ້າງສາວົກ ແລະພຣະອົງໄດ້ຊົງໃຫ້ສັນຍາວ່າ "ເຮົາຈະຢູ່ກັບທ່ານທັງຫລາຍທຸກວັນ ຈົນໝົດກັບ" (ມັດທາຍ ໒8:໒1). ຣິດອຳນາດແລະການຊົງຢູ່ນຳຂອງພຣະຄຣິດຊ່ວຍຄຣິສຕະຈັກໃຫ້ສາມາດເຮັດວຽກງານໃຫ້ສຳເຣັດ.

ຄຣິສຕະຈັກຂອງພຣະເຈົ້າກໍໄດ້ເຕີບໃຫຍ່ສເມີມາຈົນເຖິງສມັຍຂອງພວກເຮົາ, ແຕ່ພຣະມະຫາບັນຊາຂອງພຣະຄຣິດກໍຍັງບໍ່ສຳເຣັດຢ່າງບໍຣິບູນເທື່ອ. ພຣະທັມໂຢຮັນກໍໄດ້ຊັກຊວນເຣື່ອງການປະກາດເຊັ່ນດຽວກັນ. ຫລັງຈາກການຊົງຄືນພຣະຊົນຈາກຄວາມຕາຍພຣະເຢຊູໄດ້ຊົງປາກົດແກ່ພວກສາວົກ; ພຣະອົງໄດ້ຊົງກ່າວໃນຕອນນຶ່ງວ່າ "ພຣະບິດາຊົງໃຊ້ເຮົາມາຢ່າງໃດ ຝ່າຍເຮົາກໍໃຊ້ທ່ານທັງຫລາຍໄປຢ່າງນັ້ນ" (ໂຢຮັນ ໒0:໒1).

ງານເຣື່ອງການປະກາດບໍ່ໄດ້ສງວນໄວ້ສຳລັບພວກສາສນາທູດເທົ່ານັ້ນ ແຕ່ເປັນໜ້າທີ່ຂອງຄຣິສຕຽນທຸກໆຄົນ. ການສນັບສນູນພວກສາສນາທູດທີ່ໄປປະກາດຢູ່ທົ່ວໂລກກໍເປັນເຣື່ອງຈຳເປັນທີ່ຈະຕ້ອງເຮັດຮ່ວມກັນ. ວຽກການປະກາດເປັນພັນທະກິດຂອງຄຣິສຕະຈັກ ແລະຂອງຄຣິສຕຽນ. ພວກເຮົາຈະຕ້ອງມີຊີວິດເພື່ອການປະກາດ ບໍ່ວ່າຈະຢູ່ບ້ານ, ຢູ່ໂຮງຮຽນ, ຢູ່ສະຖານທີ່ພັກເຊົາ, ຫລືຢູ່ທີ່ທຳງານ.

**3. <u>ການປະກາດມ້າງສິ່ງກີດຂວາງ, ຕ້ອນຮັບທຸກຄົນໃຫ້ມີຄວາມສັມພັນກັບພຣະຄຣິດ</u>** (ກິຈການ 11:19-໒6)

ພວກຜູ້ເຊື່ອຈະປະກາດກັບໃຜ? ການປະກາດໃນຄຣິສຕະຈັກພຣະສັນຍາໃໝ່ເຕີບໃຫຍ່ແບບມີຈຸດສູນກາງ. ຫລັງຈາກວັນເພນເຕຄໍສະເຕ, ພວກສາວົກໄດ້ປະກາດທົ່ວກຸງເຢຣູຊາເລັມ; ໃນຂະນະທີ່ພວກເຂົາເຈົ້າໄດ້ແກ້ປັນຫາຕ່າງໆໃນຄຣິສຕະຈັກ, ພຣະເຈົ້າໄດ້ເຮັດໃຫ້ຄຣິສຕະຈັກຂຍາຍຕົວຢ່າງວ່ອງໄວ ແລະພວກປະໂຣຫິດຈຳນວນຫລາຍໄດ້ຍອມເຊື່ອໃນພຣະຄຣິດ (ກິຈການ 6:7).

ຫລັງຈາກການຕາຍຂອງຊະເຕຟາໂນ, ຫລາຍຄົນໃນຄຣິຕະຈັກໄດ້ແຕກກະຈັດກະຈາຍໄປທົ່ວທຸກບ່ອນ ເພາະການຂົ່ມເຫັງອັນໃຫຍ່ຕໍ່ຄຣິສຕະຈັກທີ່ຢູ່ໃນກຸງເຢຣູຊາເລັມ (ກິຈການ 8:1). ໃນຂະນະທີ່ອອກໄປ, ພວກເຂົາເຈົ້າກໍໄດ້ປະກາດຂ່າວປະເສີດເຣື່ອງພຣະເຢຊູຄຣິດໄປດ້ວຍ. ຟີລິບໄປປະກາດທີ່ຊາມາເຣັຽ; ຫລາຍຄົນໄດ້ມາເຊື່ອ (ກິຈການ 8: 4-1໒). ຟີລິບໄດ້ປະກາດກັບຊາວເອທິໂອເປັຽ (ກິຈການ 8: ໒6-40). ເປໂຕໄດ້ໄປປະກາດກັບໂກເນລີໂອ, ນາຍຮ້ອຍທະຫານອີຕາເລັຽ (ກິຈການ 10: 1--11:18).

ຕົກມາເຖິງຕອນນີ້ ຄຣິສຕະຈັກບໍ່ໄດ້ຕັ້ງໃຈທີ່ຈະປະກາດກັບຊາວຕ່າງຊາດ; ແຕ່ເມື່ອຄຣິສຕຽນຫລາຍຄົນໄດ້ໄປອາສັຍຢູ່ອັນຕີໂອເຂັຽ, ເກາະກຸບໂຣ, ແລະກີເຣເນ, ພວກເຂົາເຈົ້າໄດ້ປະກາດກັບຊາວກຣີກ (ກິຈການ 11:19-20). ພຣະເຈົ້າໄດ້ຊົງທຳງານ ແລະໄດ້ສະແດງຣິດອຳນາດຖ້າມກາງພວກເຂົາ ແລະຊາວຕ່າງຊາດຈຳນວນຫລາຍພາກັນມາເຊື່ອ (ກິຈ ການ 11:21).

ບາຣະນາບາໄດ້ໄປເມືອງອັນຕີໂອເຂັຽ ເພື່ອຊອກຫາ ໂຊໂລ (ໂປໂລ) ຜູ້ທີ່ໄດ້ກັບໃຈມາເຊື່ອພຣະເຢຊູຄຣິດໃນຂະນະທີ່ເດີນທາງໄປຈັບຄຣິສຕຽນທີ່ເມືອງດາມາເຊ. ບາຣະນາບາໄດ້ພົບໂປໂລທີ່ເມືອງຕາໂຊ ແລະໄດ້ນຳລາວມາທີ່ເມືອງອັນຕີໂອເຂັຽ. ທັງສອງໄດ້ຮ່ວມກັນຮັບໃຊ້ສ້າງສາວົກໃນຂົງເຂດນັ້ນໃຫ້ເຂັ້ມແຂງ (ກິຈການ 11:25-26). ຄົນທັງຫລາຍໄດ້ເອີ້ນຜູ້ເຊື່ອທັງຫລາຍວ່າ "ຄຣິສຕຽນ" ເປັນເທື່ອທຳອິດທີ່ເມືອງອັນຕີໂອເຂັຽ (ກິຈການ 11:26).

ປະຕູໃໝ່ໄດ້ເປີດອອກສຳລັບຄຣິສຕະຈັກພຣະສັນຍາໃໝ່; ພຣະຄຣິດບໍ່ໄດ້ເປັນພຽງພຣະຜູ້ໂຜດໃຫ້ພົ້ນຂອງຊາວຢິວ ແຕ່ເປັນພຣະຜູ້ໂຜດໃຫ້ພົ້ນຂອງຄົນທັງຫລາຍດ້ວຍ. ຄຣິສຕະຈັກໄດ້ຂຍາຍອອກໄປໃນຖິ່ນຕ່າງໆຜ່ານວຽກງານຂອງນັກສາສນາທູດຜູ້ສຳຄັນສອງທ່ານຄື ໂປໂລ ແລະບາຣະນາບາ (ກິຈການ 13: 1-4).

ພຣະທັມກິຈການໄດ້ບັນທຶກວຽກງານການປະກາດຂອງຄຣິສຕະຈັກພຣະສັນຍາໃໝ່; ພວກເຮົາໄດ້ເຫັນວ່າຊີວິດໄດ້ປ່ຽນແປງເມື່ອມີການສັມຜັດກັບພຣະຄຣິດ. ພວກເຮົາໄດ້ຮັບຣິດເດດອັນຍິ່ງໃຫຍ່ ເພື່ອເຮັດພັນທະກິດອັນຍິ່ງໃຫຍ່ ໂດຍມີພຣະສັນຍາອັນຍິ່ງໃຫຍ່. ພຣະເຈົ້າຊົງສະຖິດຢູ່ກັບພວກເຮົາໃນຂະນະທີ່ພວກເຮົາເປັນພຍານເຣື່ອງຂອງພຣະອົງ.

## <u>ພາກປະຕິບັດ</u>

ຄຣິສຕຽນພຣະສັນຍາໃໝ່ປະກາດທຸກໆມື້, ທຸກໆເວລາ, ແລະກັບທຸກໆຄົນທີ່ເຂົາເຈົ້າພົບເຫັນ. ເໝືອນຄຣິສຕຽນໃນສມັຍແລກ, ພວກເຮົາແບ່ງປັນເຣື່ອງພຣະເຈົ້າແຕ່ລະມື້ໄປ. ໃນຂະນະທີ່ພວກເຮົາອອກໄປ, ພວກເຮົາຮັກຄົນທັງຫລາຍແລະດຳເນີນຊີວິດໃນຂ່າວປະເສີດຕໍ່ໜ້າພວກເຂົາ ເພື່ອໃຫ້ພວກເຂົາມີຄວາມຢາກຈະຮູ້ເຣື່ອງພຣະຄຣິດຜູ້ໄດ້ຊົງປ່ຽນແປງຊີວິດຂອງພວກເຮົາ.

## <u>ຄຳຖາມ:</u>

1. ເມື່ອເບິ່ງກິຈການ 2:46-47 ແລະເບິ່ງການຕັ້ງໝັ້ນຂອງພວກສາວົກແລະຄວາມພົ້ນຂອງຜູ້ເຊື່ອໃໝ່ແຕ່ລະມື້, ພວກເຮົາຈະປະກາດຂ່າວປະເສີດເວລາໃດ?
2. ຄຣິສຕຽນສມັຍທຳອິດໄດ້ຮັບຄວາມເຫັນຊອບຈາກຝູງຊົນທີ່ຢູ່ອ້ອມຮອບພວກເຂົາເຈົ້າວິທີໃດ?
3. ທ່ານໄດ້ປູກຝັງຄວາມສັມພັນກັບຜູ້ທີ່ບໍ່ເຊື່ອແລ້ວບໍ່? ທ່ານຮູ້ຊື່ແລະຄວາມຂາດເຂີນຂອງຄົນຂ້າງບ້ານບໍ່? ທ່ານຈະເສີມສ້າງຄວາມສັມພັນກັບຄົນຂ້າງບ້ານວິທີໃດ?
4. ຖ້າຄຣິສຕະຈັກຂອງທ່ານມີການອອກໄປຮັບໃຊ້ພັນທະກິດຂອງພຣະເຈົ້າແບບລະຍະສັ້ນ, ທ່ານເຄີຍໄປບໍ່?
5. ທ່ານຮູ້ບໍ່ວ່າພຣະເຈົ້າໄດ້ຊົງແຕ່ງຕັ້ງທ່ານໃຫ້ແບ່ງປັນຂ່າວປະເສີດທຸກໆມື້, ກັບທຸກໆຄົນ, ໃນທຸກໆບ່ອນ, ແລະໃນທຸກໆສິ່ງທີ່ທ່ານເຮັດ?
6. ມີໃຜບໍ່ທີ່ທ່ານຄິດວ່າຄວາມຮັກ ແລະພຣະຄຸນຂອງພຣະເຈົ້າຍັງໄປບໍ່ເຖິງ? ພວກເຮົາຈະອອກໄປໃຫ້ເຖິງພວກເຂົາເຈົ້າໄດ້ວິທີໃດ?
7. ພຣະເຈົ້າຊົງສັນຍາວ່າຈະຢູ່ກັບໄພ່ພົນຂອງພຣະອົງເວລາພວກເຂົາສ້າງສາວົກ. ພຣະສັນຍາເຣື່ອງການຊົງຢູ່ນຳ ຈະຊ່ວຍເປັນພະລັງໃຫ້ພວກເຮົາແບ່ງປັນຄວາມເຊື່ອໄດ້ວິທີໃດ?

*ດຣ. ສິດນີ ຄານ*